# ຄູ່ມືພືດສວນ

ຮຽບຮຽງໂດຍ: ສົມດີ ອຸດົມສັກ ແລະ ຄຳພາດ ທອງຈັນ
ກວດແກ້ໂດຍ: ສິດ ນິຕະພອນ ແລະ ແວວ ດາລາວົງ
ອອກແບບ ແລະ ແຕ້ມຮູບໂດຍ: ກົງເງິນ ແສງດີ



ສວນພຶກສາຊາດຜາຕັດແກ້ - ຫຼວງພຣະບາງ - 2016

# ຄູ່ມືພືດສວນ

*ຮຽບຮຽງໂດຍ: ສົມດີ ອຸດົມສັກ ແລະ ຄໍາພາດ ທອງຈັນ*
*ກວດແກ້ໂດຍ: ສິດ ບົຕະພອນ ແລະ ແວວ ດາລາວົງ*
*ອອກແບບ ແລະ ແຕ້ມຮູບໂດຍ: ກົງເງິນ ແສງດີ*



ສວນພຶກສາຊາດຜາຕັດແກ້ - ຫຼວງພຣະບາງ - 2016

ສາລະບານ


3. ຄຳນຳ

4. ດິນ
9. ນ້ຳ
10. ແສງແດດ

11. ພືກສາຊາດພື້ນຖານ
13. ການຈະເລີນເຕີບໂຕຂອງພືດ
15. ລັກສະນະສັນຖານວິທະຍາຂອງໃບ
17. ລັກສະນະທາງກາຍະວິພາກຂອງດອກໄມ້
19. ລັກສະນະທາງກາຍະວິພາກຂອງໝາກໄມ້
21. ລັກສະນະທາງກາຍະວິພາກຂອງແກ່ນ

22. ການຂະຫຍາຍພັນພືດ
30. ການປູກພືດ
38. ການບົວລະບັດຮັກສາ
39. ລາຍການກວດກາສວນປະຈຳວັນ
41. ຝຸ່ນບົ່ມ ແລະ ການຄຸມດິນ

44. ແມງໄມ້
44. ສັດຕູພືດທົ່ວໄປ
48. ແມງໄມ້ທີ່ມີປະໂຫຍດ
50. ພະຍາດ
51. ຢາປາບສັດຕູພືດຈາກທຳມະຊາດ
52. ການປູກພືດປະສົມປະສານ ແລະ ພືດໝູນວຽນ
54. ການເກັບກ່ຽວຜົນຜະລິດ

55. ການສ້າງສວນກ້າເບ້ຍໄມ້
58. ການຈັດລຽນຕຳແໜ່ງເບ້ຍໄມ້ພາຍໃນສວນກ້າ

# ຄຳນຳ

ປຶ້ມຄູ່ມືການປູກພືດເຫຼັ້ມນີ້ຂຽນຂຶ້ນໂດຍພະນັກງານຈາກສວນພຶກສາຊາດຜາຕັດແກ້ ທີ່ຫຼວງພະບາງ. ຈຸດປະສົງໃນການຂຽນຄູ່ມືເຫຼັ້ມນີ້ ແມ່ນເພື່ອເອື້ອອຳນວຍຄວາມສະດວກໃຫ້ແກ່ບັນດານັກຮຽນນັກສຶກສາ, ຄູອາຈານ ແລະ ຜູ້ທີ່ມັກຮັກໃນການເຮັດສວນຕ່າງໆ. ພວກເຮົາຈະອະທິບາຍຂັ້ນຕອນພື້ນຖານງ່າຍໆທີ່ຄວນຮູ້ກ່ຽວກັບພືດເຊັ່ນວ່າ: ວິທີການປູກ, ບົວລະບັດຮັກສາ ແລະ ສະພາບແວດລ້ອມແບບໃດທີ່ພວກມັນສາມາດຈະເລີນເຕີບໂຕໄດ້ ເພາະວ່າໃນທຳມະຊາດທຸກຢ່າງແມ່ນເຊື່ອມໂຍງກັນໝົດ. ການເຮັດຝຸ່ນບົ່ມຊີວະພາບສາມາດເຮັດໄດ້ແບບງ່າຍດາຍ ໂດຍການນຳເອົາສິ່ງເສດເຫຼືອຈາກເຮືອນຄົວຂອງທ່ານ ຫຼື ວ່າຈະເປັນເສດພືດຈາກສວນກໍ່ໄດ້ມັນເປັນວິທີທີ່ງ່າຍ, ຖືກ ແລະ ຍັງເປັນວິທີແບບທຳມະຊາດ ໃນການໃຫ້ສານອາຫານແກ່ພືດ ແລະ ຍັງເຮັດໃຫ້ພືດແຂງແຮງດີອີກດ້ວຍ. ການປູກພືດແບບປະສົມປະສານກັນມັນອາດເຮັດໃຫ້ພວກມັນຈະເລີນເຕີບໂຕດີຂຶ້ນກວ່າເກົ່າ, ແມງໄມ້ບາງຊະນິດສາມາດເຮັດໃຫ້ພືດມີສຸຂະພາບແຂງແຮງ ແລະ ແນ່ນອນພືດສ່ວນໃຫຍ່ຕ້ອງການຜູ້ທີ່ມາປະສົມເກສອນໃຫ້ເຊັ່ນວ່າ: ແມງເຜິ້ງ, ແມງກະເບື້ອ ແລະ ອື່ນໆໃນການສືບພັນຂອງພວກມັນເປັນຕົ້ນ.

ທ່ານຍັງສາມາດນຳໃຊ້ຄູ່ມືເຫຼັ້ມນີ້ເຂົ້າໃນການປູກໄມ້ດອກ, ໄມ້ປະດັບ ຫຼື ພືດຜັກຕ່າງໆເພື່ອຕົວທ່ານເອງ ຫຼື ຈະສ້າງເປັນສວນກ້າເພື່ອການຂະຫຍາຍພັນພືດ ແລະ ສົ່ງຂາຍຕາມທ້ອງຕະຫຼາດຕ່າງໆກໍ່ໄດ້. ພວກເຮົາຫວັງຢ່າງຍິ່ງວ່າທ່ານຈະມ່ວນຊື່ນກັບການອ່ານ ແລະ ການເຮັດສວນຂອງທ່ານ.



# ດິນ

ດິນແມ່ນເກີດຈາກການຜຸພັງຂອງຫີນຕ່າງໆໂດຍໃຊ້ໄລຍະເວລາຍາວນານຫຼາຍປີ ເຊິ່ງຫີນທີ່ຜຸພັງເຫຼົ່ານີ້ມີຫຼາຍຂະໜາດ. ເມື່ອປະສົມເຂົ້າກັບຊາກພືດ, ຊາກສັດ, ນໍ້າ ແລະ ອາກາດກໍ່ຈະກາຍເປັນເນື້ອດິນ.

**ຄວາມສໍາຄັນຂອງດິນຕໍ່ພືດ:**
ດິນເຮັດໜ້າທີ່ເປັນສິ່ງຄໍ້າຈູນ ແລະ ຍຶດຈັບຮາກຂອງພືດ, ເປັນແຫຼ່ງໃຫ້ຄວາມຊຸ່ມຊື່ນ ຫຼື ແຫຼ່ງນໍ້າ, ໃຫ້ອາກາດເພື່ອຫາຍໃຈແກ່ຮາກພືດ, ໃຫ້ແຮ່ທາດອາຫານຕ່າງໆທີ່ຈໍາເປັນຕໍ່ການຈະເລີນເຕີບໂຕເຊັ່ນ: ໄນໂຕຣເຈນ, ຟົດສະຟໍ, ໂພແຕັດຊຽມ ແລະ ທາດອື່ນໆ.

**ປະເພດຂອງດິນ:**
ດິນມີ 3 ປະເພດໃຫຍ່ໆຄື: ດິນໜຽວ, ດິນຊາຍ ແລະ ດິນຕົມ.

## ດິນໜຽວ:
ປະກອບດ້ວຍດິນໜຽວ 60%, ຊາຍ 20% ແລະ ຊາຍແປ້ງ 20%. ມີເນື້ອດິນທີ່ລະອຽດຫຼາຍ ແລະ ເມື່ອປະສົມກັບນໍ້າຈະມີຄວາມໜຽວ ຈົນສາມາດປັ້ນເປັນກ້ອນ ຫຼື ເສັ້ນຍາວໄດ້. ເປັນດິນທີ່ອູ້ມນໍ້າໄດ້ດີ, ມີຄວາມສາມາດໃນການຍຶດຈັບ ແລະ ແລກປ່ຽນທາດອາຫານຂອງພືດໄດ້ປະລິມານສູງ, ດັ່ງນັ້ນຈຶ່ງເໝາະສົມສໍາລັບການປູກເຂົ້າ ຫຼື ພືດທີ່ມັກດິນຊຸ່ມຊື່ນສູງເພາະສາມາດເກັບນໍ້າໄວ້ໄດ້ດີນ.

## ດິນຊາຍ:
ປະກອບດ້ວຍຊາຍ 80%, ຊາຍແປ້ງ 10% ແລະ ດິນໜຽວ 10%. ເປັນດິນທີ່ມີຄວາມສາມາດໃນການລະບາຍນໍ້າ ແລະ ອາກາດໄດ້ດີ, ເຮັດໃຫ້ບໍ່ສາມາດກັກເກັບນໍ້າໄດ້ດີ, ມີຄວາມອຸດົມສົມບູນຕໍ່າ. ເຊິ່ງພືດທີ່ນິຍົມປູກໃນດິນປະເພດນີ້ສ່ວນໃຫຍ່ເປັນພືດບໍ່ມັກນໍ້າຫຼາຍເຊັ່ນ: ຖົ່ວດິນ, ມັນດ້າງ ແລະ ອື່ນໆ.

## ດິນຕົມ:
ປະກອບດ້ວຍ ຊາຍ 40%, ຊາຍແປ້ງ 40% ແລະ ດິນໜຽວ 20%. ເປັນດິນປະເພດທີ່ມີເນື້ອຂ້ອນຂ້າງລະອຽດ ແລະ ເມື່ອສໍາຜັດຈະໜຽວນຸ່ມໆຕິດມື, ມີການລະບາຍນໍ້າໄດ້ປານກາງ ຖືໄດ້ວ່າຈັດເປັນດິນທີ່ເໝາະສົມກັບການເພາະປູກທີ່ສຸດ ເຊິ່ງສ່ວນໃຫຍ່ແມ່ນພົບດິນປະເພດນີ້ຕາມແຄມແມ່ນໍ້າຕ່າງໆ ແລະ ປະຊາຊົນກໍ່ນິຍົມນໍາໃຊ້ເຂົ້າໃນການປູກພືດຜັກຕ່າງໆເຊັ່ນ: ຜັກກາດ, ຜັກບົ້ງ, ມັນຝຣັ່ງ, ຫົວກະລໍ່າ ແລະ ອື່ນໆ.

## ຊັ້ນດິນ:
ນັກທໍລະນີວິທະຍາໄດ້ກໍານົດຊັ້ນດິນ ໂດຍໃຊ້ລັກສະນະທາງກາຍຍະພາບອອກເປັນ 5 ຊັ້ນຄື:
ກ. ຊັ້ນໂອ(O) ເປັນຊັ້ນດິນເທິງສຸດມັກມີສີດໍາ ປະກອບດ້ວຍອິນຊີວັດຖຸຫຼາຍ ຫຼື ຮິວມັສ, ເຊິ່ງເປັນຊາກພືດ, ຊາກສັດເຮັດໃຫ້ເປັນຊັ້ນດິນທີ່ມີຄວາມອຸດົມສົມບູນທີ່ສຸດ ມີສິ່ງທີ່ມີຊີວິດອາໄສຢູ່ຫຼາຍໃນຊັ້ນນີ້ເຊັ່ນ: ຂີ້ກະເດືອນ, ຕົວອ່ອນຂອງແມງໄມ້ ແລະ ອື່ນໆ. ດິນຊັ້ນນີ້ ສ່ວນໃຫຍ່ພົບໃນພື້ນທີ່ປ່າທໍາມະຊາດ.
ຂ. ຊັ້ນເອ(A) ເປັນດິນຊັ້ນເທິງເປັນຊັ້ນທີ່ມີນໍ້າຊຶມຜ່ານຫຼາຍທີ່ສຸດ, ດິນຊັ້ນເອສ່ວນໃຫຍ່ປະກອບດ້ວຍແຮ່ ແລະ ອິນຊີວັດຖຸທີ່ຍ່ອຍສະຫຼາຍສົມບູນແລ້ວເຮັດໃຫ້ດິນມີສີເຂັ້ມ. ໃນພື້ນທີ່ກະສິກໍາດິນຊັ້ນເອມີການຖືກໄຖພວນດິນ, ມີການປັບປຸງ ຫຼື ປະສົມກັບອິນຊີວັດຖຸ ແລະ ປຸ໋ຍເຄມີຕ່າງໆໃນການຜະລິດ. ໂດຍປົກກະຕິໂຄງສ້າງຂອງດິນຊັ້ນເອຈະເປັນກ້ອນກົມໆ ແຕ່ຖ້າດິນເກີດມີການອັດແໜ້ນໂຄງສ້າງຂອງດິນຊັ້ນນີ້ກໍ່ຈະກາຍເປັນແຜ່ນ.

ຄ. ຊັ້ນບີ(B) ເປັນດິນຊັ້ນລຸ່ມເນື້ອດິນ ແລະ ໂຄງສ້າງເປັນແບບກ້ອນສີ່ຫລ່ຽມ ຫຼື ເປັນແທ່ງ, ເຊິ່ງເກີດຈາກການຊະລ້າງແຮ່ທາດຕ່າງໆຜ່ານຊັ້ນເອ ລົງມາສະສົມໃນຊັ້ນບີໃນເຂດອາກາດຮ້ອນຊຸ່ມດິນຊັ້ນນີ້ສ່ວນໃຫຍ່ຈະມີສີນ້ຳຕານແດງເນື່ອງຈາກການສະສົມຂອງທາດເຫຼັກ.

ງ. ຊັ້ນຊີ(C) ເກີດຈາກການຜຸພັງຂອງຫີນກຳເນີດດິນ ໃນຊັ້ນນີ້ຈະບໍ່ມີການຕົກຕະກອນຂອງວັດຖຸຈາກການເຊາະລ້າງ ແລະ ບໍ່ມີການສະສົມຂອງອິນຊີວັດຖຸ.

ຈ. ຊັ້ນອາ(R) ເປັນຊັ້ນຂອງວັດຖຸຕົ້ນກຳເນີດດິນ ຫຼື ຫີນດານເປັນຊັ້ນດິນທີ່ມີແຕ່ຫີນແຂງຮຽງຕິວກັນແໜ້ນເຮັດໃຫ້ບໍ່ມີການສະສົມຂອງແຮ່ທາດ ແລະ ບໍ່ມີການຊຶມຜ່ານຂອງນ້ຳໄດ້.



**ສາເຫດການເຊາະເຈື່ອນ ແລະ ຊຸດໂຊມຂອງດິນ**

ກ. ການເຊາະເຈື່ອນຂອງດິນດ້ວຍນ້ຳ ເມື່ອຝົນຕົກເຮັດໃຫ້ນ້ຳມີປະລິມານຫຼາຍຕົກກະທົບໃສ່ໜ້າດິນໂດຍກົງ ເຮັດໃຫ້ເກີດມີການເຊາະໜ້າດິນໃຫ້ລອຍໄປກັບນ້ຳເຊິ່ງລະດັບຄວາມຮຸນແຮງໃນການເຊາະລ້າງຈະກິນພື້ນທີ່ກວ້າງ ຫຼື ໜ້ອຍຫຼາຍເທົ່າໃດແມ່ນຂຶ້ນກັບລະດັບຄວາມຮຸນແຮງຂອງຝົນ ແລະ ປະລິມານພືດທີ່ປົກຄຸມໜ້າດິນ.



ຂ. ການຕັດໄມ້ທຳລາຍປ່າ, ການເຜົາປ່າເພື່ອທຳການຜະລິດເຮັດໃຫ້ໜ້າດິນເປີດ ແລະ ຖືກເຊາະລ້າງໂດຍນ້ຳ ແລະ ລົມ, ເມື່ອຝົນຕົກແຮງນ້ຳຈະເຊາະລ້າງເອົາດິນທີ່ອຸດົມສົມບູນໄປກັບນ້ຳເຮັດໃຫ້ດິນມີຄຸນນະພາບຊຸດໂຊມລົງ.
ຄ. ການປູກພືດ, ການກະກຽມດິນ ແລະ ປູກພືດທີ່ບໍ່ຖືກວິທີ ຈະກໍ່ໃຫ້ເກີດຄວາມເສຍຫາຍກັບດິນຫຼາຍຢ່າງເຊັ່ນ: ໄຖພວນດິນໃນຂະນະທີ່ດິນແຫ້ງເຮັດໃຫ້ດິນທີ່ອຸດົມສົມບູນປິວລອຍໄປຕາມລົມ, ການປູກພືດບາງຊະນິດທີ່ເຮັດໃຫ້ດິນເສຍຄວາມອຸດົມສົມບູນເຊັ່ນ: ຢາງພາລາ, ໄມ້ວິກ...ການເຜົາປ່າ ຫຼື ການເຜົາຕໍເຟືອງຈະເຮັດໃຫ້ຮິວມັດໃນດິນເຊື່ອມສະພາບກໍ່ໃຫ້ເກີດຜົນເສຍໃນດິນ, ການໃຊ້ປຸ໋ຍເຄມີ ແລະ ຢາຂ້າແມງໄມ້ຈະທຳລາຍຈຸລິນຊີ ແລະ ໂຄງສ້າງຂອງດິນເຮັດໃຫ້ດິນຊຸດໂຊມ ແລະ ອາດບໍ່ສາມາດນຳໃຊ້ໃນການເພາະປູກໄດ້ອີກເລີຍ.



**ການອະນຸລັກດິນ**

ກ. ການນໍາໃຊ້ທີ່ດິນຢ່າງຖືກຕ້ອງ ແລະ ເໝາະສົມກໍ່ຄືການປູກພືດທີ່ຄໍານຶງເຖິງຊະນິດພັນທີ່ເໝາະສົມກັບສະພາບດິນ, ການປູກພືດ ແລະ ໄຖພວນດິນຕາມລະດັບຄວາມຄ້ອຍຊັນຂອງດິນເພື່ອປ້ອງກັນການເຊາະລ້າງໜ້າດິນ.

ຂ. ການບໍາລຸງດິນ ຄືການເພີ່ມທາດອາຫານໃຫ້ແກ່ດິນເຊັ່ນ: ນໍ້າສະກັດຊີວະພາບ, ຝຸ່ນບົ່ມ, ຝຸ່ນຄອກ, ການປູກພືດຕະກຸນຖົ່ວ ແລະ ອື່ນໆ.

ຄ. ການປ້ອງກັນການຊຸດໂຊມຂອງດິນ ຄືການປູກພືດຄຸມດິນ, ການປູກພືດໝູນວຽນ, ການປູກພືດບັງລົມ, ການໄຖພວນຕາມລະດັບຄວາມຄ້ອຍຊັນຂອງພື້ນດິນ, ການເຮັດຄັນຄູດິນປ້ອງກັນການໄຫຼ ແລະ ການເຊາະລ້າງໜ້າດິນ, ລວມເຖິງການບໍ່ເຜົາປ່າ ຫຼື ເຮັດໄຮ່ເລື່ອນລອຍ.

ງ. ການໃຫ້ຄວາມຊຸ່ມຊື່ນແກ່ດິນ ຄືການລະບາຍນໍ້າອອກຈາກພື້ນທີ່ດິນທີ່ມີນໍ້າຖ້ວມຂັງ, ການຈັດການນໍ້າເຂົ້າສູ່ພື້ນທີ່ດິນທີ່ແຫ້ງແລ້ງ ແລະ ການໃຊ້ພືດ ຫຼື ວັດສະດຸເຊັ່ນ: ຫຍ້າ, ເຟືອງເຂົ້າ, ໃບໄມ້ ແລະ ອື່ນໆມາຄຸມດິນ ຈະຊ່ວຍໃຫ້ດິນມີຄວາມຊຸ່ມຊື່ນ ແລະ ມີຄວາມອຸດົມສົມບູນຂຶ້ນ.



# ນ້ຳ

ນ້ຳເປັນສ່ວນປະກອບທີ່ສຳຄັນຂອງສິ່ງທີ່ມີຊີວິດ ພືດມີນ້ຳເປັນສ່ວນປະກອບຫຼັກປະມານ 75-90%. ນ້ຳຈຶ່ງມີບົດບາດໃນການດຳລົງຊີວິດຈົນເຖິງການຈະເລີນເຕີບໂຕຂອງພືດ ເຊິ່ງເລີ່ມຕັ້ງແຕ່ການແຕກງອກຂອງແກ່ນຈົນເຖິງການອອກດອກອອກໝາກຖ້າພືດຂາດນ້ຳຫຼາຍໃນເວລາຍາວນານຈະເຮັດໃຫ້ພືດອາດຕາຍໄດ້. ຄວາມສຳຄັນຂອງນ້ຳຕໍ່ການຈະເລີນເຕີບໂຕຂອງພືດ

ກ. ນ້ຳມີຜົນຕໍ່ຂະບວນການຕ່າງໆໃນການຈະເລີນເຕີບໂຕຂອງພືດ ແມ່ນຕ້ອງການນ້ຳເພື່ອໃຊ້ໃນຂະບວນການຂະຫຍາຍຕົວຂອງຈຸລັງຖ້າພືດຂາດນ້ຳຈຸລັງຈະຂະຫຍາຍຕົວບໍ່ເຕັມທີ່ເຮັດໃຫ້ພາກສ່ວນຕ່າງໆຂອງພືດນ້ອຍ ແລະ ແຄະລົງ.

ຂ. ນ້ຳເປັນປັດໃຈທີ່ສຳຄັນໃນການລຳລຽງອາຫານ, ແຮ່ທາດຕ່າງໆ ນ້ຳເປັນຕົວລະລາຍອາຫານ ແລະ ແຮ່ທາດມັນເປັນຕົວກາງໃນການລຳລຽງແຮ່ທາດໃນດິນ ເມື່ອຮາກພືດດູດແຮ່ທາດເຂົ້າມາໃນລຳຕົ້ນ ນ້ຳຈະເປັນຕົວລຳລຽງຂຶ້ນໄປທີ່ໃບ ເພື່ອເປັນສ່ວນປະກອບໃນຂະບວນການສັງເຄາະແສງ ມາເປັນອາຫານແລ້ວນ້ຳຈະລຳລຽງອາຫານທີ່ໄດ້ອອກໄປລໍ່ລ້ຽງພາກສ່ວນຕ່າງໆຂອງພືດຕໍ່ໄປ.

ຄ. ນ້ຳເປັນຕົວຮັກສາຮູບຮ່າງຂອງຈຸລັງ ແລະ ຕົ້ນພືດ ຈຸລັງທີ່ມີຊີວິດຂອງພືດຈະຕ້ອງເປັນຈຸລັງທີ່ມີນ້ຳບັນຈຸຢູ່ເຕັມຖ້າພາຍໃນຈຸລັງມີນ້ຳບໍ່ເຕັມຈຸລັງກໍ່ຈະແຫ່ວຫາກຕົ້ນໄມ້ແຫ່ວເກີນໄປຫຼາຍກໍ່ຈະເຮັດໃຫ້ຕົ້ນໄມ້ຕາຍໄປໃນທີ່ສຸດ.

ງ. ນ້ຳເປັນປັດໃຈທີ່ສຳຄັນໃນຂະບວນການທາງສະລິລະວິທະຍາ ແລະ ຂະບວນການທາງເຄມີພາຍໃນພືດ ຫຼື ສິ່ງທີ່ມີຊີວິດເຊັ່ນ: ຂະບວນການສັງເຄາະແສງ, ຂະບວນການຫາຍໃຈ, ການດູດແຮ່ທາດອາຫານ, ການສັງເຄາະແສງຕ່າງໆທີ່ໃຊ້ໃນການຈະເລີນເຕີບໂຕ ແລະ ອື່ນໆ. ນອກຈາກນີ້ ນ້ຳຍັງເປັນປັດໃຈທີ່ກ່ຽວຂ້ອງກັບການຄວບຄຸມປະກົດການຈະເລີນເຕີບໂຕດ້ານອື່ນໆເຊັ່ນ: ການແຕກງອກຂອງແກ່ນ, ການພັກຕົວຂອງພືດ ແລະ ການອອກດອກເປັນຕົ້ນ.

## ວົງຈອນຊີວິດຂອງນ້ຳ

ການໝູນວຽນຂອງນ້ຳແມ່ນເລີ່ມຈາກແສງແດດທີ່ສ່ອງລົງມາຍັງໂລກ, ພະລັງງານຈາກແສງແດດນີ້ຈະມີຜົນຕໍ່ການລະເຫີຍອາຍຂອງນ້ຳໃນມະຫາສະໝຸດ, ແມ່ນ້ຳຕ່າງໆ ແລະ ຈາກການຄາຍນ້ຳຂອງພືດ. ອາຍນ້ຳເຫຼົ່ານີ້ຈະລອຍຂຶ້ນສູ່ຊັ້ນບັນຍາກາດ ເມື່ອອາຍນ້ຳຖືກກະທົບກັບຄວາມເຢັນຈະເກີດການຄວບແໜ້ນ ຫຼື ເກີດການລວມຕົວຂອງອາຍນ້ຳກາຍເປັນກ້ອນເມກ, ໃນທີ່ສຸດກໍ່ຈະກັ່ນຕົວກາຍເປັນຝົນລວມເຖິງຫິມະ ແລະ ໝາກເຫັບແລ້ວຕົກລົງມາສູ່ພື້ນດິນກາຍເປັນແມ່ນ້ຳລຳເຊຕ່າງໆ ແລະ ໄຫຼລົງໄປຍັງມະຫາສະໝຸດແລ້ວກໍ່ຈະໝູນວຽນແບບນີ້ໄປເລື້ອຍໆ.



## ແສງແດດ

ແສງແດດເປັນພະລັງງານທີ່ສຳຄັນ ທີ່ກໍ່ໃຫ້ເກີດຂະບວນການສັງເຄາະແສງຂອງພືດສີຂຽວໃນການສ້າງອາຫານຈຳພວກຄາໂບໄຮເດຼດ ເພື່ອນຳໃຊ້ໃນການຈະເລີນເຕີບໂຕ ແລະ ຊ່ວຍສ້ອມແຊມສ່ວນທີ່ອ່ອນແອຂອງພືດອີກດ້ວຍ.

### ຂະບວນການສັງເຄາະແສງ

ການສັງເຄາະແສງເປັນຂະບວນການທີ່ໃຊ້ພະລັງງານຈາກແສງຕາເວັນ. ເປັນຕົວເລັ່ງການເກີດປະຕິກິລິຍາ ພາຍໃນໃບພືດໂດຍຈະປ່ຽນກາສ໌ຄາບອນໄດອ໋ອກໄຊ ແລະ ນ້ຳໃຫ້ກາຍເປັນສານປະກອບປະເພດຄາໂບໄຮເດຼດ ຫຼື ນ້ຳຕານ ກຸຍໂກສ໌ ທີ່ພືດສາມາດນຳໄປລໍ່ລ້ຽງສ່ວນຕ່າງໆຂອງພືດ.



# ພືກສາຊາດພື້ນຖານ

**ລັກສະນະສັນຖານທົ່ວໄປ**

ພືດຕົ້ນໜຶ່ງປະກອບດ້ວຍພາກສ່ວນທີ່ຢູ່ເທິງໜ້າດິນ ແລະ ພາກສ່ວນທີ່ຢູ່ຊັ້ນໃຕ້ດິນ.




ສ່ວນທີ່ຢູ່ເທິງໜ້າດິນຂອງພືດແມ່ນລຳຕົ້ນ, ເຊິ່ງມັນເຮັດໜ້າທີ່ປະຄັບປະຄອງລຳຕົ້ນ, ດອກໄມ້, ໃບ ແລະ ສ່ວນອື່ນໆ ຢູ່ໃນໃບຂອງພືດມີສານສີຂຽວ ທີ່ເຮັດໜ້າທີ່ດູດເອົາພະລັງງານແສງຕາເວັນ, ຖ້າບໍ່ມີສິ່ງດັ່ງກ່າວຕົ້ນພືດກໍ່ບໍ່ສາມາດຈະເລີນເຕີບໂຕໄດ້. ໃນຂະນະທີ່ພືດຍັງມີຊີວິດຢູ່ມັນຈະປ່ອຍກາສອອກມາເຊິ່ງເປັນກາສອົກຊີແຊນທີ່ພວກເຮົາຫາຍໃຈເອົາ ແລະ ດູດເອົາກາສຊະນິດອື່ນເຂົ້າໄປແທນ. ການສັບປ່ຽນນີ້ເກີດຂຶ້ນຢູ່ໃນໃບຂອງພືດ. ດອກໄມ້ແມ່ນອະໄວຍະອະສືບພັນຂອງພືດເຊິ່ງມັນຈະມີທັງອະໄວຍະອະເພດຜູ້ ແລະ ເພດແມ່. ບາງທີດອກໄມ້ກໍ່ປ່ຽນຮູບເປັນໝາກໄມ້ທີ່ມີແກ່ນ. ສຳລັບສ່ວນທີ່ຢູ່ຊັ້ນໃຕ້ດິນ, ຮາກເຮັດໃຫ້ພືດຄົງທີ່ຢູ່ໃນດິນ ແລະ ໜ້າທີ່ໂດຍພື້ນຖານຂອງມັນແມ່ນຮັບເອົານ້ຳ ແລະ ສານອາຫານທີ່ຈຳເປັນຈາກດິນ ເພື່ອໃຫ້ຕົ້ນໄມ້ຈະເລີນເຕີບໂຕ. ຮາກປະກອບດ້ວຍສອງໂຄງສ້າງຄື:

ກ. ຮາກແກ້ວແມ່ນມີຢູ່ໜຶ່ງ ຫຼື ສອງຮາກຫຼັກ ເຊິ່ງຈະມີສະເພາະພືດໃບລ້ຽງຄູ່ເທົ່ານັ້ນ. ຮາກຊະນິດນີ້ຈະຊ່ວຍໃຫ້ພືດໄດ້ຮັບນ້ຳຈາກຊັ້ນດິນທີ່ເລິກລົງໄປ.

ຂ. ຮາກຝອຍ ແມ່ນຖືກສ້າງຂຶ້ນຈາກຮາກບາງໆປະລິມານຫຼາຍທີ່ເກີດຂຶ້ນຢູ່ເທິງໜ້າດິນ. ໂດຍປົກກະຕິແລ້ວສ່ວນລຳຕົ້ນຈະຢູ່ເທິງໜ້າດິນ, ແຕ່ວ່າມັນຍັງມີສ່ວນເສີມຕໍ່ກັນຢູ່ຊັ້ນໃຕ້ດິນ ເຊັ່ນ: ສ່ວນເຫງົ້າ (ແນວນອນ) ຫຼື ສ່ວນຫົວ (ແນວຕັ້ງ), ເຊິ່ງສ່ວນດັ່ງກ່າວເຮັດໃຫ້ລຳຕົ້ນທີ່ຢູ່ເທິງໜ້າດິນຈະເລີນເຕີບໂຕຂຶ້ນ.

ຫົວ







ເຫງົ້າ




ຫົວ

ພືດສາມາດເກັບສະສົມສານອາຫານສຳຮອງໄວ້ຢູ່ໃນຮາກຂອງພວກມັນ. ຫົວກາລົດສາມາດເກັບສະສົມສານອາຫານສຳຮອງໄວ້ຢູ່ໃນຮາກແກ້ວຂອງມັນ ໃນຂະນະທີ່ຕົ້ນມັນຝຣັ່ງເກັບສະສົມໄວ້ຢູ່ໃນອະໄວຍະວະສະເພາະທີ່ເອີ້ນວ່າ: ຫົວຂອງພືດທີ່ຢູ່ໃຕ້ດິນ, ສານອາຫານສຳຮອງເຫຼົ່ານີ້ຊ່ວຍໃຫ້ຕົ້ນພືດຍັງຄົງມີຊີວິດຢູ່ໃນຊ່ວງທີ່ປະເຊີນກັບລະດູການບໍ່ດີ (ລະດູແລ້ງ ຫຼື ລະດູໜາວ).

ເນື່ອງຈາກວ່າຮາກຝອຍບໍ່ໄດ້ຂະຫຍາຍຕົວເລິກລົງໄປໃນພື້ນດິນ ແຕ່ວ່າມັນກະຈາຍຢ່າງໜາແໜ້ນຢູ່ໃກ້ໜ້າດິນ, ພືດທີ່ມີຮາກຝອຍແມ່ນເປັນສິ່ງທີ່ດີໃນການປົກຄຸມເອົາພື້ນທີ່ທີ່ກວ້າງຂວາງ ແລະ ປ້ອງກັນດິນຈາກການເຊາະເຈື່ອນ. ເຖິງຢ່າງໃດກໍຕາມ, ພືດທີ່ມີຮາກຝອຍມີຄວາມອ່ອນໄຫວຕໍ່ການຂາດປະລິມານນ້ຳຝົນຫຼາຍ ເນື່ອງຈາກວ່າຮາກດັ່ງກ່າວບໍ່ສາມາດຮັບນ້ຳຈາກຊັ້ນດິນທີ່ເລິກໄດ້.

ພືດບາງຊະນິດສາມາດຈະເລີນເຕີບໂຕໄດ້ທັງຮາກຝອຍ ແລະ ຮາກແກ້ວ. ເຊິ່ງມັນຈະເກີດມີຮາກແກ້ວຖ້າວ່າຊັ້ນເທິງສຸດຂອງດິນແຫ້ງ, ເພື່ອໃຫ້ໄດ້ຮັບນ້ຳຈາກຊັ້ນດິນທີ່ເລິກກວ່າໄດ້. ຮາກຝອຍຈະມີການຈະເລີນເຕີບໂຕໄດ້ດີຖ້າຊັ້ນເທິງຂອງດິນມີນ້ຳ ແລະ ສານອາຫານໃຫ້ພຽງພໍກັບພືດ.

## ການຈະເລີນເຕີບໂຕຂອງພືດ

ການຈະເລີນເຕີບໂຕຂອງພືດຖືກແບ່ງອອກເປັນສອງແບບຄື: ການຈະເລີນເຕີບໂຕຂັ້ນໜຶ່ງ ແລະ ການຈະເລີນເຕີບໂຕຂັ້ນສອງ.

ການຈະເລີນເຕີບໂຕຂັ້ນໜຶ່ງ: ແມ່ນຜ່ານການຂະຫຍາຍຕົວແບບຍືດອອກຂອງຮາກ ແລະ ໜໍ່, ລວມໄປເຖິງການສ້າງອະໄວຍະວະໃໝ່ໆເຊັ່ນ: ໃບ ຫຼື ດອກ.

ການຈະເລີນເຕີບໂຕຂັ້ນສອງ: ແມ່ນການສ້າງໃຫ້ລຳຕົ້ນໜາແໜ້ນຂຶ້ນ ແລະ ເຮັດໜ້າທີ່ໃນການຈະເລີນເຕີບໂຕຂອງວົງຮອບປີທີ່ສາມາດແນມເຫັນພາຍໃນຕົ້ນໄມ້. ໂດຍສ່ວນໃຫຍ່ແລ້ວຫຍ້າ ຫຼື ພືດໃບລ້ຽງດ່ຽວຈະບໍ່ມີການຈະເລີນເຕີບໂຕຂັ້ນສອງ.




ພືດສາມາດສ້າງຍອດ, ດອກ ແລະ ໃບໃໝ່ຂຶ້ນໄດ້. ໂດຍສ້າງຂຶ້ນຈາກໜໍ່ໃບອ່ອນ, ເຊິ່ງມີຖານທີ່ຕັ້ງຢູ່ໃບ ຫຼື ຈຸດສູງສຸດຂອງຍອດ. ປົກກະຕິແລ້ວໜໍ່ໃບອ່ອນເຫຼົ່ານັ້ນຈະບໍ່ເຄື່ອນໄຫວ, ແຕ່ເມື່ອພືດຕ້ອງການມັນຈະສ້າງຍອດ, ໃບ ຫຼື ດອກໃໝ່ຂຶ້ນມາ. ສິ່ງນີ້ອະທິບາຍໄດ້ວ່າ ຍ້ອນຫຍັງພືດຈຶ່ງສາມາດສ້າງຍອດໃໝ່ຂຶ້ນມາໄດ້ເມື່ອໜໍ່ໃບອ່ອນສ່ວນປາຍຖືກກຳຈັດອອກ (ຖືກຕັດ, ຖືກເລັມອອກ ຫຼື ໄດ້ຮັບຄວາມເສຍຫາຍຈາກອັນໃດອັນໜຶ່ງ). ການພັກໂຕຂອງໜໍ່ໃບອ່ອນເຫຼົ່ານີ້ ມີຄວາມສຳຄັນຢ່າງຍິ່ງໃນການເພາະປູກ ເນື່ອງຈາກວ່າພວກມັນເປັນອົງປະກອບສຳຄັນທີ່ຊ່ວຍໃນການຕັດ ຫຼື ການຕອນກິ່ງເພື່ອຂະຫຍາຍພັນ ມັນເປັນສິ່ງສຳຄັນໃນການເບິ່ງແຍງຕົ້ນອ່ອນດ້ວຍຄວາມລະມັດລະວັງ ແລະ ປ້ອງກັນຈາກສັດກິນພືດເພື່ອໃຫ້ໜໍ່ໃບອ່ອນຂອງມັນບໍ່ຖືກທຳລາຍ.




**ປີທີໜຶ່ງ** **ປີທີສອງ**

ຖ້າຫາກວ່າໜ່ໃບອ່ອນກາຍເປັນຍອດໃໝ່, ຍອດໃໝ່ອັນນີ້ຈະຂະຫຍາຍໜ່ໃບອ່ອນອັນໃໝ່ຂຶ້ນມາ ເຊິ່ງມັນຈະສາມາດສ້າງຍອດ, ດອກ ຫຼື ໃບໃໝ່ຂຶ້ນມາໄດ້. ດອກຈະບໍ່ຮັກສາໜ່ໃບອ່ອນໄວ້, ເພາະໜ່ໃບອ່ອນຖືກປ່ຽນຮູບຮ່າງເປັນດອກໄມ້, ເຊິ່ງນີ້ໝາຍຄວາມວ່າພືດໄດ້ສູນເສຍໜ່ໃບອ່ອນໄປແລ້ວ. ນີ້ເປັນເຫດຜົນທີ່ພືດບາງຊະນິດມີໜ່ໃບອ່ອນປີໜຶ່ງຄັ້ງດຽວ ເພາະວ່າໜ່ໃບອ່ອນທັງໝົດຂອງມັນຈະສ້າງດອກໄມ້ຂຶ້ນມາ, ສະນັ້ນ ພືດຈະບໍ່ມີໜ່ໃບອ່ອນເຫຼືອໄວ້ເພື່ອສ້າງຍອດ ຫຼື ດອກໃໝ່ຂຶ້ນໄດ້.

ຮູບພາບຂ້າງເທິງນີ້ສະແດງໃຫ້ເຫັນທາງເລືອກຂອງພືດ ໃນລະຫວ່າງການຈະເລີນເຕີບໂຕໃນປີທຳອິດ, ພືດຕົ້ນນີ້ມີໃບໄມ້ 5 ໃບ, ມີໜ່ໃບອ່ອນທີ່ບໍ່ເຄື່ອນໄຫວ 5 ໜ່ (ຢູ່ທີ່ຖານຂອງໃບ) ແລະ ມີໜ່ໃບອ່ອນສ່ວນປາຍໜຶ່ງໜ່. ໃນປີຕໍ່ມາໜ່ໃບອ່ອນອັນໜຶ່ງໄດ້ປ່ຽນເປັນດອກໄມ້, ສອງໜ່ໄດ້ປ່ຽນເປັນຍອດໃໝ່ ແລະ ໜ່ໃບອ່ອນສ່ວນປາຍຈະຍັງຄົງດຳເນີນການຂະຫຍາຍຕົວໃຫ້ກັບລຳຕົ້ນຫຼັກເພື່ອສ້າງໃບ ແລະ ໜ່ໃບອ່ອນສອງໜ່ໃໝ່ຂຶ້ນມາ.

## ລັກສະນະສັນຖານວິທະຍາຂອງໃບ




ໃບດ່ຽວ

ໃບປະສົມ



ໃບແບບນິ້ວມື





ມັນອາດຈະຊັບຊ້ອນທີ່ຈະຈຳແນກຄວາມແຕກຕ່າງລະຫວ່າງໃບປະສົມ ແລະ ໃບດ່ຽວ. ແຕ່ທ່ານສາມາດຮູ້ໄດ້ວ່າມັນເປັນໃບປະສົມ ຫຼື ບໍ່ນັ້ນແມ່ນເບິ່ງຢູ່ໜໍ່ໃບອ່ອນ. ໃບປະສົມຈະບໍ່ມີໜໍ່ໃບອ່ອນ ໃນຂະນະທີ່ລຳຕົ້ນແມ່ນມີທັງໜໍ່ໃບອ່ອນສ່ວນປາຍ ແລະ ໜໍ່ໃບອ່ອນທີ່ຢູ່ຕາມງ່າມໄມ້. ດັ່ງນັ້ນ, ກ້ານຂອງໃບປະສົມມັກຈະມີສີແຕກຕ່າງຈາກລຳຕົ້ນ.




ໃນພາກສ່ວນທາງກາຍະວິພາກຂອງໃບແມ່ນມີການຜັນແປສູງຄື:

- ລາຍເສັ້ນຂອງໃບໄມ້
- ຍອດໃບ
- ຂອບໃບ
- ຖານໃບ
- ຂົນຂອງໃບ
- ແລະ ອື່ນໆ

ຄຸນລັກສະນະເຫຼົ່ານີ້ຈະມີປະໂຫຍດໃນເວລາທີ່ຄົນປູກຕ້ອງການທີ່ຈະລະບຸພັນຂອງພືດແຕ່ລະຊະນິດ. ສີຂອງໃບໄມ້ພືດສວນ ຖືກເລືອກໃຫ້ເປັນພືດສ່ວນໜຶ່ງໃນຈຳພວກພືດທີ່ມີລັກສະນະສວຍງາມ. ບາງຄັ້ງພືດທີ່ໃຊ້ປະດັບປະດາກໍ່ມີພຽງໃບ ຫຼື ດອກ ທີ່ມີຫຼາຍກວ່າໜຶ່ງສີ ໃນຮູບແບບເປັນດ່າງ, ເປັນລາຍເສັ້ນ ແລະ ອື່ນໆ, ເຊິ່ງເອີ້ນວ່າຄວາມຫຼາກຫຼາຍສີສັນຂອງພືດ. ຄວາມຫຼາກຫຼາຍສີສັນຂອງພືດແມ່ນມາຈາກຫຼາຍສາເຫດ. ສິ່ງທຳອິດແມ່ນຍ້ອນອະໄວຍະວະຂອງພືດເປັນໂຣກຈາກການຕິດເຊື້ອໄວຣັສ, ການຂາດສານອາຫານ ຫຼື ຄວາມເສຍຫາຍທີ່ເກີດຈາກນ້ຳ ແລະ ແສງ. ບາງຄັ້ງເຊື້ອໄວຣັສອາດຈະເຮັດໃຫ້ອະໄວຍະວະຂອງພືດມີຫຼາຍສີ ແຕ່ວ່າບໍ່ມີຜົນກະທົບທີ່ເປັນອັນຕະລາຍ ສີພວກມັນຈະແຜ່ກະຈາຍອອກໂດຍຜ່ານການຕັດຕໍ່ກິ່ງ. ສາເຫດອື່ນແມ່ນມາຈາກການຜະລິດ ຫຼື ການທຳລາຍທຳມະຊາດຂອງພືດ. ຖ້າຄວາມຫຼາກຫຼາຍສີສັນຂອງພືດເກີດຈາກເຊື້ອໄວຣັສ, ແກ່ນຂອງພືດອາດຈະບໍ່ຜະລິດຕົ້ນກ້າທີ່ມີຫຼາຍສີສັນ. ຄວາມຫຼາຍຫຼາຍສີສັນຂອງພືດອາດຈະຊ່ວຍຫຼຸດຜ່ອນການສູນເສຍນ້ຳຂອງໃບໂດຍການສະທ້ອນແສງ. ນັກວິທະຍາສາດບາງທ່ານແນະນຳວ່າ ໃບທີ່ເປັນດ່າງອາດຈະຊ່ວຍຫຼີກລ້ຽງຈາກແມງໄມ້ທີ່ອັນຕະລາຍເພາະມັນຈະເບິ່ງຄືວ່າຂີ້ຮ້າຍ, ເປັນເຊື້ອໂຣກ ຫຼື ແມ້ກະທັ້ງມີໄຂ່ໜອນປົກຄຸມຢູ່. ສະຫຼຸບແລ້ວ, ດອກໄມ້ບາງຊະນິດທີ່ສະແດງໃຫ້ເຫັນວ່າມີຫຼາຍສີສັນໃນກີບດອກຈະຊ່ວຍໃຫ້ແມງໄມ້ຫາສູນກາງຂອງດອກໄມ້ໄດ້.

## ລັກສະນະທາງກາຍະວິພາກຂອງດອກໄມ້

ດອກໄມ້ແມ່ນປະກອບດ້ວຍອະໄວຍະວະສືບພັນຂອງພືດ ໜ້າທີ່ຂອງມັນແມ່ນເພື່ອຮັບປະກັນການສືບພັນຂອງພືດຕໍ່ໄປ. ໂດຍຈະມີໄຂ່ອ່ອນ ທີ່ບັນຈຸຢູ່ໃນຮັງໄຂ່ (ເກສອນແມ່, ອະໄວຍະວະເພດແມ່) ແລະ ລະອອງເກສອນທີ່ຜະລິດຈາກເກສອນຜູ້, ອະໄວຍະວະເພດຜູ້. ເມື່ອເກີດການປະສົມລະອອງລະຫວ່າງເກສອນຜູ້ ແລະ ເກສອນແມ່, ໄຂ່ອ່ອນດັ່ງກ່າວຈະກາຍເປັນເມັດ ຫຼື ແກ່ນພືດທີ່ບັນຈຸຕົ້ນອ່ອນ ແລະ ເກີດເປັນຕົ້ນພືດໃໝ່.

ໄຂ່ຈະບໍ່ມີການເຄື່ອນຍ້າຍ ແລະ ຕິດຢູ່ກັບຕົ້ນແມ່, ໃນຂະນະທີ່ລະອອງເກສອນຈະຖືກຍ້າຍຈາກເກສອນຜູ້ໄປວາງໃສ່ຍອດເກສອນແມ່, ເວລາທີ່ໄຂ່ຖືກປະສົມພັນ, ຕົ້ນແມ່ຈະຊ່ວຍບໍາລຸງເພື່ອໃຫ້ມັນປ່ຽນຮູບຮ່າງເປັນເມັດພັນພືດ. ຕາມປົກກະຕິແລ້ວ ໃນດອກໄມ້ໜຶ່ງຈະມີຫຼາຍກວ່າໜຶ່ງອະໄວຍະວະເພດຜູ້, ບາງຄັ້ງມີຫຼາຍກວ່າໜຶ່ງອະໄວຍະວະເພດແມ່ ແລະ ບາງຄັ້ງມີໄຂ່ຫຼາຍກວ່າໜຶ່ງໜ່ວຍ.

ໃນບໍລິເວນອະໄວຍະວະເພດ, ດອກສາມາດໃຫ້ກໍາເນີດໄດ້ທັງກີບດອກ ແລະ ກີບລ້ຽງ, ເຊິ່ງກີບລ້ຽງຈະເຮັດໜ້າທີ່ເປັນເປືອກຂອງດອກຂອບນອກສຸດມີຮູບຮ່າງຂົດງໍລົງ, ພ້ອມທັງຍັງມີຊື່ເອີ້ນວ່າ: ຂົ້ວດອກໄມ້, ສ່ວນກີບດອກປະກອບມີກີບໃນຂອງດອກໄມ້, ເຊິ່ງເປັນກີບວົງດ້ານໃນສຸດຂອງດອກ. ສະຫຼຸບແລ້ວ, ພືດບາງຊະນິດກໍ່ບໍ່ສະແດງໃຫ້ເຫັນຄວາມແຕກຕ່າງລະຫວ່າງກີບລ້ຽງ ແລະ ກີບດອກ ເຊັ່ນ: ຈໍາພວກຫຍ້າ. ເພາະສະນັ້ນ ພວກມັນຈຶ່ງຖືກເອີ້ນວ່າ: ກີບລວມ.




ພືດບາງຊະນິດຈະບໍ່ມີທັງອະໄວຍະວະເພດຜູ້ ແລະ ເພດແມ່ຢູ່ໃນດອກດຽວກັນ. ຍິ່ງໄປກວ່ານັ້ນ, ດອກຜູ້ ແລະ ດອກແມ່ອາດຈະຢູ່ຕ່າງຕົ້ນຄື: ມີພຽງຕົ້ນແມ່ທີ່ຈະມີໝາກ. ສິ່ງນີ້ຄວນໄດ້ຮັບການພິຈາລະນາກ່ອນທີ່ຈະປູກຕົ້ນໄມ້ໃໝ່, ເພາະວ່າກ່ອນທີ່ມັນຈະປົ່ງຂຶ້ນມາ ແລະ ອອກດອກຄັ້ງທໍາອິດ ເຮົາບໍ່ສາມາດຮູ້ໄດ້ວ່າເມັດພັນພືດແມ່ນເປັນເພດໃດ. ເຖິງຢ່າງໃດກໍຕາມ, ການຕັດກິ່ງຈະເຮັດໃຫ້ໄດ້ເພດດຽວກັບຕົ້ນທີ່ເຮົາຕັດມາ.
ນອກຈາກນີ້, ບໍ່ຄວນເຂົ້າໃຈຜິດຄິດວ່າຕົ້ນແມ່ ແລະ ຕົ້ນຜູ້ ເປັນພືດສອງສາຍພັນທີ່ແຕກຕ່າງກັນ ຖ້າຫາກວ່າພືດດັ່ງກ່າວສາມາດປະສົມພັນກັນໄດ້ພວກມັນກໍ່ອາດຈະເປັນສາຍພັນດຽວກັນ.

**ຍຸດທະສາດໃນການປະສົມເກສອນ**

ການປະສົມເກສອນເກີດຂຶ້ນເມື່ອລະອອງເກສອນເຄື່ອນຍ້າຍຈາກອະໄວຍະວະເພດຜູ້ໄປຕົກໃສ່ຍອດເກສອນເພດແມ່ຂອງອະໄວຍະວະເພດແມ່. ການປະສົມເກສອນອາດຈະຖືກປະຕິບັດກ່ອນການເຮັດໃຫ້ເກີດໄຂ່ອ່ອນຂຶ້ນ ເຊັ່ນ: ການສ້າງຕົ້ນອ່ອນໂດຍຜ່ານການລວມຕົວກັນຂອງຈຸລັງເກສອນທີ່ມີໄຂ່ອ່ອນ. ສິ່ງທີ່ຊ່ວຍໃນການປະສົມເກສອນຂອງພືດແມ່ນແມງໄມ້ ຫຼື ລົມ, ເຊິ່ງຈະນຳສິ່ງລະອອງເກສອນຈາກອະໄວຍະວະເພດຜູ້ໄປຫາອະໄວຍະວະເພດແມ່. ເພາະສະນັ້ນ, ແມງໄມ້ຈຶ່ງມີບົດບາດສຳຄັນໃນການຜະລິດໝາກ ແລະ ເປັນອົງປະກອບທີ່ສຳຄັນໃນການຜະລິດຜັກ ແລະ ໝາກໄມ້ໃຫ້ໄດ້ຈຳນວນຫຼາຍ.

**ການປະສົມເກສອນມີ 3 ປະເພດຄື:**

ກ. ການປະສົມເກສອນໃນດອກດຽວກັນ ຫຼື ຕົ້ນດຽວກັນ ເກີດຂຶ້ນເມື່ອດອກສາມາດນຳເອົາລະອອງຈາກເກສອນໂຕຜູ້ໄປຫາເກສອນໂຕແມ່ດ້ວຍຕົວມັນເອງ (ເກສອນໂຕຜູ້ປະສົມພັນກັບເກສອນໂຕແມ່). ພືດບາງຊະນິດສາມາດດຳເນີນການປະສົມເກສອນໃນດອກດຽວກັນ ຫຼື ຕົ້ນດຽວກັນໄດ້.

ຂ. ການປະສົມເກສອນຈາກດອກໜຶ່ງໄປຫາອີກຕົ້ນໜຶ່ງ, ຂະບວນການນີ້ຖືກເອີ້ນວ່າ: ການປະສົມເກສອນຈາກດອກໜຶ່ງໄປຫາອີກດອກໜຶ່ງ. ໃນກໍລະນີນີ້, ຄົນປູກຈະຕ້ອງປູກຢ່າງໜ້ອຍສອງຕົ້ນເພື່ອທີ່ຈະຜະລິດໝາກໄດ້.

ຄ. ການປະສົມເກສອນທຽມ ເກີດຂຶ້ນເມື່ອມີຄົນນຳເອົາລະອອງເກສອນຈາກເກສອນໂຕຜູ້ໄປວາງໃສ່ຍອດເກສອນໂຕແມ່. ມັນເປັນສິ່ງທີ່ສຳຄັນຖ້າຫາກບໍ່ມີແມງໄມ້ຕ່າງໆຢູ່ໃນບໍລິເວນດັ່ງກ່າວນັ້ນ ເຊິ່ງກໍລະນີນີ້ຈະເກີດຂຶ້ນໃນເວລາທີ່ນຳໃຊ້ຢາຂ້າແມງໄມ້ ຫຼື ສານເຄມີອື່ນໆ.



ການປະສົມເກສອນໃນດອກດຽວກັນ ການປະສົມເກສອນຂ້າມ ການປະສົມເກສອນທຽມ

ພືດສາມາດສະແດງໃຫ້ເຫັນເຖິງຄວາມແຕກຕ່າງຂອງດອກໄມ້ໄດ້ຂ້ອນຂ້າງຊັດເຈນ. ນີ້ເປັນສ່ວນໜຶ່ງທີ່ເກີດຈາກຍຸດທະສາດຂອງພືດໃນການປະສົມເກສອນຂອງມັນ. ດອກໄມ້ຈະໃຫຍ່, ສົດໃສ ແລະ ມີຫຼາຍສີສັນແມ່ນຂຶ້ນກັບສັດຈຳພວກແມງໄມ້ ຫຼື ນົກ, ທີ່ຈະນຳເອົາເກສອນຈາກດອກໜຶ່ງໄປວາງໃສ່ອີກດອກໜຶ່ງ, ເຊິ່ງສັດຈະແນມເຫັນສີສົດໃສໄດ້ຢ່າງງ່າຍດາຍ. ພືດທີ່ຖືກປະສົມເກສອນຈາກສັດຈະດຶງດູດບັນດາແມງໄມ້ທີ່ຢູ່ໃນສວນ, ເຊັ່ນວ່າ: ແມງກະເບື້ອ, ແມງເຜີ້ງ. ແມງໄມ້ເຫຼົ່ານີ້ຍັງນຳເອົາລະອອງເກສອນໂຕຜູ້ໄປຫາເກສອນໂຕແມ່ໃຫ້ກັບພືດຕົ້ນອື່ນໆໃນບໍລິເວນຂອງສວນ ເຊັ່ນ: ການປູກຜັກ, ເຊິ່ງຈະເປັນການເພີ່ມຜົນຜະລິດຂອງໝາກ. ສະຫຼຸບແລ້ວ, ບັນດາສັດປ່າອື່ນໆເຊັ່ນ: ຈຳພວກນົກຍັງຄົງຈະເຂົ້າມາອາໄສຢູ່ພາຍໃນສວນ ເພາະວ່າພວກເຂົາໄດ້ໃຫ້ອາຫານບັນດາແມງໄມ້ເຫຼົ່ານັ້ນ. ໃນທາງກົງກັນຂ້າມ, ດອກໄມ້ທີ່ນ້ອຍ, ມີສີຂຽວ, ບໍ່ງາມແມ່ນເພິ່ງພາລົມເພື່ອນຳສິ່ງເກສອນຂອງພວກມັນ, ເຊິ່ງນີ້ເປັນເຫດຜົນທີ່ວ່າຍ້ອນຫຍັງມັນຈຶ່ງບໍ່ຈຳເປັນຕ້ອງມີລັກສະນະທີ່ໂດດເດັ່ນພືດເຫຼົ່ານີ້ກໍ່ມີຄວາມສຳຄັນເພາະວ່າພວກມັນສາມາດແຜ່ກະຈາຍຢູ່ໃນສິ່ງແວດລ້ອມທີ່ບໍ່ມີສັດ ແລະ ພື້ນດິນທີ່ເປົ່າວ່າງໄດ້ຢ່າງວ່ອງໄວ, ເຊິ່ງຈະຊ່ວຍປ້ອງກັນຈາກການເຊາະເຈື່ອນຂອງດິນ.




## ລັກສະນະທາງກາຍະວິພາກຂອງໝາກໄມ້

ໝາກຈະຖືກຜະລິດຂຶ້ນພາຍຫຼັງການປະສົມພັນຂອງໄຂ່ອ່ອນໂດຍຈຸລັງເກສອນ. ເປືອກຫຸ້ມໝາກທີ່ຢູ່ອ້ອມຮອບແກ່ນຖືກປ່ຽນຮູບຮ່າງດ້ວຍຮັງໄຂ່ ແລະ ໄຂ່ອ່ອນແຕ່ລະໜ່ວຍຈະຜະລິດແກ່ນຂຶ້ນມາ. ສະນັ້ນ, ຮັງໄຂ່ອັນໜຶ່ງຈະບັນຈຸໄຂ່ອ່ອນ 10 ໜ່ວຍ ເຊິ່ງສາມາດຜະລິດແກ່ນໄດ້ເຖິງ 10 ແກ່ນ.

ເປືອກຫຸ້ມໝາກຖືກແບ່ງອອກເປັນ 3 ຊັ້ນຄື: ຊັ້ນທຳອິດແມ່ນເປືອກຊັ້ນນອກ ເຊິ່ງເປັນຜິວຂອງໝາກໄມ້, ສ່ວນເປືອກຊັ້ນກາງແມ່ນຢູ່ລະຫວ່າງກາງຂອງເປືອກຊັ້ນນອກ ແລະເປືອກຊັ້ນໃນ. ຊັ້ນສຸດທ້າຍແມ່ນເປືອກຊັ້ນໃນເຊິ່ງເປັນຊັ້ນທີ່ຢູ່ໃກ້ກັບແກ່ນ, ເຖິງຢ່າງໃດກໍ່ຕາມໝາກໄມ້ມີຮູບຮ່າງທີ່ແຕກຕ່າງກັນ ອັນທີ່ໜຶ່ງແມ່ນໝາກໄມ້ມີຊ່ອງເກັບຈຸລັງທີ່ແຕກຕ່າງກັນ (ເຊັ່ນໝາກກ້ຽງ ຫຼື ໝາກເລັ່ນ) ທີ່ຖືກເຊື່ອມຕໍ່ກັບຊ່ອງເກັບຈຸລັງຈຳນວນຫຼາຍ ທີ່ຢູ່ໃນຮັງໄຂ່ຂອງດອກໄມ້.

ສະນັ້ນ, ຄຸນລັກສະນະຂອງເປືອກຊັ້ນນອກ, ເປືອກຊັ້ນກາງ ແລະ ເປືອກຊັ້ນໃນ ສາມາດປ່ຽນແປງໄດ້ດັ່ງນີ້: ໝາກໄມ້ອາດຈະມີເປືອກຊັ້ນນອກທີ່ໜາ ເພື່ອປ້ອງກັນແກ່ນຂອງມັນ ໃນຂະນະທີ່ໝາກອື່ນໆສະແດງໃຫ້ເຫັນເປືອກຊັ້ນນອກອ່ອນນຸ້ມ ແລະ ເປືອກຊັ້ນກາງມີເນື້ອຢ່າງຫຼວງຫຼາຍ ແລະ ໝາກອື່ນໆມີເສັ້ນໃຍທີ່ມີລັກສະນະຄ້າຍຄືກັບເປືອກຊັ້ນນອກພ້ອມທັງມີເປືອກຊັ້ນກາງ ແລະ ເປືອກຊັ້ນໃນທີ່ນ້ອຍ.




**ໝາກມ່ວງ** **ໝາກກ້ຽງ**

**ການແຜ່ພັນ**

ຄຸນລັກສະນະຂອງໝາກ ມີຄວາມກ່ຽວພັນກັບວິທີການໃນການແຜ່ພັນຂອງພືດ. ໝາກໄມ້ທີ່ໃຫຍ່ ແລະ ມີສີສັນຈະຖືກສັດກິນແລ້ວຈະມີອາຈົມຢູ່ຫ່າງຈາກຕົ້ນໄມ້ທີ່ກິນ ແລະ ມີແກ່ນທີ່ພ້ອມຈະປົ່ງງອກຂຶ້ນມາ. ສັດຍັງສາມາດແຜ່ພັນໝາກດ້ວຍແກ່ນທີ່ຕິດຢູ່ກັບຂົນຂອງພວກມັນອີກດ້ວຍ. ໝາກໄມ້ແຫ້ງມີສ່ວນທີ່ງອກຍາວອອກມາ ແມ່ນແຜ່ພັນດ້ວຍລົມ, ດັ່ງນັ້ນ ພວກມັນສາມາດແຜ່ພັນໃນບ່ອນທີ່ຫ່າງໄກອອກໄປ, ດັ່ງໃນກໍລະນີຂອງຕົ້ນໄມ້ຕະກຸນ Dipterocarpus ແລະ Asteraceae.

ນໍ້າຍັງສາມາດພັດເອົາໝາກໄມ້ ຫຼື ແກ່ນຂອງໝາກໄມ້ຢູ່ໃນນໍ້າ ທີ່ລອຍຢູ່ເທິງໜ້ານໍ້າ. ພືດບາງຊະນິດດອກໄມ້, ໄດ້ມີການແຕກດອກອອກເປັນໝາກ, ແກ່ນກໍ່ຕົກຫຼົ່ນຢູ່ອ້ອມແອ້ມຕົ້ນຂອງມັນ. ສະຫຼຸບແລ້ວ, ຍັງມີໝາກໄມ້ທີ່ບໍ່ສະແດງວິທີການໃນການແຜ່ພັນນອກຈາກແຮງດຶງດູດ ດັ່ງນັ້ນເມື່ອມັນຕົກລົງພື້ນອ້ອມແອ້ມຕົ້ນຂອງມັນມັນກໍ່ຈະປົ່ງຂຶ້ນຢູ່ບ່ອນນັ້ນ. ຄົນປູກອາດຈະເລືອກພືດທີ່ດຶງດູດນົກ ຫຼື ສັດອື່ນໆເຂົ້າມາໃນສວນຂອງຕົນ ໝາກເຫຼົ່ານັ້ນຈະມີສີທີ່ສົດໃສ ແລະ ຄົນສາມາດກິນໄດ້.









# ລັກສະນະທາງກາຍະວິພາກຂອງແກ່ນ

ແຕ່ລະແກ່ນຈະມີໜໍ່ອ່ອນໜຶ່ງໜໍ່, ເຊິ່ງເປັນພືດຕົ້ນອ່ອນທີ່ໄດ້ປ່ຽນຮູບຮ່າງຈາກຮາກທີ່ຫາກໍ່ປົ່ງ (ຮາກ) ແລະ ໃບລ້ຽງ (ໃບທຳອິດ) ທີ່ຖືກເຊື່ອມເຂົ້າກັນໂດຍລຳຕົ້ນກ້ອງໃບລ້ຽງ. ໃບລ້ຽງເປັນອະໄວຍະວະທີ່ເກັບພະລັງງານ ແລະ ຄົ້ນພົບວ່າມີສອງແບບໃນຈຳພວກແກ່ນພືດທີ່ມີໃບລ້ຽງຄູ່ ແລະ ໃນຈຳພວກແກ່ນພືດທີ່ມີໃບລ້ຽງດ່ຽວແມ່ນມີແບບດຽວ. ໃບລ້ຽງກະຕຸ້ນໃຫ້ເກີດການຈະເລີນເຕີບໂຕຕົ້ນຕໍຂອງແກ່ນ ກ່ອນທີ່ມັນຈະປ່ຽນຮູບຮ່າງເປັນໃບ ແລະ ຮາກ ທີ່ສາມາດມີຕົ້ນອ່ອນທີ່ມີພະລັງງານ ແລະ ສານອາຫານທີ່ຈຳເປັນ.

ສະຫຼຸບແລ້ວ, ແກ່ນແມ່ນຖືກປ້ອງກັນດ້ວຍເປືອກຫຸ້ມແກ່ນທີ່ທົນທານຕໍ່ເຊື້ອລາ, ເຊື້ອໂຣກ ຫຼື ການອົບແຫ້ງ. ຄວາມເສຍຫາຍທັງໝົດທີ່ເຮັດໃຫ້ເປືອກຫຸ້ມແກ່ນເສຍຫາຍແມ່ນຈະເຮັດໃຫ້ໜໍ່ອ່ອນຕາຍ. ເຖິງຢ່າງໃດກໍ່ຕາມ, ແກ່ນຈຳເປັນຕ້ອງຖືກກັດເຈາະເພື່ອທີ່ຈະລະບາຍຄວາມຊຸ່ມພາຍໃນອອກ, ເຊິ່ງຈະຊ່ວຍໃຫ້ແກ່ນແຕກໜໍ່. ຕາມປົກກະຕິແລ້ວ, ເປືອກຫຸ້ມແກ່ນມັກຈະຖືກກັດເຈາະດ້ວຍເຊື້ອໂຣກ ຫຼື ເຊື້ອລາ, ສິ່ງນີ້ອະທິບາຍໃຫ້ຮູ້ວ່າຍ້ອນຫຍັງທ່ານຈຶ່ງຈຳເປັນຕ້ອງລໍຖ້າເຖິງສອງສາມອາທິດ ຫຼື ເປັນເດືອນກ່ອນທີ່ແກ່ນຈະແຕກໜໍ່. ການຍ່ອຍອາຫານໂດຍສັດ ຫຼື ການທົດນ້ຳກໍ່ສາມາດເປັນການກັດເຈາະໄດ້ເຊັ່ນກັນ. ກົນໄກນີ້ຮັບປະກັນໄດ້ວ່າ ແກ່ນຈະມີສະພາບແວດລ້ອມທີ່ດີໃນການແຕກໜໍ່. ແກ່ນຈະແຕກໜໍ່ກໍ່ຕໍ່ເມື່ອມັນມີເງື່ອນໄຂສະພາບແວດລ້ອມ (ເຊັ່ນ: ຄວາມຊຸ່ມ ຫຼື ອຸນຫະພູມ) ເໝາະສົມກັບຄວາມຕ້ອງການຂອງມັນ. ຊາວສວນທຸກຄົນຈະເກັບຮັກສາແກ່ນໄວ້ສຳລັບປີຕໍ່ໄປ.

ເຖິງຢ່າງໃດກໍ່ຕາມ, ພືດທັງໝົດທີ່ບໍ່ສາມາດຜະລິດແກ່ນຕ້ອງຖ້າສອງສາມປີກ່ອນທີ່ຈະມີການແຕກໜໍ່ເຊັ່ນ: ບາງແກ່ນບໍ່ມີການເກັບສານອາຫານໄວ້ພຽງພໍ, ບາງແກ່ນກໍ່ເປັນໂຣກຈາກການຕາກແຫ້ງ. ເພາະສະນັ້ນ, ນັກພືດສາດຈຶ່ງສ້າງຄວາມແຕກຕ່າງລະຫວ່າງແກ່ນດັ້ງເດີມທີ່ສາມາດແຕກໜໍ່ ເຖິງແມ່ນວ່າປະໄວ້ເປັນສະຕະວັດ, ແກ່ນທີ່ແຂງຕາຍຈະບໍ່ສາມາດແຕກໜໍ່ຫຼັງປະໄວ້ພຽງສອງສາມອາທິດ.
ໂດຍສ່ວນໃຫຍ່ແລ້ວແກ່ນທີ່ແຂງຕາຍມັກຈະພົບເຫັນຢູ່ໃນພື້ນທີ່ເຂດຮ້ອນ ເຊິ່ງເປັນບ່ອນທີ່ມີສະພາບເອື້ອອຳນວຍຕໍ່ການຈະເລີນເຕີບໂຕຂອງພືດ. ຕາມປົກກະຕິແກ່ນດັ້ງເດີມຈະຂຶ້ນກັບພັນໄມ້ ທີ່ຈະເລີນເຕີບໂຕ ແລະ ຕັ້ງຮາກຖານຢູ່ທົ່ວທຸກບ່ອນເຊັ່ນ: ໃນພື້ນທີ່ທີ່ມີແສງແດດຈະຖືກປ່ຽນຮູບຮ່າງໂດຍຕົ້ນໄມ້ທີ່ລົ້ມລົງມາ. ເພາະສະນັ້ນ, ແກ່ນເຫຼົ່ານີ້ສາມາດປະໄວ້ໄດ້ເປັນເວລາຫຼາຍປີກ່ອນທີ່ຈະມີສະພາບໃນການແຕກໜໍ່ທີ່ດີ.




ແກ່ນໝາກຖົ່ວ (ໃບລ້ຽງຄູ່)    ແກ່ນສາລີ (ໃບລ້ຽງດ່ຽວ)

## ການຂະຫຍາຍພັນພືດ

ການຂະຫຍາຍພັນພືດ ແມ່ນວິທີການຜະລິດເພື່ອເພີ່ມປະລິມານພັນພືດໃຫ້ຫຼາຍຂຶ້ນໂດຍມີຈຸດປະສົງເພື່ອເປັນການຄົງໄວ້ຂອງສາຍພັນພືດຊະນິດຕ່າງໆເພື່ອບໍ່ໃຫ້ມັນສູນພັນໄປ, ເພື່ອປູກ ແລະ ຈຳໜ່າຍໃຫ້ໄດ້ພຽງພໍກັບຄວາມຕ້ອງການຂອງຕະຫຼາດ. ໃນປະຈຸບັນວິທະຍາການຕ່າງໆມີຄວາມກ້າວໜ້າ ເຮັດໃຫ້ເຕັກນິກການຂະຫຍາຍພັນກໍ່ມີການພັດທະນາເຊັ່ນກັນ ເຊິ່ງເຮົາສາມາດຜະລິດພັນໄມ້ໃນຈຳນວນຫຼາຍໄດ້ໃນເວລາສັ້ນໆ, ສາມາດປັບປຸງສາຍພັນພືດໃຫ້ເກີດມີສາຍພັນໃໝ່ໆຕາມທີ່ເຮົາຕ້ອງການເຊັ່ນ: ໃຫ້ຜົນຜະລິດສູງຕະຫຼອດປີ, ມີດອກໃຫຍ່, ແຂງແຮງ ແລະ ສວຍງາມຂຶ້ນ. ເຊິ່ງເຮົາສາມາດໄຈ້ແຍກໄດ້ວ່າ ວິທີການຂະຫຍາຍພັນພືດປະກອບມີ 2 ແບບຄື: ການຂະຫຍາຍພັນແບບອາໄສເພດ ແລະ ການຂະຫຍາຍພັນແບບບໍ່ອາໄສເພດ.

### ການຂະຫຍາຍພັນແບບອາໄສເພດ (ກ້າແກ່ນ)

ການຂະຫຍາຍພັນແບບອາໄສເພດແມ່ນການຂະຫຍາຍພັນດ້ວຍແກ່ນ ເຊິ່ງເກີດຈາກການປະສົມພັນລະຫວ່າງເກສອນຜູ້ ແລະ ເກສອນແມ່ຂອງພືດດອກ, ຈົນເກີດການປະຕິສົນທິພາຍໃນຮັງໄຂ່, ຮັງໄຂ່ຈະກາຍເປັນໝາກ ແລະ ໄຂ່ຈະກາຍເປັນແກ່ນ, ພາຍໃນແກ່ນຈະມີໜໍ່ອ່ອນ ເມື່ອເອົາແກ່ນໄປປູກມັນກໍ່ຈະແຕກງອກ ແລະ ຈະເລີນເຕີບໂຕກາຍເປັນຕົ້ນໃໝ່ຂຶ້ນ. ເຊິ່ງມີລັກສະນະຄືກັບຕົ້ນເດີມ ແລະ ມີຈຳນວນຫຼາຍຂຶ້ນ.

ກ. ຂໍ້ດີຂອງການຂະຫຍາຍພັນພືດດ້ວຍແກ່ນ

- o ເຮັດໄດ້ງ່າຍ, ໄດ້ຫຼາຍ ແລະ ສະດວກໃນການປະຕິບັດ.
- o ມີລະບົບຮາກແກ້ວທີ່ສົມບູນ ແລະ ແຂງແຮງ.
- o ມີຄວາມແຂງແຮງ, ທົນທານຕໍ່ສະພາບແວດລ້ອມ ແລະ ພະຍາດ.
- o ອາຍຸຍືນ ແລະ ໃຫ້ຜົນຜະລິດຫຼາຍປີ (ສຳລັບໄມ້ໃຫ້ໝາກ).

ຂ. ຂໍ້ເສຍຂອງການຂະຫຍາຍພັນພືດແບບໃຊ້ແກ່ນ.

- o ສາມາດກາຍພັນໄດ້ງ່າຍ (ບໍ່ສາມາດຮັກສາພັນເດີມໄວ້ໄດ້)
- o ລຳຕົ້ນສູງໃຫຍ່ມີຄວາມຫຍຸ້ງຍາກໃນການເກັບກ່ຽວ ແລະ ການດູແລຮັກສາ (ສຳລັບໄມ້ໃຫ້ໝາກ).
- o ໃຫ້ຜົນຜະລິດຊ້າ ແລະ ຕ້ອງເສຍເວລາໃນການບົວລະບັດຮັກສາດົນ (ສຳລັບໄມ້ໃຫ້ໝາກ).

### ວັດສະດຸ ແລະ ອຸປະກອນ

- o ພາຖາດ ຫຼື ໜານກ້າ (ໃຊ້ສຳລັບກ້າແກ່ນ)
- o ຊວ້ານມື ຫຼື ຊວ້ານ (ໃຊ້ຕັກວັດສະດຸປູກ)
- o ຄຸນ້ຳ (ໃຊ້ສຳລັບແຊ່ເພື່ອກະຕຸ້ນແກ່ນ)
- o ວັດສະດຸປູກ: ຊາຍ 1 ສ່ວນ, ແກບເຜົາ ½ ສ່ວນ, ກາບໝາກພ້າວຊັບລະອຽດ ½ ສ່ວນ (ກ້າໃຊ້ພາຖາດ)

### ຂັ້ນຕອນການປະຕິບັດ

ກ. ການຄັດເລືອກແກ່ນພັນ: ເລືອກເອົາແກ່ນທີ່ແກ່, ມີສີເຂັ້ມ ຫຼື ສີດຳ ແລະ ເປັນແກ່ນຕຶ່ງເຕັມທີ່ (ແກ່ນບໍ່ລີບ).

ຂ. ການກະຕຸ້ນແກ່ນມີຫຼາຍວິທີຂຶ້ນກັບລັກສະນະຂອງແກ່ນເຊັ່ນວ່າ: ແກ່ນທີ່ມີຂະໜາດນ້ອຍແມ່ນໃຊ້ວິທີແຊ່ນ້ຳປະມານ 6-12 ຊົ່ວໂມງ ຫຼື 24 ຊົ່ວໂມງ (ໃຊ້ສຳລັບແກ່ນພືດຜັກ ຫຼື ໄມ້ໃຫ້ໝາກບາງຊະນິດ), ສ່ວນແກ່ນທີ່ມີປີກ ຫຼື ເປືອກແຂງແມ່ນຈະກະຕຸ້ນແກ່ນໂດຍວິທີການຕັດເປືອກໜ້ອຍໜຶ່ງ ຫຼື ວ່າຈະໃຊ້ກະດາດຊາຍມາຖູກ່ອນແລ້ວຈຶ່ງແຊ່ໃນອ່າງນ້ຳທີ່ສະອາດ ເພື່ອໃຫ້ນ້ຳສາມາດຊຶມຜ່ານເຂົ້າທາງໃນໄດ້ເປັນຢ່າງດີ (ໃຊ້ສຳລັບໄມ້ຢືນຕົ້ນ).

ຄ. ການກ້າມີ 2 ແບບຄື: ກ້າໃຊ້ພາຖາດ ແລະ ໜານກ້າການກ້າໃສ່ພາຖາດ ແມ່ນຈະໃຊ້ວັດສະດຸປູກລົງພາຖາດ ກ່ອນຈາກນັ້ນຈຶ່ງຫວ່ານແກ່ນລົງພາຖາດໂດຍກົງຈາກນັ້ນຈຶ່ງເອົາວັດສະດຸປູກກົບໜ້າເລັກນ້ອຍ ຫຼືວ່າຈະໃຊ້ວິທີຢອດແກ່ນ ເຊິ່ງຕ້ອງໄດ້ໃຊ້ໄມ້ຂີດເປັນຮ່ອງ ຫຼື ເຮັດເປັນຂຸມເຊິ່ງໄລຍະຫ່າງຕ້ອງໃຫ້ເໝາະສົມກັບຂະໜາດຂອງແກ່ນ ຈາກນັ້ນຢອດແກ່ນ ແລະ ໃຊ້ວັດສະດຸປູກກົບໜ້າເລັກນ້ອຍແລ້ວຫົດນໍ້າໃຫ້ຊຸ່ມແລ້ວນໍາໄປໄວ້ສວນກ້າ ຫຼື ບ່ອນທີ່ປອດຈາກສັດຕູພືດ (ສໍາລັບແກ່ນຂະໜາດນ້ອຍ).
ງ. ການກ້າໃສ່ໜານ ແມ່ນຈະຕ້ອງກະກຽມໜານກ່ອນ ໂດຍໄຖພອນດິນສ້າງເປັນໜານ ຈາກນັ້ນຈຶ່ງຫວ່ານແກ່ນ ຫຼື ຢອດແກ່ນລົງ (ໄລຍະຫ່າງຂຶ້ນກັບຂະໜາດຂອງແກ່ນ) ແລ້ວຫົດນໍ້າໃຫ້ຊຸ່ມ (ຄວນມີຕົວບັງແສງໃນໄລຍະທໍາອິດ). ໃນແຕ່ລະວັນຄວນກວດກາຄວາມເປັນລະບຽບຮຽບຮ້ອຍແລ້ວຫົດນໍ້າທຸກໆມື້ ເມື່ອແກ່ນແຕກງອກ ແລະ ຈະເລີນເຕີບໂຕກາຍເປັນເບ້ຍໄມ້ທີ່ແຂງແຮງສາມາດນໍາໄປຍ້າຍບົງ ຫຼື ນໍາໄປປູກໃນພື້ນທີ່ຕົວຈິງໄດ້.

**ການຂະຫຍາຍພັນພືດແບບບໍ່ອາໄສເພດ**

ການຂະຫຍາຍພັນແບບບໍ່ອາໄສເພດແມ່ນ ການຂະຫຍາຍພັນໂດຍໃຊ້ພາກສ່ວນຕ່າງໆຂອງພືດ ເຊິ່ງມີຫຼາຍວິທີເຊັ່ນ: ປັກຊໍາ, ໂຫມງ່າ, ແຍກເຫງົ້າ, ທາບງ່າ, ສຽບຍອດ, ຕິດຕາ ແລະ ອື່ນໆ. ເຊິ່ງວິທີເຫຼົ່ານີ້ຈະຊ່ວຍຮັກສາລັກສະນະທີ່ດີຂອງພືດໄວ້.

**ກ. ຂໍ້ດີຂອງການຂະຫຍາຍພັນແບບບໍ່ອາໄສເພດ**

- o ເຮັດໄດ້ງ່າຍ ແລະ ໃຫ້ຜົນຜະລິດໄວ
- o ໄດ້ເບ້ຍໄມ້ຂະໜາດໃຫຍ່ ແລະ ຕົ້ນຕໍ່າ
- o ມີລັກສະນະຄືກັບຕົ້ນແມ່ພັນ ແລະ ບໍ່ກາຍພັນ

**ຂ. ຂໍ້ເສຍຂອງການຂະຫຍາຍພັນແບບບໍ່ອາໄສເພດ**

- o ບໍ່ມີລະບົບຮາກແກ້ວ (ຍົກເວັ້ນວິທີການທາບງ່າ, ສຽບຍອດ ແລະ ຕິດຕາ)
- o ບໍ່ສາມາດທົນຕໍ່ລົມພາຍຸ ແລະ ຫັກໄດ້ງ່າຍ
- o ມີອາຍຸສັ້ນ ແລະ ໃຫ້ຜົນຜະລິດໜ້ອຍປີລົງ

**ການປັກຊໍາ**

ການປັກຊໍາແມ່ນການນໍາເອົາພາກສ່ວນຕ່າງໆຂອງພືດທີ່ສາມາດຂະຫຍາຍພັນໄດ້ເຊັ່ນ: ລໍາຕົ້ນ ຫຼື ຍອດ, ໃບ, ຮາກ. ນໍາມາຕັດ ແລະ ປັກຊໍາໄວ້ໃນວັດສະດຸປູກທີ່ກຽມໄວ້. ເພື່ອໃຫ້ໄດ້ຕົ້ນພືດໃຫມ່ຈາກພາກສ່ວນພືດທີ່ນໍາມາປັກຊໍາ. ໂດຍມີຂັ້ນຕອນປະຕິບັດຕົວຈິງດັ່ງລຸ່ມນີ້:

**ວັດສະດຸ ແລະ ອຸປະກອນ**

- o ກິ່ງພັນດີ.
- o ມີດຕັດກິ່ງພັນ.
- o ຖົງຢາງໃສ່ກິ່ງພັນ ແລະ ປົກຄຸມພາຖາດ.
- o ພາສະນະຕ່າງໆ ຫຼື ກະໂຖ.
- o ວັດສະດຸປູກ (ດິນປູກ 1 ສ່ວນ, ຊາຍ 2 ສ່ວນ, ແກບ 1 ສ່ວນ).
- o ນໍ້າຢາເລັ່ງຮາກ.
- o ໄມ້ຈີ້ມຂຸມທີ່ຈະປູກ.

**ຂັ້ນຕອນການປັກຊໍາ**

ກ. ຄັດເລືອກກິ່ງພັນຈາກຕົ້ນແມ່ພັນດີ ແລະ ມີອາຍຸຢ່າງໜ້ອຍປະມານ 6-12 ເດືອນ ຂຶ້ນໄປ ທີ່ມີຍອດ ຫຼື ກິ່ງທີ່ແຂງແຮງສົມບູນບໍ່ມີພະຍາດ ແລະ ແມງໄມ້, ກິ່ງພັນຕ້ອງບໍ່ອ່ອນ ຫຼື ບໍ່ແກ່ເກີນໄປ ແລະ ເປັນງ່າທີ່ໄດ້ຮັບແສງສະຫວ່າງຢ່າງພຽງພໍ.

ຂ. ໃຊ້ຄັດເຕີຕັດເອົາສ່ວນປາຍຍອດ ຫຼື ລໍາຕົ້ນ, ປະມານ 10-20 ຊັງຕີແມັດ, ເຊິ່ງມີ 3-4 ຕາ, ການຕັດຄວນໃຫ້ມີປາຍເຈັ້ຍເປັນມູມ 45 ອົງສາ, ສ່ວນໃບໃຫ້ເຫຼືອພຽງ 1-2 ໃບເພື່ອຫຼຸດຜ່ອນການຄາຍນໍ້າຂອງພືດ.

ຄ. ນໍາກິ່ງພັນດີທີ່ຕັດມາຈຸ່ມ ຫຼື ແຊ່ ໃນນໍ້າຢາເລັ່ງຮາກປະມານ 15 ນາທີ. ແຕ່ຖ້າບໍ່ມີນໍ້າຢາເລັ່ງຮາກກໍ່ສາມາດປັກຊໍາໄດ້ຜົນຄືກັນ (ບາງຊະນິດກໍ່ບໍ່ໄດ້ຜົນ).

ງ. ນໍາກິ່ງພັນດີທີ່ແຊ່ນໍ້າຢາເລັ່ງຮາກແລ້ວມາປັກຊໍາໃນເບົ້າ, ກະບະ ຫຼື ໃນໜານ ໃຫ້ເລິກປະມານ 5-8 ຊັງຕີແມັດ. (ເວລາປັກຊໍາທີ່ດີຄວນເຮັດໃນຕອນເຊົ້າ ຫຼື ຕອນແລງ).







**ການຕອນ ຫຼື ໂຫມງ່າ**

ການໂຫມງ່າແມ່ນວິທີການເຮັດໃຫ້ກິ່ງ ຫຼື ລໍາຕົ້ນພືດ (ຕົ້ນແມ່ພັນດີ) ເກີດມີຮາກໃຫມ່ຂຶ້ນ. ໃຫ້ກິ່ງພັນທີ່ໄດ້ມີລັກສະນະສາຍພັນຄ້າຍຄືຕົ້ນແມ່ພັນເດີມທຸກປະການໂດຍມີຂັ້ນຕອນປະຕິບັດຕົວຈິງດັ່ງລຸ່ມນີ້.

**ວັດສະດຸ ແລະ ອຸປະກອນ**

- ກິ່ງພັນດີ.
- ມີດຕັດກິ່ງພັນ.
- ມີດໂຫມງ່າ.
- ຖົງຢາງຂະໜາດ 4x6 ນີ້ວ.
- ເຊືອກຟາງ.
- ກາບໝາກພ້າວສັບລະອຽດ.

**ຂັ້ນຕອນການປະຕິບັດ**

ກ. ກຽມວັດສະດຸເຊັ່ນ ນໍາເອົາກາບພ້າວທີ່ບົດມາຕົ້ມນໍ້າປະມານ 4-6 ຊົ່ວໂມງ ຫຼັງຈາກນັ້ນກໍ່ນໍາມາໃສ່ຖົງຢາງພລາສ໌ຕິກຂະໜາດ 4x6 ນີ້ວ ແລ້ວມັດເປັນຖົງປະໄວ້.

ຂ. ຄັດເລືອກງ່າທີ່ບໍ່ນ້ອຍ ຫຼື ໃຫຍ່ເກີນໄປເຊິ່ງມີອາຍຸປະມານ 6-12 ເດືອນ ຫຼື ເຮົາສາມາດສັງເກດເບິ່ງງ່າທີ່ມີສີຂາວອົມເທົາ, ເປັນງ່າທີ່ໄດ້ຮັບແສງສະຫວ່າງ ແລະ ມີມູມ 45 ອົງສາ.

ຄ. ປາດງ່າຢູ່ບໍລິເວນກ້ອງຂໍ້ (node) ຫຼື ກ້ອງຂໍ້ລົງມາປະມານ ½ -1 ຊັງຕີແມັດ ໂດຍປາດ 2 ຮອຍຫ່າງກັນ 2,5 ຊັງຕີແມັດ ຫຼື ເທົ່າກັບເສັ້ນວົງຮອບຂອງງ່າທີ່ຈະຕອນແລ້ວລອກເປືອກອອກລະວັງຢ່າປາດເລິກກາຍເນື້ອເຍື່ອເພາະເຮັດໃຫ້ງ່າຕາຍໄດ້.

ງ. ຂູດເນື້ອເຍື່ອ (cambium) ອອກໃຫ້ໝົດ ເວລາຂູດໃຫ້ຂູດຈາກເທິງລົງມາທາງລຸ່ມຢ່າຂູດສະຫຼັບກັນ.

ຈ. ຖ້າເປັນໄມ້ມີຢາງຫຼັງຂູດເນື້ອເຍື່ອອອກແລ້ວປະໄວ້ 3-7 ວັນ ເພື່ອໃຫ້ນໍ້າຢາງແຫ້ງ.

ສ. ຖ້າມີນໍ້າຢາຮໍໂມນເລັ່ງຮາກ ຄວນໃຊ້ຮໍໂມນທາຮອຍປາດເບື້ອງເທິງ.

ຊ. ນໍາເອົາຖົງກາບພ້າວທີ່ກຽມໄວ້ມາປາດແລ້ວ ບີບນໍ້າອອກມັດຫຸ້ມປາກບາດຫຼັງຈາກນັ້ນມັດດ້ວຍເຊືອກສອງສົ້ນໃຫ້ແໜ້ນພໍສົມຄວນ.

ຍ. ຈາກນັ້ນ 2 ອາທິດແລ້ວກວດເຊັກເບິ່ງເມື່ອໄດ້ປະມານໜຶ່ງ ຫຼື ສອງເດືອນກໍ່ຈະເຫັນຮາກສີຂາວອອກມາຢູ່ຕາມຖົງກາບພ້າວ.



### ການແຍກເຫງົ້າ

ການແຍກເຫງົ້າແມ່ນການແບ່ງເຫງົ້າຂອງຕົ້ນແມ່ພັນເດີມອອກເປັນ 2 ຕົ້ນຂຶ້ນໄປ ເຊິ່ງເຮັດໃຫ້ພືດມີຈຳນວນເພີ່ມຂຶ້ນເປັນແບບທະວີຄູນ ແຕ່ລັກສະນະສາຍພັນຍັງຄາຍຄືຕົ້ນແມ່ພັນເດີມ. ໂດຍມີຂັ້ນຕອນປະຕິບັດຕົວຈິງດັ່ງລຸ່ມນີ້.

**ວັດສະດຸ ແລະ ອຸປະກອນ**

- ຕົ້ນແມ່ພັນດີ
- ຄັດເຕີ ຫຼື ມີດຕັດ
- ສຸມ ຫຼື ຊວ້ານ
- ຖົງຢາງຂະໜາດ 4x7 ຫຼື 6x12
- ດິນປູກ (ດິນປູກ 1 ສ່ວນ, ຊາຍ 2 ສ່ວນ, ແກບ 1 ສ່ວນ)

**ຂັ້ນຕອນການປະຕິບັດ**

ກ. ກຽມເບົ້າ ຫຼື ກະບະທີ່ມີພືດຕ້ອງການແຍກ, ວັດສະດຸປູກ ແລະ ເບົ້າ ຫຼື ກະບະ/ພາຖາດ.
ຂ. ເລືອກຕົ້ນແມ່ພັນທີ່ດີ ຕ້ອງເປັນສຸມທີ່ໃຫຍ່, ແໜ້ນ ແລະ ມີລັກສະນະແຂງແຮງທົນທານຕໍ່ກັບເຊື້ອພະຍາດ.
ຄ. ໃຊ້ຊວ້ານມື ຫຼື ຄັດເຕີຕັດແຍກພືດອອກເປັນສຸມໂດຍໃຫ້ໜຶ່ງສຸມມີໜຶ່ງໜໍ່ ຫຼື ສອງໜໍ່ຂຶ້ນໄປ.
ງ. ແລ້ວນຳມາປູກໃສ່ໂຖ ຫຼື ຖົງຢາງໂດຍໃຫ້ວັດສະດຸປູກຖົມເຫງົ້າພຽງເລັກນ້ອຍ.
ຈ. ຈາກນັ້ນເອົາມາພັກໄວ້ໃນຕູ້ອົບ ຫຼື ເຮືອນຮົ່ມປະມານ 2-3 ເດືອນ ຈຶ່ງສາມາດນຳໄປປູກໄດ້.



**ການທາບງ່າ**

ການທາບງ່າແມ່ນການນຳເອົາພືດ 2 ຕົ້ນມາເປັນຕົ້ນດຽວກັນ ໂດຍພາກສ່ວນຕົ້ນຕໍທີ່ນຳມາທາບງ່າຈະເຮັດໜ້າທີ່ເປັນລະບົບຮາກເພື່ອຫາອາຫານໃຫ້ກິ່ງພັນດີ. ໂດຍມີຂັ້ນຕອນປະຕິບັດຕົວຈິງດັ່ງລຸ່ມນີ້.

**ວັດສະດຸ ແລະ ອຸປະກອນ**

- ກິ່ງພັນດີ.
- ຕົ້ນຕໍ
- ມີດຕັດກິ່ງພັນ.
- ເຊືອກຟາງ.
- ກາບໝາກພ້າວສັບລະອຽດ.
- ເຊືອກພັນກິ່ງ

**ຂັ້ນຕອນການປະຕິບັດ**

ກ. ການກະກຽມຕົ້ນຕໍ: ຕົ້ນຕໍມີອາຍຸປະມານ 8-12 ເດືອນ ມີລະບົບຮາກທີ່ແຂງແຮງສົມບູນ ແລະ ເປັນຊະນິດດຽວກັບກິ່ງພັນດີ, ນຳຕົ້ນຕໍທີ່ຂຸດອອກຈາກໜານມາຕັດຮາກແກ້ວອອກໃຫ້ສັ້ນ ຫຼື ຍາວປະມານ 10 ຊັງຕີແມັດ. ຕັດຮາກຝອຍອອກແລ້ວນຳໄປໃສ່ຖົງຢາງ. ຈາກນັ້ນ ນຳກາບໝາກພ້າວມາໃສ່ຖົງຢາງຈົນເຕັມ ແລະ ນຳເອົາຕົ້ນຕໍກໍ່ໃສ່ລົງໄປແລ້ວໃຊ້ເຊືອກຟາງມັດໄວ້.

ຂ. ເລືອກກິ່ງພັນດີ ຄວນເລືອກເອົາຈາກຕົ້ນແມ່ພັນດີທີ່ແຂງແຮງ, ໄດ້ຮັບໝາກຜົນຫຼາຍ (ໄມ້ໃຫ້ໝາກ). ເປັນກິ່ງທີ່ຮັບແສງສະຫວ່າງພຽງພໍ, ມີມູມອຽງ 45 ອົງສາ, ກິ່ງບໍ່ອ່ອນ ແລະ ບໍ່ແກ່ເກີນໄປ.

ຄ. ໃຊ້ມີດປາດໄປຕາມລວງຍາວຂອງກິ່ງງ່າຂອງຕົ້ນໄມ້ຍາວປະມານ 5-8 ຊັງຕີແມັດ.

ງ. ຕົ້ນຕໍຍາວປະມານ 15-18 ຊັງຕີແມັດ. ນຳຕົ້ນຕໍມາປາດຍາວສະຫຼຽງຂ້າງໜຶ່ງ ແລະ ປາດລັດທີ່ປາຍອີກດ້ານໜຶ່ງ

ຈ. ໃຊ້ເທບຄຽນອ້ອມຮອບບໍລິເວນປາກບາດໃຫ້ແໜ້ນ

ສ. ໃຊ້ມີດປາດລັດກ້ວາງປະມານ 1 ຊັງຕີແມັດ ແລ້ວລອກເອົາເປືອກອອກເພື່ອເປັນການຕັດທໍ່ລຳລຽງອາຫານ

ຊ. ປະໄວ້ປະມານ 45 ວັນ ກໍ່ຈະເຫັນຮາກຂອງຕົ້ນຕໍນັ້ນອອກມາຈົນກວ່າຈະມີຮາກຫຼາຍ ແລ້ວຈຶ່ງຕັດເອົາຕົ້ນໄມ້ດັ່ງກ່າວນັ້ນມາຊຳໄດ້.





**ການຕິດຕາ**

ການຕິດຕາແມ່ນການເຊື່ອມຕິດຂອງລຳຕົ້ນ ແລະ ຕາພັນດີເຂົ້າດ້ວຍກັນ ເພື່ອຈະເລີນເຕີບໂຕເປັນຕົ້ນດຽວກັນ ໂດຍການນຳແຜ່ນຕາຈາກຕົ້ນພັນດີໄປຕິດກັບຕົ້ນຕໍ. ການຕິດຕາມີຫຼາຍແບບເຊັ່ນ: ການຕິດຕາແບບຕົວເຕ (T), ຕິດຕາແບບປ່ອງຢ້ຽມ, ຕິດຕາແບບ 4 ລ່ຽມຍາວ ແລະ ແບບໃຊ້ກັບຕົ້ນພືດທີ່ລອກເປືອກຍາກ ເຊິ່ງໃນນີ້ຈະນຳສະເໜີພຽງວິທີດຽວຄື: ການຕິດຕາແແບບຕົວເຕ T ດັ່ງນີ້:

ກ. ການເລືອກຕົ້ນຕໍ ແມ່ນຄ້າຍຄືກັບການເລືອກຕົ້ນຕໍຂອງວິທີການສຽບຍອດ

ຂ. ການເລືອກຕາຈາກຕົ້ນພັນດີແມ່ນເລືອກຈາກຕົ້ນທີ່ແຂງແຮງ ແລະ ສົມບູນ

ຄ. ປາດຕົ້ນຕໍເປັນຮູບຕົວເຕ T ປາດຍາວປະມານ 3-5 ຊັງຕີແມັດ. ເປີດເປືອກອອກພຽງເລັກນ້ອຍ

ງ. ປາດແຜ່ນຕາເປັນຮູບໂລ່ແລ້ວແກະເນື້ອໄມ້ອອກ.

ຈ. ສອດແຜ່ນຕາເຂົ້າໄປໃຫ້ແໜ້ນແລ້ວຕັດສ່ວນທີ່ເຫຼືອອອກໃຫ້ພໍດີກັບບ່ອນປາດ.

ສ. ພັນດ້ວຍແຜ່ນຢາງໃຫ້ແໜ້ນປະໄວ້ປະມານ 7-10 ວັນຈະເຫັນຕາສີຂາວຕຸ່ມຂຶ້ນຫຼັງຈາກນັ້ນເຮົາກໍ່ມາຍເອົາຢາງທີ່ພັນນັ້ນອອກແລ້ວກໍ່ພັນຄືນ ໂດຍຈົ່ງຕາທີ່ຈະປົ່ງຂຶ້ນນັ້ນໄວ້.

ຊ. ເມື່ອຕາແຕກອອກມາແລ້ວກໍ່ເລີ່ມຕັດຍອດຕົ້ນຕໍຖິ້ມໂດຍໃຫ້ຫ່າງຈາກຕາປະມານ 2-3 ຊັງຕີແມັດ.



### ການສຽບຍອດ

ການສຽບຍອດແມ່ນການເຊື່ອມຕິດເນື້ອເຍື່ອຂອງຕົ້ນພືດ 2 ຕົ້ນເຂົ້າຫາກັນ ເພື່ອໃຫ້ຈະເລີນເຕີບໂຕເປັນຕົ້ນດຽວກັນ. ເຊິ່ງປະກອບມີຫຼາຍແບບຄື: ແບບເຂົ້າຫຼຸ້ມ, ແບບສຽບຂ້າງ ແລະ ແບບປະກົບກັນ. ເຊິ່ງເຮົາໄດ້ຍົກຕົວຢ່າງ 2 ແບບຄື: ການສຽບຍອດ ແລະ ການສຽບຂ້າງ.

### ການສຽບຍອດແບບສຽບຂ້າງ:

ກ. ເລືອກຕົ້ນທີ່ສົມບູນທີ່ປູກໃນກະຖົງ, ໝໍ້, ຖົງພລາສ໌ຕິກ ຫຼື ໃນໜານກ້າ.

ຂ. ເລືອກງ່າພັນດີທີ່ບໍ່ສູງປານໃດເພື່ອສະດວກໃນການປະຕິບັດງານ, ງ່າພັນທີ່ເໝາະສົມກັບຕົ້ນຕໍຄວນມີຂະໜາດໃຫຍ່ໃກ້ຄຽງກັນ.

ຄ. ປາດງ່າພັນດີໃຫ້ເຂົ້າເນື້ອໄມ້ໃຫ້ເລິກບໍ່ເກີນ 1/2 ຂອງງ່ານັ້ນ, ມີຄວາມຍາວເທົ່າກັບຮອຍປາກບາດຂອງຕົ້ນຕໍເຊິ່ງຮອຍປາດໃຫ້ມີຂະໜາດຢູ່ໃນລະຫວ່າງ 3-5 ຊັງຕີແມັດ.

ງ. ຕັດຍອດຕົ້ນຕໍທາງດຽວກັນກັບບາດແຜຂອງງ່າປາດເປັນຮູບປາກສະຫຼາມຍາວເທົ່າກັບບາດແຜຂອງງ່າພັນດີ.

ຈ. ສອດປາຍຕົ້ນຕໍເຂົ້າໄປໃນປາກບາດງ່າພັນດີເຊິ່ງໃຫ້ທາງໃນເນື້ອເຍື່ອຈະເລີນກົງກັນ.

ສ. ແລ້ວພັນດ້ວຍພລາສ໌ຕິກໃຫ້ແໜ້ນ, ໃຊ້ເວລາປະມານ 2-3 ອາທິດແລ້ວເນື້ອເຍື່ອທັງສອງງ່າຈະປະສານກັນ.



ການສຽບຍອດ ການສຽບຂ້າງ

# ການປູກພືດ

ການປູກພືດແມ່ນການນຳເອົາເບ້ຍໄມ້ ຫຼື ແກ່ນ ຊະນິດຕ່າງໆລົງປູກໃນພື້ນທີ່ດິນຕ່າງໆ ມີຫລາຍຈຸດປະສົງການປູກ ຄື: ການປູກຕົ້ນໄມ້ໃນພື້ນທີ່ປ່າຊຸດໂຊມ, ການປູກໄມ້ໃຫ້ໝາກ, ການປູກໄມ້ອຸດສາຫະກຳ, ການປູກພືດໄລຍະສັ້ນ ເພື່ອຜະລິດອາຫານ ແລະ ອື່ນໆ. ເຊິ່ງເຮົາພົບເຫັນໂດຍທົ່ວໄປມີ 3 ແບບຫຼັກໆຄື: ການປູກດ້ວຍແກ່ນໂດຍກົງ, ການປູກເບ້ຍໄມ້ ແລະ ການປູກລຳຕົ້ນ ຫຼື ຫົວ.

**ການປູກດ້ວຍແກ່ນໂດຍກົງ**

ການປູກດ້ວຍແກ່ນແມ່ນ ການປູກໂດຍໃຊ້ແກ່ນພືດປູກລົງພື້ນທີ່ໂດຍກົງ ເຊິ່ງຈະບໍ່ມີການຍ້າຍບົ່ງ ຫຼື ຍ້າຍປູກໄປໃນພື້ນທີ່ອື່ນ. ເຊິ່ງການປູກແບບນີ້ແມ່ນນິຍົມໃຊ້ກັບພືດໄລຍະສັ້ນ ຫຼື ພືດອາຍຸ 1 ປີເຊັ່ນ: ເຂົ້າໄຮ່, ສາລີ, ໝາກເດືອຍ ແລະ ອື່ນໆ.

**ວັດສະດຸ ແລະ ອຸປະກອນ**

o ລົດໄຖ (ໃຊ້ໄຖພວນດິນ, ປັບໜ້າດິນ)
o ພ້າ (ໃຊ້ຖາງຫຍ້າ ແລະ ອານາໄມພື້ນທີ່ກ່ອນການປູກ)
o ຈົກ, ຊວ້ານ (ໃຊ້ຂຸດຂຸມ ແລະ ແປງໜານປູກ)
o ສະທາ (ໃຊ້ເກາະວັດສະພືດ ແລະ ແປງໜານປູກ)
o ບົວຫົດນ້ຳ (ໃຊ້ນ້ຳຫົດໜານ ຫຼື ຂຸມປູກແກ່ນ)
o ສຽມ (ໃຊ້ຂຸດຂຸມປູກ)

**ຂັ້ນຕອນການປູກດ້ວຍແກ່ນໂດຍກົງ:**

**ການກະກຽມພື້ນທີ່**

ການປູກພືດດ້ວຍແກ່ນໂດຍກົງແມ່ນມີຫຼາຍວິທີແຕກຕ່າງກັນຂຶ້ນກັບຄວາມເໝາະສົມກັບພືດແຕ່ລະຊະນິດ. ດັ່ງການກະກຽມພື້ນທີ່ຈຶ່ງແຕກຕ່າງກັນເຊັ່ນ: ການປູກພືດໄຮ່ໃນພື້ນທີ່ສູງແມ່ນຈະເລີ່ມຂຶ້ນໃນຊ່ວງລະດູແລ້ງໂດຍຈະຖາງປ່າ ແລະ ຈູດໄຮ່, ຈາກນັ້ນຈຶ່ງອະນາໄມຄືນໃຫ້ກ້ຽງ ເພື່ອກຽມພ້ອມປູກໃນຊ່ວງລະດູຝົນ. ສ່ວນພື້ນທີ່ຮຽບພຽງສາມາດປູກພືດໄດ້ຕະຫຼອດປີ ແລະ ປູກພືດໄດ້ຫຼາກຫຼາຍ ດັ່ງນັ້ນຈຶ່ງໄດ້ມີການຈັດການພື້ນທີ່ຢ່າງດີ. ເຊິ່ງເລີ່ມຈາກການອະນາໄມ ຕັດຫຍ້າກຳຈັດວັດສະພືດອອກ ຈາກນັ້ນຈຶ່ງໄຖພວນດິນເລິກປະມານ 20-30 ຊັງຕີແມັດ. ຕາກດິນປະໄວ້ປະມານ 3-7 ວັນ. ຖ້າດິນໃນພື້ນທີ່ຫາກເປັນກົດຄວນໃຊ້ປູນຂາວຫວ່ານເພື່ອເປັນການປັບຄວາມເປັນກົດຂອງດິນ ແລະ ຍັງເປັນການຂ້າເຊື້ອພະຍາດບາງຊະນິດໃນອັດຕາ 1 ກຳມື / 1 ຕາແມັດ. ຫຼັງຈາກນັ້ນແມ່ນໃຫ້ໃສ່ຝຸ່ນບົ່ມ ຫຼື ຝຸ່ນຄອກໃນອັດຕາ 1-3 ກິໂລ / ຕາແມັດ. ແລ້ວຈຶ່ງໄຖຄືນ ແລະ ປັບພື້ນທີ່ໃຫ້ພຽງຈຶ່ງຈະສາມາດປູກພືດໄດ້ຕໍ່ໄປ.

**ການຄັດເລືອກແກ່ນພັນ**

ແກ່ນພັນທີ່ຈະນຳມາປູກມີຫຼາຍປະເພດເຊັ່ນ: ແກ່ນພັນພື້ນເມືອງເປັນແກ່ນພັນທີ່ປະຊາຊົນເກັບຮັກສາໄວ້ຈາກຫຼຸ້ນສູ່ຫຼຸ້ນຕໍ່ໆກັນມາ ເຊິ່ງຈະຄັດເລືອກແກ່ນຈາກຕົ້ນແມ່ພັນທີ່ແຂງແຮງ ບໍ່ມີພະຍາດ, ໃຫ້ຜົນຜະລິດສູງ, ເປັນໝາກແກ່, ແກ່ນມີສີເຂັ້ມ ຫຼື ດຳ, ຕຶ່ງເຕັ່ມດີ ແລະ ຈະຕ້ອງໄດ້ແຕກແດດໄວ້ປະມານ 2-3 ແດດກ່ອນ ຈຶ່ງສາມາດເກັບໄວ້ ແລະ ນຳໄປກ້າໄດ້ຕໍ່ໄປ. ສ່ວນແກ່ນພັນທີ່ຂາຍຕາມທ້ອງຕະຫຼາດແມ່ນແກ່ນພັນທີ່ຜ່ານການຄັດເລືອກແກ່ນຈາກໜ່ວຍງານ ຫຼື ບໍລິສັດໃດໜຶ່ງແລ້ວ, ເຊິ່ງສາມາດເລືອກຊະນິດທີ່ຕ້ອງການໄດ້ເລີຍ ແຕ່ເຮົາຄວນອ່ານລາຍລະອຽດຕ່າງໆໃນຊອງເຊັ່ນ: ວັນເດືອນປີຜະລິດ ແລະ ວັນໝົດອາຍຸ, ເປີເຊັນການແຕກງອກ ແລະ ອື່ນໆ.

**ການກະຕຸ້ນແກ່ນກ່ອນປູກ**

ການກະຕຸ້ນແກ່ນມີຫຼາຍວິທີຂຶ້ນກັບລັກສະນະຂອງແກ່ນພືດແຕ່ລະຊະນິດເຊັ່ນ: ຖ້າແກ່ນທີ່ມີຂະໜາດນ້ອຍແມ່ນສາມາດໃຊ້ວິທີແຊ່ນ້ຳປະມານ 8-24 ຊົ່ວໂມງເພື່ອໃຫ້ແຕກໜໍ່ (ແກ່ນຜັກຫອມປ້ອມ, ຜັກກາດ, ຖົ່ວດິນ ແລະ ອື່ນໆ...) ຫຼື ບົ່ມໃນພື້ນດິນທີ່ຊຸ່ມປະມານ 2-3 ມື້ (ເມັດເຂົ້ານາ ແລະ ອື່ນໆ). ແຕ່ແກ່ນພືດບາງຊະນິດກໍ່ບໍ່ຈຳເປັນຕ້ອງກະຕຸ້ນແກ່ນກໍ່ໄດ້ເຊັ່ນ: ແກ່ນໝາກງາ, ສາລີ, ໝາກເດືອຍ ແລະ ອື່ນໆ.

**ການກະກຽມໜານປູກ ແລະ ຂຸມປູກ**

ການກະກຽມໜານປູກສ່ວນໃຫຍ່ແມ່ນສ້າງຂຶ້ນໃນພື້ນທີ່ຮຽບພຽງ ແລະ ມີຂະໜາດກວ້າງ 1 ແມັດ, ລວງຍາວບໍ່ກຳນົດແລ້ວແຕ່ຄວາມສະດວກ, ເຊິ່ງຈະເລີ່ມໄຖຮ່ອງ ແລະ ຍົກລະດັບໜານຂຶ້ນສູງປະມານ 15-20 ຊັງຕີແມັດ, ໄລຍະຫ່າງຂອງໜານແມ່ນ 60 ຊັງຕີແມັດ ເຊິ່ງການປູກແກ່ນໃນໜານສ່ວນໃຫຍ່ແມ່ນໃຊ້ປູກແກ່ນພືດຜັກຕ່າງໆເຊັ່ນ: ຜັກຫອມ, ຜັກບົ້ງ, ຜັກຫົມ ແລະ ອື່ນໆ. ສ່ວນການຂຸດຂຸມແມ່ນຈະໃຊ້ກັບພວກພືດຜັກບາງຊະນິດເຊັ່ນ: ໝາກຖົ່ວຍາວ, ໝາກແຕງ ແລະ ອື່ນໆ. ເຮົາຈະເລີ່ມຈາກການໃຊ້ເຊືອກເນັ່ງເປັນແຖວດຽວ ຫຼື ແຖວຄູ່ກໍ່ໄດ້, ເຊິ່ງຂຸມຈະມີຂະໜາດ 10x10 ຊັງຕີແມັດ ຫຼື 20x20 ຊັງຕີແມັດ ແລະ ເລິກປະມານ 15-20 ຊັງຕີແມັດ, ຖ້າເປັນແຖວຄູ່ຈະມີໄລຍະຫ່າງປະມານ 15-20 ຊັງຕີແມັດ, ສ່ວນໄລຍະຫ່າງຂອງແຖວປະມານ 60-80 ຊັງຕີແມັດ. ຈາກນັ້ນໃຊ້ສຽມຂຸດເປັນຂຸມຕາມທີ່ໄດ້ກຳນົດໂດຍຈະຮັກສາດິນໄວ້ 3/4 ຂອງຂຸມ ຫຼື ໃຫ້ດິນໃນຂຸມຕ່ຳກວ່າປາກຂຸມເລັກນ້ອຍ.

## ວິທີການປູກແກ່ນ

ວິທີການປູກແກ່ນມີ 2 ແບບຄື: ການຫວ່ານແກ່ນ ແລະ ການປູກເປັນແຖວ

ກ. ການຫວ່ານແກ່ນ: ແມ່ນໃຊ້ກັບພືດທີ່ແກ່ນຂະໜາດນ້ອຍ, ມີອັດຕາການລອດຕາຍຕ່ຳ ແລະ ລາຄາຖືກ ເຊັ່ນ: ໝາກງາ, ເຂົ້ານາ ແລະ ອື່ນໆ. ປະລິມານແກ່ນທີ່ຈະຫວ່ານໃນແຕ່ລະຄັ້ງແມ່ນຂຶ້ນກັບອັດຕາການແຕກງອກ ແລະ ຜູ້ຫວ່ານເອງ. ຖ້າແກ່ນມີອັດການແຕກງອກສູງກໍ່ສາມາດຫວ່ານຫ່າງໆກໍ່ໄດ້ ແຕ່ທັງນີ້ກໍ່ຂຶ້ນກັບຜູ້ທີ່ຫວ່ານແກ່ນຈະຕ້ອງມີຄວາມຊຳນານດ້ວຍ ຖ້າບໍ່ດັ່ງນັ້ນຈະສິ້ນເປືອງແກ່ນໂດຍບໍ່ຈຳເປັນ ແລະ ເບ້ຍໄມ້ແຕກງອກຂຶ້ນມາອາດຈະໜາແໜ້ນເກີນໄປຈົນເຮັດໃຫ້ຕົ້ນພືດແລະ-ຈ່ອຍ ຫຼື ເກີດມີພະຍາດ ແລະ ແມງໄມ້ເຂົ້າມາທຳລາຍໄດ້ໂດຍງ່າຍ. ດັ່ງນັ້ນຫາກພືດເກີດໜາແໜ້ນເກີນໄປຄວນມີການຈັດການໂດຍຖອນແຍກອອກ ເພື່ອຈັດໄລຍະຫ່າງຂອງຕົ້ນພືດໃໝ່ໃຫ້ເໝາະສົມຈຶ່ງສາມາດໄດ້ຮັບຜົນດີ.



ຂ. ການປູກເປັນແຖວ: ແມ່ນການປູກທີ່ມີການກຳນົດໄລຍະການປູກຢ່າງຊັດເຈນເຊິ່ງຈະມີ 2 ວິທີຄື:
ການໂຮຍເປັນແຖວ ສ່ວນໃຫຍ່ວິທີນີ້ແມ່ນໃຊ້ໜານປູກ ເຊິ່ງເຮົາເລີ່ມຈາກຫົດນ້ຳໃສ່ໜານໃຫ້ຊຸ່ມກ່ອນຈາກນັ້ນຈຶ່ງໃຊ້ໄມ້ຂີດເປັນແຖວຕັດກັບລວງຂອງໜານ ແຕ່ລະແຖວຫ່າງກັນ 5 ຊັງຕີແມັດ, ຈາກນັ້ນໂຮຍແກ່ນລົງແຖວໃຫ້ສະໝ່ຳສະເໝີ ແລ້ວຈຶ່ງໃຊ້ໄມ້ກວດໜ້າ ພໍໃຫ້ດິນປົກແກ່ນພຽງເລັກນ້ອຍ ຈາກນັ້ນຫົດນ້ຳໃຫ້ຊຸ່ມ.

ສ່ວນການຢອດແກ່ນແມ່ນຈະໃຊ້ໄມ້ຊັກພື້ນດິນໃຫ້ເປັນຂຸມແລ້ວຢອດແກ່ນ ເຊິ່ງເປັນວິທີງ່າຍ ແລະ ບໍ່ຫຍຸ້ງຍາກ ມັກນິຍົມໃຊ້ວິທີນີ້ໃນພື້ນທີ່ສູງເປັນສ່ວນໃຫຍ່ເຊັ່ນ: ການປູກແກ່ນໝາກຖົ່ວດິນ, ຖົ່ວເຫຼືອງ, ເຂົ້າໄຮ່, ໝາກເດືອຍ, ສາລີ ແລະ ອື່ນໆ. ຈະຢອດແກ່ນປະມານ 3-4 ແກ່ນຕໍ່ຂຸມ ແລ້ວກົບດິນເລັກນ້ອຍ. ແຕ່ມີພືດບາງຊະນິດເຊັ່ນ: ໝາກຖົ່ວຍາວ, ໝາກແຕງ ແລະ ພືດບາງຊະນິດ ກໍ່ຈໍາເປັນຕ້ອງໄດ້ຂຸດຂຸມປູກ ເຊິ່ງຈະຢອດແກ່ນປະມານ 3-4 ແກ່ນ, ແລ້ວກົບດິນເລັກນ້ອຍ ຈາກນັ້ນຫົດນໍ້າໃຫ້ຊຸ່ມ, ຫຼັງຈາກແກ່ນແຕກງອກກາຍເປັນເບ້ຍແລ້ວ ຖ້າຫາກຂຸມໃດຫາກເກີດຫຼາຍເກີນໄປຄວນມີການຖອນແຍກຕົ້ນທີ່ອ່ອນແອອອກ ເຊິ່ງສ່ວນໃຫຍ່ຈະຈື່ງໄວ້ 1-2 ຕົ້ນເທົ່ານັ້ນ ດັ່ງໃນຕາຕະລາງລຸ່ມນີ້.

**ຕາຕະລາງໄລຍະປູກຂອງພືດກະສິກໍາ**

| ລໍາດັບ | ຊະນິດພັນ | ໄລຍະປູກ (ຊມ) | ຈໍານວນແກ່ນຕໍ່ຂຸມ | ຈໍານວນຕົ້ນຕໍ່ຂຸມ | ໝາຍເຫດ |
|---|---|---|---|---|---|
| 1 | ສາລີ | 50 | 4-5 | 2 | |
| 2 | ຖົ່ວເຫຼືອງ | 20 | 4-5 | 4 | |
| 3 | ຖົ່ວຍາວ | 50 | 3-4 | 2-3 | |
| 4 | ຖົ່ວດິນ | 20-25 | 2-3 | 2-3 | |
| 5 | ຖົ່ວຂຽວ | 20 | 4-5 | 2-3 | |
| 6 | ໝາກງາ | 25-30 | 3-4 | 1-2 | |
| 7 | ຝ້າຍ | 50 | 5-7 | 1 | |



## ການປູກເບ້ຍໄມ້

ການປູກເບ້ຍໄມ້ແມ່ນການນຳເອົາເບ້ຍໄມ້ທີ່ກ້າໄວ້ມາລົງປູກໃນພື້ນທີ່, ເຊິ່ງເປັນວິທີທີ່ໄດ້ຮັບຄວາມນິຍົມເພາະເປັນວິທີທີ່ສາມາດຮັບປະກັນໄດ້ ແລະ ມີອັດຕາການລອດຕາຍສູງ, ການຍ້າຍປູກແມ່ນໄດ້ນຳເອົາເບ້ຍໄມ້ຊະນິດທີ່ໄດ້ຈາກການຂະຫຍາຍພັນແບບຕ່າງໆເຊັ່ນ: ຈາກການກ້າແກ່ນ, ການສຽບຍອດ, ການໂຫນງ່າ, ການທາບງ່າ ແລະ ການຕິດຕາ ເຊິ່ງສ່ວນໃຫຍ່ຈະເປັນໄມ້ໃຫ້ໝາກ ແລະ ໄມ້ເສດຖະກິດ. ເຊິ່ງມີລາຍລະອຽດລຸ່ມນີ້:







**ວັດສະດຸ ແລະ ອຸປະກອນ**

- ລົດໄຖ (ໃຊ້ໄຖພວນດິນ, ປັບໜ້າດິນ)
- ພ້າ (ໃຊ້ຖາງຫຍ້າ ແລະ ອະນາໄມພື້ນທີ່ກ່ອນການປູກ)
- ຈົກ, ສຽມ, ຊວ້ານ (ໃຊ້ຂຸດຂຸມ)
- ບົວຫົດນໍ້າ (ໃຊ້ຫົດນໍ້າຂຸມ)
- ໄມ້ຫຼັກ (ໃຊ້ຄໍ້າຢັນເບ້ຍໄມ້)
- ເຊືອກມັດ (ໃຊ້ມັດໄມ້ກັບເບ້ຍໄມ້)

**ຂັ້ນຕອນການປູກ**

**ການກະກຽມພື້ນທີ່ປູກ**

ກ່ອນທີ່ເຮົາຈະກຽມພື້ນທີ່ປູກຕົ້ນໄມ້ ຄວນຕັດສິນໃຈວ່າຈະປູກຕົ້ນໄມ້ເພື່ອຈຸດປະສົງຫຍັງ, ປູກຕົ້ນໄມ້ຊະນິດໃດ ແລະ ໄລຍະຫ່າງເທົ່າໃດ. ເຊິ່ງການກະກຽມພື້ນທີ່ການປູກເບ້ຍໄມ້ແມ່ນຈະຄ້າຍຄືກັບການກະກຽມພື້ນທີ່ໃນການປູກແກ່ນ ແຕ່ຕ່າງຢູ່ບ່ອນວ່າການປູກເບ້ຍໄມ້ໃນພື້ນປ່າຊຸດໂຊມເພື່ອຟື້ນຟູປ່າແມ່ນຈະບໍ່ມີການອະນາໄມໃຫ້ກ້ຽງ ພຽງແຕ່ອະນາໄມອ້ອມຂຸມບ່ອນທີ່ຈະປູກພືດເທົ່ານັ້ນ.

**ໝາຍເຫດ:** ການປູກຕົ້ນໄມ້ຄວນປະຕິບັດໃນຊ່ວງລະດູຝົນຈະໄດ້ຜົນດີທີ່ສຸດ.

## ການຄັດເລືອກເບ້ຍໄມ້

ການເລືອກເບ້ຍໄມ້ທີ່ຈະນຳມາປູກຄວນສັງເກດຢ່າງລະອຽດວ່າຕົ້ນເບ້ຍໄມ້ໄດ້ຄຸນນະພາບດີຫຼືບໍ່ ເຊິ່ງເບ້ຍໄມ້ທີ່ໄດ້ຄຸນນະພາບ (ມາດຕະຖານ) ຄວນມີຄຸນລັກສະນະດັ່ງນີ້:

ກ. ລຳຕົ້ນຕ້ອງມີຄວາມສູງລະຫວ່າງ 1-2 ເທົ່າຂອງຮາກ ຫຼື ຂະໜາດເບົ້າ

ຂ. ລຳຕົ້ນຊື່, ມີຄວາມແຂງແຮງ, ມີຮູບຮ່າງໄດ້ສັດສ່ວນ ແລະ ມີເຮືອນຍອດທຶບ

ຄ. ມີລະບົບຮາກກະຈາຍສົມບູນ ແລະ ມີຮາກຝອຍຫຼາຍ

ງ. ສຳລັບເບ້ຍໄມ້ທີ່ໄດ້ຈາກການທາບງ່າ, ສຽບຍອດ ແລະ ຕິດຕາ ບັນດາຂໍ້ຕໍ່ຕ້ອງເຊື່ອມຕິດກັນດີ

ຈ. ເປັນເບ້ຍໄມ້ທີ່ບໍ່ມີພະຍາດ ແລະ ແມງໄມ້ເຂົ້າລົບກວນ.

ສິ່ງສຳຄັນຄວນເລືອກຊະນິດເບ້ຍໄມ້ໃຫ້ເຂົ້າກັບສະພາບພື້ນທີ່ສາມາດປູກ ແລະ ຂະຫຍາຍຕົວດີໃນພື້ນທີ່ນັ້ນ.

## ການກຳນົດໄລຍະຫ່າງການປູກ

ການກຳນົດໄລຍະຫ່າງການປູກສ່ວນໃຫຍ່ໄລຍະຫ່າງການປູກເບ້ຍຈະມີ 2 ໄລຍະຄື: ໄລຍະຫ່າງລະຫວ່າງແຖວຕໍ່ແຖວ ແລະ ໄລຍະຫ່າງລະຫວ່າງຕົ້ນຕໍ່ຕົ້ນ ເຊິ່ງໝາຍເຖິງໄລຍະຫ່າງໃນແຖວດຽວກັນ ໂດຍສ່ວນໃຫຍ່ແມ່ນໄດ້ກຳນົດໄລຍະຫ່າງການປູກປະມານ 2x2 ແມັດ, 2x3 ແມັດ, 3x3 ແມັດ (ສຳລັບໄມ້ໃຫ້ໝາກ ແລະ ໄມ້ອຸດສາຫະກຳບາງປະເພດ) ແຕ່ທັງນີ້ການກຳນົດໄລຍະຫ່າງກໍ່ຂຶ້ນກັບຫຼາຍປັດໃຈເຊັ່ນ: ຊະນິດພັນໄມ້ຖ້າເປັນໄມ້ໃຫຍ່ໄວກໍ່ຄວນມີໄລຍະການປູກທີ່ກວ້າງກວ່າ ແຕ່ຖ້າເປັນໄມ້ໃຫຍ່ຊ້າກໍ່ຈະມີໄລຍະຫ່າງການປູກທີ່ແຄບກວ່າ.

## ການຂົນສົ່ງເບ້ຍໄມ້

ການຂົນສົ່ງເບ້ຍໄມ້ຄວນປະຕິບັດດ້ວຍຄວາມລະມັດລະວັງ ເພື່ອບໍ່ໃຫ້ເບ້ຍໄມ້ໄດ້ຮັບການກະທົບກະເທືອນຫຼາຍ ຖ້າເຄື່ອນຍ້າຍເບ້ຍໄມ້ໄປໃນເຂດທີ່ຫ່າງໄກ. ໃຫ້ຄຸມເບ້ຍໄມ້ດ້ວຍແສດຳເພື່ອປ້ອງກັນບໍ່ໃຫ້ມີລົມກະທົບໃສ່ຕົ້ນໄມ້ໂດຍກົງ. ອີກຢ່າງໜຶ່ງກໍ່ເປັນການປ້ອງກັນແສງແດດໃນເວລາເຄື່ອນຍ້າຍຕົ້ນໄມ້ບໍ່ໃຫ້ມັນແຫ່ວໃນເວລາຂົນສົ່ງ. ຫຼັງຈາກມາເຖິງສະຖານທີ່ໄວ້ກໍ່ຄວນນຳເບ້ຍໄມ້ໄວ້ບ່ອນຮົ່ມ ແລະ ຫົດນໍ້າຈົນກວ່າເບ້ຍໄມ້ນັ້ນຈະປັບຕົວເຂົ້າກັບສະພາບພື້ນທີ່ໄດ້ດີ ແລະ ແຂງແຮງດີແລ້ວຈຶ່ງນຳເອົາຕົ້ນໄມ້ນັ້ນໄປປູກໄດ້.

## ການປູກເບ້ຍໄມ້

ການປູກຕົ້ນໄມ້ແມ່ນຕ້ອງໄດ້ຂຸດຂຸມສາກ່ອນ ໂດຍຂຸມຈະມີຂະໜາດປະມານ 20x20 ຊັງຕີແມັດ ຫຼື ວ່າເລິກກວ່າ ນັ້ນແລ້ວແຕ່ຂະໜາດຂອງເບົ້າ, ຫຼັງຈາກນັ້ນໃຫ້ເອົາດິນຊັ້ນໜ້າ ຫຼື ຝຸ່ນກໍ່ໄດ້ ລົງຮອງພື້ນຂຸມກ່ອນ ຈາກນັ້ນຈຶ່ງເອົາ ເບົ້າໄມ້ລົງປູກ (ຢ່າລືມເອົາຖົງຢາງພຣາສຕິກອອກ) ເວລາປູກບໍ່ຄວນໃຫ້ເບົ້າຕົ້ນໄມ້ຢູ່ເລິກ ຫຼື ຕື້ນເກີນໄປຈາກນັ້ນໃຊ້ ດິນຖົມກົກເບ້ຍໄມ້ຢຽບດິນໃຫ້ແໜ້ນແລ້ວຈຶ່ງຫົດນ້ຳໃຫ້ຊຸ່ມ. ປົກກະຕິການປູກເບ້ຍໄມ້ຄວນປູກໃນຕອນແລງເພື່ອລົດ ບັນຫາແສງແດດແຮງເກີນໄປໃນຕອນສວາຍ ແລະ ຕົ້ນກ້າສາມາດຕັ້ງຕົວໃນມື້ອື່ນຕອນເຊົ້າ ແຕ່ຖ້າຫາກເບ້ຍໄມ້ ຍັງແຫ່ວຢູ່ຄວນເອົາຝົດໄມ້ ຫຼື ຜ້າແສນາຄຸມເພື່ອລົດການຄາຍນ້ຳ ແລະ ເຮັດໃຫ້ຕົ້ນໄມ້ຕັ້ງໂຕໄວຂຶ້ນ.



## ການປູກພືດດ້ວຍລຳຕົ້ນ

ການປູກດ້ວຍລຳຕົ້ນແມ່ນນຳໃຊ້ພາກສ່ວນລຳຕົ້ນພືດທີ່ສາມາດເກີດມີໜໍ່ ແລະ ຮາກຂຶ້ນມາໃໝ່ໄດ້ ນຳມາປູກໂດຍກົງ ເຊິ່ງຈະຕ້ອງໄດ້ມີການຕັດລຳຕົ້ນໃຫ້ເປັນທ່ອນໆ ມາຝັງລົງດິນໂດຍກົງ, ວິທີນີ້ສາມາດໃຊ້ກັບພືດທັນຍາຫານໄດ້ບາງ ຊະນິດເທົ່ານັ້ນເຊັ່ນ: ອ້ອຍ, ມັນຕົ້ນ ແລະ ອື່ນໆ. ນອກຈາກນີ້ຍັງສາມາດປູກເພື່ອສ້າງເປັນຫຼັກຮົ້ວປ້ອງກັນສັດລ້ຽງ ເຊັ່ນ: ຕົ້ນຂອງໝາກເຍົາ, ດອກຮັກ ຫຼື ດອກໄຂ່ປູ ແລະ ອື່ນໆ.

**ຂັ້ນຕອນການປູກ**

**ການກຽມພື້ນທີ່:** ການກະກຽມດິນຄວນເລີ່ມຈາກການອະນາໄມຕັດຫຍ້າ ກຳຈັດວັດສະພືດອອກ ຈາກນັ້ນຈຶ່ງໄຖພວນດິນ ເລິກປະມານ 20-30 ຊັງຕີແມັດ. ຕາກດິນປະໄວ້ປະມານ 3-7 ວັນ. ແລ້ວຈຶ່ງໄຖເປັນຮ່ອງໃຫ້ຫ່າງກັນປະມານ 1,5 ແມັດ ແລະ ໃຫ້ຮ່ອງເລິກປະມານ 15-25 ຊັງຕີແມັດ. ຈາກນັ້ນນຳລຳຕົ້ນປູກໃນຮ່ອງເຊິ່ງຫ່າງກັນປະມານ 1-1,5 ແມັດ.
**ການຄັດເລືອກຕົ້ນແມ່ພັນ:** ແມ່ນເລືອກຕົ້ນທີ່ແຂງແຮງ, ມີອາຍຸ 1 ປີ ຫຼື ຫຼາຍກວ່າຂຶ້ນກັບຊະນິດພັນພືດ. ເຊິ່ງຕ້ອງ ເປັນລຳຕົ້ນທີ່ອວບ ແລະ ເລີ່ມແຕກໜໍ່ກໍ່ຍິ່ງເປັນການດີ, ບໍ່ມີຮ່ອງຮອຍແມງໄມ້ ແລະ ພະຍາດ.

**ການປູກດ້ວຍລຳຕົ້ນ:** ການປູກລຳຕົ້ນແມ່ນຈະຕັດລຳຕົ້ນເປັນທ່ອນໆ ຍາວປະມານ 20-30 ຊັງຕີແມັດ ການປູກດ້ວຍລຳແມ່ນຈະສ້າງເປັນໜານ ຫຼື ຄັນຄູຍົກສູງຂຶ້ນ ປະມານ 15-20 ຊັງຕີແມັດ, ໜານກວ້າງປະມານ 60 ຊັງຕີແມັດ, ລວງຍາວບໍ່ຈຳກັດ ແລະ ມີໄລຍະຫ່າງກັນປະມານ 0.6-1 ແມັດ. ໃຊ້ຈົກຂຸດຮ່ອງກາງໜານລົງ 15-20 ຊັງຕີແມັດ, ແລ້ວນຳທ່ອນພັນລົງ ໃຫ້ຫ່າງກັນປະມານ 30-40 ຊັງຕີແມັດ. ແລ້ວເອົາດິນກົບທ່ອນພັນໃຫ້ທົ່ວ(ບໍ່ຄວນກົບດິນໜາເກີນໄປ) ຈາກນັ້ນຈຶ່ງຫົດນ້ຳໃຫ້ຊຸ່ມ.

**ໝາຍເຫດ:** ການປູກລຳຕົ້ນຄວນຄຳນຶງດັ່ງລຸ່ມນີ້:

ກ. ຖ້າດິນແຫ້ງ ຫຼື ດິນມີຄວາມຊຸ່ມຊື່ນໜ້ອຍໃຫ້ລຳຕົ້ນແມ່ພັນຂະໜານກັບພື້ນດິນ ແລະ ຖົມດິນພຽງເລັກນ້ອຍ ເຊິ່ງການວາງລຳຕົ້ນແມ່ພັນແບບນີ້ເພື່ອໃຫ້ຕົ້ນພັນມີໂອກາດໃຊ້ຄວາມຊຸ່ມຊື່ນໃນດິນໄດ້ຫຼາຍທີ່ສຸດ.

ຂ. ຖ້າດິນມີຄວາມຊຸ່ມຊື່ນປານກາງໃຫ້ປັກຕົ້ນພັນເປັນມູມ 45 ອົງສາກັບພື້ນດິນ.

ຄ. ຖ້າດິນມີຄວາມຊຸ່ມຊື່ນຫຼາຍໃຫ້ປັກຕົ້ນພັນເປັນມູມ 90 ອົງສາກັບພື້ນດິນເພື່ອປ້ອງກັນຕົ້ນພັນເນົ່າ.



**ອ້ອຍ ແລະ ມັນຕົ້ນ**

**ການປູກດ້ວຍຫົວ**

ການປູກດ້ວຍຫົວສ່ວນໃຫຍ່ແມ່ນໃຊ້ກັບພືດທີ່ເປັນຫົວໃນດິນເທົ່ານັ້ນເຊັ່ນ: ມັນຝຣັ່ງ, ມັນດ້າງ ເຜືອກ, ຜັກບົ່ວ, ຜັກທຽມ ແລະ ອື່ນໆ.

**ການກຽມພື້ນທີ່:** ແມ່ນຈະຄ້າຍຄືກັບການປູກພືດດ້ວຍລຳຕົ້ນ, ພື້ນທີ່ໆເໝາະສົມທີ່ສຸດຄວນເປັນດິນແຄມນ້ຳ ເຊິ່ງເປັນດິນຊາຍແກມຕົມ, ພືດຈະເລີນເຕີບໂຕດີ ແລະ ຈະໃຫ້ຜົນຜະລິດສູງ. ແຕ່ສຳລັບຫົວຂະໜາດນ້ອຍເຊັ່ນ: ຜັກບົ່ວ, ຜັກທຽມ ສາມາດປູກໃນພື້ນທີ່ນາຫຼັງການເກັບກ່ຽວເຂົ້າແລ້ວ ເຊິ່ງເຮົາພຽງແຕ່ອະນາໄມຕັດຕໍ່ກ້າ, ຂຸດຮ່ອງລະບາຍນ້ຳຕາມຂອບກໍ່ສາມາດປູກໄດ້ແລ້ວ.

**ການຄັດເລືອກແມ່ພັນ:** ຄວນເລືອກຫົວທີ່ແກ່ເຕັມທີ່, ມີລັກສະນະຕຶ່ງເຕັມດີ, ເປັນຫົວປານກາງ, ບໍ່ເປັນພະຍາດ, ບໍ່ມີຮອຍແມງໄມ້ກັດ ແລະ ຢູ່ໃນຊ່ວງໄລຍະປູກພໍດີ.

**ວິທີການປູກ:** ຄວນປູກໃນຊ່ວງທີ່ມີແສງແດດອ່ອນໆປູກໃນຕອນເຊົ້າ ແລະ ຕອນແລງເປັນຊ່ວງເວລາທີ່ເໝາະສົມແກ່ການປູກທີ່ສຸດ. ກ່ອນຈະນຳຫົວໄປປູກ ຄວນມີການກະຕຸ້ນຈາວກ່ອນ ໂດຍສ່ວນໃຫຍ່ການກະຕຸ້ນຈາວແມ່ນຈະຕັດປາຍຍອດອອກ ຈາກນັ້ນແຊ່ນ້ຳ 8-12 ຊົ່ວໂມງ (ສຳລັບຫົວຜັກທຽມ). ແຕ່ພືດບາງຊະນິດກໍ່ສາມາດນຳໄປປູກໄດ້ເລີຍເຊັ່ນ: ມັນຝຣັ່ງ. ການປູກແມ່ນຈະນຳຫົວປັກລົງດິນໂດຍກົງ ຫຼື ຂຸດຂຸມແລ້ວຝັງຫົວລົງ ແລ້ວຈຶ່ງກົບດິນເລັກນ້ອຍ, ສຳລັບຫົວນ້ອຍ (ຜັກບົ່ວຜັກທຽມ) ຄວນມີໄລຍະຫ່າງປະມານ 5-10 ຊັງຕີແມັດ ແລະ ຫົວຂະໜາດໃຫຍ່ (ມັນຝຣັ່ງ) ປະມານ 15-20 ຊັງຕີແມັດ, ຫຼັງຈາກປູກແລ້ວຄວນຫົດນ້ຳໃຫ້ຊຸ່ມ.





**ຫົວເຜືອກ, ຫົວຜັກທຽມ ແລະ ຫົວຂີງ**

## ການບົວລະບັດຮັກສາ

ພາຍຫຼັງການປູກແລ້ວ, ແມ່ນມີຄວາມສຳຄັນຫຼາຍທີ່ທ່ານຈະຕ້ອງໄດ້ບົວລະບັດຮັກສາພວກມັນເປັນປະຈຳທຸກໆວັນ. ມີຫຼາຍໜ້າວຽກທີ່ຈະຕ້ອງເຮັດໃນແຕ່ລະວັນຢ່າງເປັນປົກກະຕິ. ໂດຍການກວດກາ ແລະ ຕິດຕາມເບິ່ງຄວາມຕ້ອງການ ແລະ ການພັດທະນາຂອງພືດໃນສວນທຸກໆວັນ.

**ການເຕີບໃຫຍ່:** ພືດມີການພັດທະນາແນວໃດແດ່? ພວກມັນໃຫຍ່ຂຶ້ນຊ່ຳໃດ?

**ດິນ ແລະ ນ້ຳ:** ດິນແຫ້ງບໍ່? ພືດຕົ້ນໃດຕ້ອງການນ້ຳເພີ່ມບໍ່? ມີບ່ອນໃດປຽກໂພດບໍ່?

**ສຸຂະພາບ:** ພືດມີລັກສະນະສຸຂະພາບດີ ແລະ ແຂງແຮງບໍ່? ມີຕົ້ນໃດໃບຫ່ຽນບໍ່, ມີໃບຖືກກັດ, ໃບເຫຼືອງ ຫຼື ມີເຫັດລາບໍ່? ມີສັນຍານບົ່ງບອກກ່ຽວກັບສັດຕູພືດ ຫຼື ພະຍາດບໍ່? ມີພືດຕົ້ນໃດຫ່ຽວແຫ້ງ ຫຼື ບໍ່ເຕີບໃຫຍ່ບໍ່?

**ອະນາໄມ:** ມີວັດສະດຸໃດທີ່ຕິດເຊື້ອທີ່ຈຳເປັນຕ້ອງຈູດບໍ່? ມີຫຍ້າເກີດຂຶ້ນຫຼາຍບໍ່ທີ່ມາຍາດແຍ່ງອາຫານພືດ ຫຼື ປົກຫຸ້ມພືດ?

**ສິ່ງທີ່ມີຊີວິດໃນສວນ:** ອ້ອມແອ້ມບໍລິເວນຕົ້ນພືດ ມີແມງໄມ້ຫຍັງແດ່, ມີບົ້ງ ຫຼື ສັດ ອື່ນໆບໍ່? ມີການລະບາດຂອງສັດຕູພືດບໍ່? ແລະ ມີສິ່ງທີ່ມີຊີວິດທີ່ເປັນປະໂຫຍດບໍ່?

**ການຄ້ຳຊູ:** ມີອັນໃດແດ່ທີ່ຕ້ອງໄດ້ມັດໄວ້, ຂະຫຍາຍອອກ ຫຼື ຕັດອອກ?

**ໄລຍະຫ່າງ:** ມີພືດບ່ອນໃດທີ່ແອອັດໂພດ ແລະ ຕ້ອງໄດ້ແຍກອອກເພື່ອໃຫ້ບາງລົງບໍ່?

**ວັດຊະພືດ**: ມີຫຍ້າ ຫຼື ວັດຊະພືດ ເກີດຂຶ້ນໃນບໍລິເວນຕົ້ນພືດບໍ່?



## ລາຍການກວດກາປະຈຳວັນ:

**ການເຕີບໃຫຍ່:**

• ເມື່ອທ່ານເຂົ້າໄປໃນສວນ, ສິ່ງທີ່ສາມາດເຫັນໄດ້ຢ່າງຈະແຈ້ງທີ່ສຸດກໍ່ຄືການເຕີບໂຕຂອງພືດ. ພືດເຕີບໃຫຍ່ ແລະ ແຂງແຮງດີຄືການສົ່ງຂ່າວດີທີ່ທ່ານໄດ້ຮັບຈາກສວນໃນແຕ່ລະວັນ.

• ຕິດຕາມເບິ່ງພືດແຕ່ລະຕົ້ນຢ່າງໃກ້ຊິດ ແລະ ທຸກໆມື້ທ່ານຈະພົບວ່າມີການປ່ຽນແປງເກີດຂຶ້ນໃນສວນຂອງທ່ານ ເຊັ່ນ: ມີໃບໃໝ່ປົ່ງຂຶ້ນ, ມີການແຕກໜໍ່ຈໍ່ດອກ ແລະ ມີໝາກທີ່ເລີ່ມຈະສຸກ.

**ການຫົດນໍ້າ:**

• ນໍ້າມີຄວາມສຳຄັນຫຼາຍຕໍ່ພືດ. ແຕ່ບໍ່ໝາຍຄວາມວ່າພືດທຸກໆຊະນິດຈະຕ້ອງການນໍ້າໃນປະລິມານທີ່ເທົ່າກັນ. ການເຮັດໃຫ້ດິນຊຸ່ມຫຼາຍຢູ່ຕະຫຼອດເປັນການສົ່ງຜົນຮ້າຍກວ່າປະໃຫ້ດິນແຫ້ງໃນບາງຄັ້ງຄາວ. ດິນປຽກຈະດຶງດູດເຊື້ອເຫັດລາໄດ້ດີ ເຊິ່ງຈະສົ່ງຜົນກະທົບຕໍ່ຮາກຂອງພືດ ແລະ ມັນກໍ່ເປັນໄປບໍ່ໄດ້ທີ່ຈະສັງເກດເຫັນເຊື້ອລາເຫຼົ່ານີ້ແຕ່ທຳອິດເພື່ອຈະປ້ອງກັນພືດໄດ້. ສັນຍານທີ່ສາມາດສັງເກດເຫັນໄດ້ຢ່າງຊັດເຈນ ແມ່ນພືດຈະຫ່ຽວແຫ້ງ ເຖິງແມ່ນດິນຈະຊຸ່ມຊື່ນກໍ່ຕາມ. ໃນກໍລະນີນີ້ຕ້ອງທຳລາຍພືດທີ່ຖືກກະທົບ, ຈູດພືດທີ່ຕາຍຖິ້ມ, ຕື່ມປູນຂາວໃສ່ດິນ ແລະ ປູກພືດຕະກຸນໃໝ່ໃສ່ພື້ນທີ່ດັ່ງກ່າວແທນ.

• ໃນເວລາທີ່ພືດຍັງອ່ອນຍັງບໍ່ທັນອອກຮາກຫຼາຍ ແລະ ພວກມັນຕ້ອງການໃຫ້ຫົດນໍ້າມື້ລະສອງເທື່ອຕອນເຊົ້າ ແລະ ຕອນແລງ.

• ພືດທີ່ຍັງນ້ອຍມີຄວາມຕ້ອງການນໍ້າປະລິມານໜ້ອຍກວ່າພືດທີ່ໃຫຍ່ແລ້ວ.

• ພືດຊະນິດທີ່ມີຮາກຢັ່ງລົງເລິກ ຕ້ອງການນໍ້າໜ້ອຍກວ່າພືດຊະນິດທີ່ມີຮາກຕື້ນຫຼາຍ.

• ຄວນຫົດນໍ້າໃສ່ດິນບໍ່ແມ່ນຫົດໃສ່ພືດ, ໂດຍສະເພາະໃນເວລາຫົດນໍ້າຕອນແລງ ຕ້ອງລະວັງບໍ່ໃຫ້ໃບຂອງພືດປຽກນໍ້າຫຼາຍ ເພາະວ່າພວກມັນຈະປຽກໄປອີກຫຼາຍຊົ່ວໂມງ.

• ຢ່າຫົດນໍ້າພືດໃນຕອນສວຍ ເມັດນໍ້າມີລັກສະນະຄືກັບເລັນສ໌ແກ້ວ ແລະ ເວລາຕ້ອງກັບແສງຕາເວັນມັນຈະສະທ້ອນແສງໃສ່ພືດ ແລະ ເຮັດໃຫ້ໃບພືດໄໝ້ໄດ້.

• ບໍ່ສາມາດຮູ້ໄດ້ແນ່ນອນວ່າ ພືດຕ້ອງການນໍ້າໃນປະລິມານເທົ່າໃດຕໍ່ວັນ. ພືດແຕ່ລະຕົ້ນແຕກຕ່າງກັນ, ດິນແຕ່ລະບ່ອນແຕກຕ່າງກັນ ແລະ ແຕ່ລະວັນກໍ່ມີຄວາມແຕກຕ່າງກັນ ເຊັ່ນ: ອຸນຫະພູມ, ຄວາມຊຸ່ມຂອງອາກາດ, ແສງແດດ, ຂີ້ເຝື້ອ ແລະ ຝົນເປັນຕົ້ນ.

• ເມື່ອໃຫ້ນໍ້າແກ່ພືດໃນປະລິມານທີ່ເໝາະສົມ, ທ່ານຈຳເປັນຕ້ອງສ້າງຄວາມຮູ້ສຶກທີ່ແນ່ນອນໃຫ້ແກ່ພືດທີ່ທ່ານປູກ. ຖ້າພືດສະແດງໃຫ້ທ່ານເຫັນວ່າມັນມີລັກສະນະຫ່ຽວແຫ້ງໃນຕອນສວຍ, ສະແດງວ່າ ທ່ານຫົດນໍ້າບໍ່ພໍໃນຕອນເຊົ້າ. ກົງກັນຂ້າມ, ຖ້າວ່າຫຼັງຈາກສອງສາມວັນຜ່ານໄປດິນຍັງຄົງປຽກຫຼາຍຢູ່, ສະແດງວ່າທ່ານຫົດນໍ້າຫຼາຍໂພດ.

### ດິນ:

• ທ່ານສາມາດເສີມສ້າງຄວາມສົມບູນຂອງດິນດ້ວຍການປະສົມຝຸ່ນບົ່ມໃສ່, ເພື່ອຮັກສາໂຄງສ້າງທີ່ຟຸຜຸ່ຍຂອງດິນ, ການລະບາຍນໍ້າທີ່ດີ ແລະ ສະພາບດິນທີ່ແຂງແຮງດີ. ເຊິ່ງຕອນນີ້ກໍ່ເປັນໂອກາດທີ່ເໝາະສົມໃນການກຳຈັດວັດຊະພືດຕ່າງໆອອກຈາກຕົ້ນພືດ. ຫຼັງຈາກທີ່ປີ້ນດິນແລ້ວຫຍ້າສ່ວນຫຼາຍຈະຕາຍເພາະຮາກຂອງມັນບໍ່ຕິດກັບດິນ.

**ການກຳຈັດວັດຊະພືດ:**

• ຫຍ້າບາງຊະນິດຍັງບໍ່ຕາຍຫຼັງຈາກທີ່ປີ້ນດິນແລ້ວ. ພາຍຫຼັງໜຶ່ງອາທິດຕ້ອງຊອກເສຍຫຍ້າອອກອີກພະຍາຍາມຫຼົກຫຍ້າໃຫ້ໄດ້ທັງຮາກເພື່ອໝັ້ນໃຈວ່າພວກມັນຈະບໍ່ເກີດຂຶ້ນອີກ. ຖ້າມີຫຍ້າພຽງເລັກນ້ອຍທ່ານປະພວກມັນໄວ້ໃນສວນກໍ່ໄດ້ (ພວກມັນຈະຕາຍເມື່ອຖືກແສງແດດ). ຖ້າທ່ານຫຼົກຫຍ້າໄດ້ຫຼາຍ, ທ່ານກໍ່ເອົາໄປຖອກໃສ່ຄອກຝຸ່ນບົ່ມ.

**ສຸຂະພາບ ແລະ ອະນາໄມ:**

- ການອະນາໄມແມ່ນສຳຄັນຫຼາຍເພື່ອປ້ອງກັນການຕິດເຊື້ອຈາກໄວຣັສ໌, ແບັກທີເຣຍ ແລະ ເຊື້ອເຫັດລາ.
- ຖ້າທ່ານສັງເກດເຫັນພືດມີໃບ, ຍອດ ຫຼື ກ້ານຂາດຫັກ, ຕັດມັນຖິ້ມ ແລະ ເອົາໄປໃສ່ໃນຄອກຝຸ່ນ. ແຕ່ຖ້າວ່າເສດພືດທີ່ຕັດອອກຫາກວ່າມີພະຍາດ, ບໍ່ຕ້ອງເອົາພວກມັນໄປໃສ່ໃນຄອກຝຸ່ນບົ່ມ ແຕ່ຄວນເອົາໄປຈູດຖິ້ມ.
- ຫຍ້າມີຄວາມດຶງດູດຕໍ່ພະຍາດ ແລະ ສັດຕູພືດ, ຢ່າປ່ອຍໃຫ້ຫຍ້າຈຳນວນຫຼາຍປົກຄຸມພືດຂອງທ່ານ.
- ຖ້າສີຂອງພືດຕົ້ນໃດຫາກປ່ຽນຈາກສີຂຽວເປັນສີເຫຼືອງ ສະແດງວ່າມັນໄດ້ຮັບສານໄນໂຕຣເຈນບໍ່ພຽງພໍ ທ່ານຕ້ອງເອົາຝຸ່ນບົ່ມໄປເພີ່ມໃສ່ດິນບໍລິເວນພືດທີ່ມີບັນຫານັ້ນ ແລະ ນຳເອົານ້ຳສະກັດຊີວະພາບໄປຫົດໃສ່ພືດດັ່ງກ່າວໃຫ້ຖີ່ຂຶ້ນຕື່ມ.

**ສິ່ງທີ່ມີຊີວິດຢູ່ໃນສວນ:**

- ໃນສວນທຸກໆແຫ່ງ, ທ່ານຈະເຫັນສັດສ່ວນຫຼາຍແມ່ນແມງໄມ້.
- ແມງໄມ້ຫຼາຍຊະນິດບໍ່ສັງເກດເຫັນໄດ້ ເພາະວ່າພວກມັນມີຂະໜາດນ້ອຍຫຼາຍ (ເຊັ່ນວ່າ: ເພ້ຍ ແລະ ໄຮ) ພວກມັນຈະອາໄສຢູ່ຕາມກ້ອງໃບ (ໄຮ, ແມງມີ່ຂາວ), ອາໄສຢູ່ຕາມຂໍ້ປ້ອງ (ເພ້ຍ) ຫຼື ລີ້ໃນເວລາກາງເວັນ (ດ້ວງງວງຊ້າງ, ຫອຍທາກ, ແມງລີ້ນໝາ). ທ່ານຕ້ອງໄດ້ຝຶກຝົນ ແລະ ຜ່ານຜ່າປະສົບການເພື່ອກວດກາການລະບາດຂອງສັດຕູພືດໄດ້.
- ແຕ່ບໍ່ຕ້ອງກັງວົນການລະບາດຂອງສັດຕູພືດໃນໄລຍະເບື້ອງຕົ້ນພາຍໃນສວນ, ທ່ານແມ່ນບໍ່ມີຄວາມຈຳເປັນຫຍັງເລີຍທີ່ຈະຕ້ອງມີຄວາມຮູ້ສຶກເຈັບປວດ ແລະ ບໍ່ຈຳເປັນຕ້ອງຕັດສິນໃຈທີ່ຈະແກ້ໄຂບັນຫາດ້ວຍສານເຄມີໃນທັນທີ. ກ່ອນອື່ນໝົດ ຕ້ອງຊອກເບິ່ງອີກຄັ້ງວ່າມີແມງໄມ້ທີ່ມີປະໂຫຍດມາຕໍ່ສູ້ກັບພວກສັດຕູພືດເຫຼົ່ານັ້ນຫຼືຍັງ. ຖ້າທ່ານບໍ່ພົບແມງໄມ້ທີ່ມີປະໂຫຍດຈັກໂຕ, ລໍຖ້າເບິ່ງອີກຈັກ 2-3 ວັນ, ຖ້າຍັງບໍ່ພົບແມງໄມ້ທີ່ມີປະໂຫຍດຈັກໂຕອີກທ່ານກໍ່ສາມາດສີດຢາປາບສັດຕູພືດຊີວະພາບໃສ່ພືດຂອງທ່ານ (ເບິ່ງສູດການຜະລິດໃນຫົວຂໍ້ "ຢາປາບສັດຕູພືດຈາກທຳມະຊາດ").
- ຖ້າວ່າທ່ານຫາກເຫັນແມງໄມ້ທີ່ມີປະໂຫຍດ, ທ່ານມີສອງທາງເລືອກ:

ກ. ປ່ອຍໃຫ້ພວກແມງໄມ້ທີ່ມີປະໂຫຍດໄດ້ເຮັດໜ້າທີ່ຂອງພວກມັນ (ນີ້ຄືວິທີທີ່ມີຄວາມຍືນຍົງທີ່ສຸດ). ມັນອາດຈະຫຼຸດຈຳນວນຜົນຜະລິດຈາກພືດຂອງທ່ານລົງແຕ່ແມງໄມ້ທີ່ມີປະໂຫຍດຈະມ່ວນຊື່ນໃນການໄລ່ລ່າພວກສັດຕູພືດ ແລະ ພວກມັນກໍ່ຈະເພີ່ມປະຊາກອນຂອງແມງໄມ້ທີ່ມີປະໂຫຍດຂຶ້ນ, ພວກມັນກໍ່ຈະກາຍເປັນກຳລັງປ້ອງກັນບໍ່ໃຫ້ເກີດບັນຫາການລະບາດຂອງສັດຕູພືດທີ່ຮ້າຍແຮງໃນອະນາຄົດຢ່າງມີປະສິດທິຜົນ ນີ້ຄືວິທີທີ່ຖືກ ແລະ ແນະນຳໃຫ້ປະຕິບັດຫຼາຍທີ່ສຸດ.

ຂ. ສີດພົ່ນຢາປາບສັດຕູພືດທີ່ເຮັດຈາກທຳມະຊາດເພື່ອຮັກສາຜົນຜະລິດຂອງທ່ານ. ແຕ່ຕ້ອງເຂົ້າໃຈວ່າຢາປາບສັດຕູພືດຈະຂ້າທັງສັດຕູພືດ ແລະ ແມງໄມ້ທີ່ມີປະໂຫຍດ.

**ໄລຍະຫ່າງ:**

- ພືດທີ່ເຕີບໂຕໃນສະພາບທີ່ມີໄລຍະຫ່າງແຄບໂພດຈະກໍ່ໃຫ້ເກີດມີຫຼາຍບັນຫາ. ລວມທັງການຍາດຊີງທາດອາຫານ, ນ້ຳ, ພື້ນທີ່ສຳລັບໃບ ແລະ ຮາກ. ທັງໝົດເຫຼົ່ານີ້ຈະສົ່ງຜົນໃຫ້ພືດຂອງທ່ານອ່ອນແອ, ເຊິ່ງເວລາຫົດນ້ຳພືດທີ່ແອອັດກໍ່ຈະໃຊ້ເວລາຫຼາຍກວ່າ ເພື່ອຈະໃຫ້ໃບກັບມາແຫ້ງອີກຄັ້ງ. ເມື່ອພືດມີຄວາມອ່ອນແອກໍ່ຈະດຶງດູດສັດຕູພືດຫຼາຍກວ່າ ແລະ ໃບທີ່ປຽກກໍ່ຈະຕິດເຊື້ອຈາກເຊື້ອລາ ແລະ ແບັກເທີເຣຍໄດ້ງ່າຍ.

# ຝຸ່ນບົ່ມ ແລະ ການຄຸມດິນ

## ການເຮັດຝຸ່ນບົ່ມ

ຝຸ່ນບົ່ມແມ່ນສ່ວນປະກອບຂອງທຳມະຊາດທີ່ມີລາຄາຖືກທີ່ສຸດ ການໃຊ້ຝຸ່ນບົ່ມແມ່ນງ່າຍດາຍ. ເປັນວິທີທີ່ຈະຮັກສາສວນໃຫ້ມີສຸຂະພາບແຂງແຮງ. ສະໜອງສານອາຫານທີ່ສຳຄັນໃຫ້ແກ່ພືດ ແລະ ຍັງປັບປຸງດິນໂດຍການຮັກສານ້ຳ, ອາກາດໃນດິນຊ່ວຍໃຫ້ຮາກຂອງພືດຫາຍໃຈສະດວກ. ຊ່ວຍກະຕຸ້ນການເຮັດວຽກຂອງແບັກທີເຣຍ. ວິທີທີ່ດີທີ່ສຸດໃນການໃສ່ຝຸ່ນກໍ່ຄື ປະສົມຝຸ່ນໃສ່ກັບໜ້າດິນສ່ວນເທິງສຸດ ໜາປະມານ 20-30 ຊັງຕີແມັດ. ແຕ່ທ່ານກໍ່ສາມາດນຳໃຊ້ຝຸ່ນເພື່ອປົກໜານຜັກກໍ່ໄດ້. ການປົກໜານໃຫ້ໜາຢ່າງໜ້ອຍ 5 ຊັງຕີແມັດ. ເຮັດເປັນຊັ້ນໆຂອງຝຸ່ນແຫ້ງປົກເທິງໜ້າດິນເພື່ອຮັກສາຄວາມຊຸ່ມ, ປ້ອງກັນບໍ່ໃຫ້ຫຍ້າຂຶ້ນໃນສວນ.



**ສ່ວນປະກອບຂອງຝຸ່ນບົ່ມ:**

ສິ່ງເສດເຫຼືອສີຂຽວຈໍານວນ 50% ສິ່ງເສດເຫຼືອສີນໍ້າຕານຈໍານວນ 50%:

| | | | |
|---|---|---|---|
| o | ຫຍ້າ ແລະ ວັດຊະພືດອື່ນໆ | o | ເຈ້ຍ |
| o | ເສດຜັກຈາກເຮືອນຄົວ | o | ເຈ້ຍແຂງ |
| o | ອາຈົມຂອງສັດ (ຂີ້ໄກ່, ຂີ້ຄວາຍ ແລະ ອື່ນໆ) | o | ກາບໄມ້ |
| o | ຂົນສັດ | o | ເຟືອງ ແລະ ແກບ |
| o | ກາກກາເຟບົດ | o | ໃບໄມ້ແຫ້ງ, ດິນ |

ຈົ່ງລະມັດລະວັງ, ຢ່າປົນສິ່ງທີ່ທ່ານບໍ່ຕ້ອງການເອົາໄປລົງໃນກອງບົ່ມຝຸ່ນ. ຫ້າມປົນອາຫານທີ່ປຸງແຕ່ງສຸກແລ້ວ (ລວມທັງຊີ້ນ ແລະ ປາ), ເນື້ອໄມ້ຂະໜາດໃຫຍ່, ຢາງ, ເຫຼັກ, ແກ້ວ, ຜ້ານິລົງ ຫຼື ໄຍສັງເຄາະຕ່າງໆ.

**ວິທີເຮັດຝຸ່ນບົ່ມ:**

• ເຮັດເປັນຊັ້ນທັບຊ້ອນກັນ ເຊິ່ງແຕ່ລະຊັ້ນມີຄວາມສູງ 20-30 ຊັງຕີແມັດ (ສິ່ງເສດເຫຼືອທີ່ເປັນສີນໍ້າຕານໜຶ່ງຊັ້ນ, ດິນປົນກັບຂີ້ເປັດ, ຂີ້ໄກ່, ຂີ້ຄວາຍ ຫຼື ຂີ້ສັດອື່ນໆໜຶ່ງຊັ້ນ, ສິ່ງເສດເຫຼືອສີຂຽວໜຶ່ງຊັ້ນ ແລະ ເຮັດຄືນແບບເກົ່າໄປເລື້ອຍໆ).

• ເຕີມນໍ້າສະກັດຊີວະພາບລົງໄປເພື່ອຊ່ວຍກະຕຸ້ນການຍ່ອຍສະຫຼາຍຂອງອິງຄະທາດຕ່າງໆ. ປະສົມນໍ້າສະກັດຊີວະພາບປະມານ 10 ຊີຊີ ກັບນໍ້າ 10 ລິດ. ຖອກເຕີມໃສ່ກອງຝຸ່ນບົ່ມທຸກໆສອງອາທິດ.

• ຮັກສາຝຸ່ນບົ່ມໄວ້ໃນບ່ອນທີ່ຮົ່ມ ແລະ ແຫ້ງເຊັ່ນ: ເກັບຮັກສາໄວ້ບໍລິເວນທີ່ບັນຈຸຝຸ່ນເຊິ່ງອ້ອມດ້ວຍຮົ້ວໄມ້ໄຜ່ ແລະ ມຸງຫຼັງຄາ.

• ປີ້ນກອງຝຸ່ນບົ່ມສີ່ຄັ້ງຕໍ່ເດືອນ ແລະ ເຕີມນໍ້າໃສ່ເລັກນ້ອຍເວລາປີ້ນກອງຝຸ່ນບົ່ມ, ພະຍາຍາມຮັກສາຄວາມຊຸ່ມຂອງກອງຝຸ່ນແຕ່ບໍ່ໃຫ້ມັນປຽກ, ຝຸ່ນບົ່ມທີ່ດີຈະບໍ່ມີກິ່ນເໝັນ, ຖ້າຮູ້ສຶກວ່າມັນມີກິ່ນເໝັນແຮງສະແດງວ່າມັນປຽກໂພດຕ້ອງປີ້ນຫຼາຍເທື່ອຂຶ້ນຕື່ມ.

• ຕາມທໍາມະດາການເຮັດຝຸ່ນບົ່ມຈະໃຊ້ເວລາປະມານສາມເດືອນ ເພື່ອພ້ອມສໍາລັບເອົາໄປນໍາໃຊ້ໄດ້.

• ຕ້ອງນໍາໃຊ້ພຽງແຕ່ຝຸ່ນບົ່ມທີ່ບົ່ມແລ້ວເທົ່ານັ້ນ ຝຸ່ນບົ່ມທີ່ບົ່ມແລ້ວຈະມີໂຄງສ້າງຂອງອົງປະກອບຕ່າງໆທີ່ສອດຄ່ອງ ແລະ ກົມກືນກັນ, ມີກິ່ນດິນທີ່ດີ ແລະ ເມັດພືດທໍາມະຊາດຈະເລີ່ມແຕກໜໍ່.

**ວິທີນໍາໃຊ້ຝຸ່ນບົ່ມ:**

• ໃຊ້ປົກຄຸມ: ວາງອ້ອມຕົ້ນພືດເຮັດເປັນຊັ້ນໜາປະມານ 1 ຊັງຕີແມັດ ເພື່ອຮັກສາຄວາມຊຸ່ມຊື່ນຂອງດິນ

• ໃຊ້ປະສົມເປັນດິນປູກ: ປະສົມໜຶ່ງສ່ວນຂອງຝຸ່ນບົ່ມກັບດິນຊັ້ນເທິງສອງສ່ວນ ເພື່ອໃຫ້ໄດ້ດິນປູກທີ່ດີ.

• ໃຊ້ເພື່ອປັບປຸງດິນ: ໃສ່ຝຸ່ນບົ່ມໃນໜານຜັກຕ່າງໆ ເພື່ອປັບປຸງຄຸນນະພາບຂອງດິນ.

**ການຄຸມດິນ**

**ການຄຸມດິນ** ແມ່ນວິທີໜຶ່ງທີ່ສາມາດຮັກສາຄວາມຊຸ່ມຊື່ນໃນດິນໄດ້ດີທີ່ສຸດ ແລະ ຍັງປະຢັດຄ່າໃຊ້ຈ່າຍໄດ້ຫຼາຍອີກໂດຍການໃຊ້ວັດສະດຸຕ່າງໆຈາກທໍາມະຊາດມາຄຸມດິນເພື່ອເກັບຮັກສາດິນ ແລະ ນໍ້າເຊັ່ນ: ເສດຊາກພືດ, ໃບໄມ້, ເຟືອງເຂົ້າ ຫຼື ວັດສະດຸອື່ນໆ. ການຄຸມດິນດ້ວຍວິທີຕ່າງໆທີ່ກ່າວມານັ້ນ ແມ່ນສາມາດຫຼຸດຜ່ອນປະລິມານນໍ້າທີ່ໄຫຼອອກຈາກຕົ້ນພືດ, ຫຼຸດຜ່ອນການສູນເສຍດິນ, ຊ່ວຍຄວບຄຸມວັດສະພືດ, ຄວບຄຸມອຸນຫະພູມຂອງດິນ, ຊ່ວຍເພີ່ມອິນຊີວັດຖຸແກ່ດິນ ແລະ ຫຼຸດການລະເຫີຍນໍ້າຈາກໜ້າດິນເຮັດໃຫ້ໃນດິນເກັບຄວາມຊຸ່ມຊື່ນໄດ້ຍາວນານຂຶ້ນ.

**ວິທີການຄຸມດິນ:**

ການຄຸມດິນສາມາດເຮັດໄດ້ຫຼາຍວິທີແລ້ວແຕ່ຈຸດປະສົງຂອງຜູ້ໃຊ້ເຊັ່ນ:

- ໃຊ້ເພື່ອຄຸມພືດຜັກ: ສ່ວນໃຫຍ່ແມ່ນໃຊ້ເຟືອງເຂົ້າ, ຂີ້ແກບ, ໃບໄມ້ແຫ້ງ ແລະ ອື່ນໆມາປົກຄຸມດິນຕາມຄວາມເໝາະສົມກັບຜັກແຕ່ລະຊະນິດເຊັ່ນ: ຜັກຫຼຽມ, ຜັກບົ່ວ ແລະ ອື່ນໆ.
- ໃຊ້ເພື່ອຄຸມໄມ້ໃຫ້ໝາກ ຫຼື ໄມ້ຢືນຕົ້ນ: ສ່ວນໃຫຍ່ແມ່ນໃຊ້ຊາກພືດ, ໃບໄມ້ ແລະ ອື່ນໆ.

**ໝາຍເຫດ:** ທ່ານຍັງສາມາດໃຊ້ວັດສະດຸອື່ນໆໃນການຄຸມດິນ ຫຼື ຄຸມພືດຜັກຂອງທ່ານໄດ້ເຊັ່ນ: ຜ້າຢາງ, ເຈ້ຍແກັດ ແລະ ອື່ນໆ.



# ແມງໄມ້ ແລະ ພະຍາດ

## ແມງໄມ້

ພືດມີຄວາມດຶງດູດຕໍ່ແມງໄມ້ຕ່າງໆຫຼາຍຊະນິດ. ສັດຕູພືດບາງຊະນິດກໍ່ມາກິນ ຫຼື ດູດນ້ຳຫຼໍ່ລ້ຽງພືນລະປູກຂອງທ່ານ. ບາງຊະນິດກໍ່ນຳພະຍາດມາໃສ່ພືດ ແລະ ແຜ່ລະບາດການຕິດເຊື້ອໄປທົ່ວສວນ. ແຕ່ບໍ່ໝາຍຄວາມວ່າແມງໄມ້ທຸກໆຊະນິດຈະແມ່ນສັດຕູພືດທັງໝົດ ເພາະມີແມງໄມ້ບາງຊະນິດກໍ່ເປັນແມງໄມ້ທີ່ມີປະໂຫຍດ ເຊິ່ງພວກມັນຈະຊ່ວຍໃນການປະສົມເກສອນຂອງດອກໄມ້, ບາງຊະນິດກໍ່ຈະຂັບໄລ່ ແລະ ກິນແມງໄມ້ທີ່ເປັນສັດຕູພືດ. ການພະຍາຍາມຊອກຫາສັດຕູພືດໃນເຂດການຜະລິດຂອງທ່ານບໍ່ໝາຍຄວາມວ່າທ່ານຕ້ອງກັງວົນ, ສັດຕູພືດເຫຼົ່ານີ້ກໍ່ມີຄວາມດຶງດູດຕໍ່ແມງໄມ້ທີ່ມີປະໂຫຍດເຊັ່ນກັນ. ສະນັ້ນ ຕ້ອງຫຼີກເວັ້ນການໃຊ້ຢາປາບສັດຕູພືດ, ມັນເປັນສິ່ງທີ່ດີທີ່ສຸດທີ່ຈະຮັກສາຄວາມສົມດຸນລະຫວ່າງສັດຕູພືດ ແລະ ແມງໄມ້ທີ່ເປັນປະໂຫຍດ. ຕາມປົກກະຕິໃນຊ່ວງໄລຍະທຳອິດຂອງການທຳການຜະລິດ, ສັດຕູພືດຈະແຜ່ຂະຫຍາຍໄວກວ່ານັກລ່າຂອງມັນເຊິ່ງແມ່ນແມງໄມ້ທີ່ກິນສັດຕູພືດເປັນອາຫານ. ຈາກນັ້ນພວກມັນກໍ່ຈະກາຍເປັນບັນຫາໃນການຕິດເຊື້ອທີ່ຮຸນແຮງ ແລະ ທ່ານອາດຈະຈຳເປັນຕ້ອງຕໍ່ສູ້ກັບພວກມັນດ້ວຍການນຳໃຊ້ຢາປາບສັດຕູພືດທີ່ເຮັດຈາກທຳມະຊາດ. ໃນບາງກໍລະນີທ່ານອາດຈະພົບທັງສັດຕູພືດ ແລະ ແມງໄມ້ທີ່ເປັນປະໂຫຍດຢູ່ພືນລະປູກຂອງທ່ານພ້ອມກັນ, ເຊິ່ງມັນເປັນການດີທີ່ສຸດທີ່ຈະປ່ອຍໃຫ້ແມງໄມ້ທີ່ເປັນນັກລ່າໄດ້ເຮັດໜ້າທີ່ຂອງຕົນເອງ. ວິທີນີ້ຈະເປັນການຮັກສາວົງຈອນຂອງລະບົບນິເວດ ແລະ ກໍ່ເປັນການຫຼຸດພາລະຂອງທ່ານ ສິ່ງທີ່ທ່ານຄວນຈະເຮັດກໍ່ຄືໝັ່ນສັງເກດເບິ່ງຄວາມສົມດຸນລະຫວ່າງສັດຕູພືດ ແລະ ແມງໄມ້ທີ່ເປັນປະໂຫຍດ.

## ສັດຕູພືດທົ່ວໄປ



### ແມງລົ້ນໝາ ແລະ ຫອຍທາກ

ສັດທັງສອງຊະນິດນີ້ມີຮ່າງກາຍທີ່ເມືອກ ແລະ ອ່ອນນຸ້ມ. ຫອຍທາກຈະມີເປືອກຫຸ້ມ ແຕ່ແມງລົ້ນໝາບໍ່ມີ. ພວກມັນມັກກິນເບ້ຍ ແລະ ໃບອ່ອນຂອງພືດ. ເນື່ອງຈາກວ່າພວກມັນມັກເຄື່ອນໄຫວກາງຄືນ, ສະນັ້ນການເຄື່ອນທີ່ຂອງພວກມັນສາມາດຕິດຕາມໄດ້ຈາກຮອຍ ທາງທີ່ເປັນສີຄ້າຍຄືສີນ້ຳເງິນທີ່ພວກມັນປະໄວ້. ວິທີດີທີ່ສຸດທີ່ຈະຈັດການກັບສັດຕູພືດພວກນີ້ກໍ່ຄືຄວບຄຸມໂດຍນຳໃຊ້ວິທີທາງທຳມະຊາດ. ສັດພວກນີ້ມັກເບຍ, ຖ້າທ່ານເອົາຈານ ແລະ ຖອກເບຍໃສ່ປະມານ 2 ຊັງຕີແມັດ ແລ້ວເອົາໄປວາງໄວ້, ໃນຕອນເຊົ້າທ່ານຈະເຫັນພວກມັນຈຳນວນຫຼາຍໄຕເຂົ້າມາຢູ່ໃນຈານເບຍ ແລະ ທ່ານກໍ່ສາມາດກຳຈັດພວກມັນຢ່າງສະບາຍ.



### ບົ້ງ

ບົ້ງເປັນຕົວອ່ອນ ຫຼື ໜອນຂອງແມງກະເບື້ອ ແລະ ແມງເມົ່າ. ບົ້ງຈະສ້າງ "ຮອຍ" ຫຼື ເສັ້ນທາງນ້ອຍເວລາພວກມັນຄານ. ໂດຍປົກກະຕິແລ້ວ, ຈະພົບບົ້ງໃນຜັກກະລໍ່າປີ ເຊິ່ງພວກມັນຈະກັດກິນໃບກະລໍ່າປີ. ທ່ານສາມາດຈັບບົ້ງໄດ້ດ້ວຍມືຢ່າງງ່າຍດາຍ ແລະ ປ່ອຍມັນກັບຄືນສູ່ທຳມະຊາດທີ່ຢູ່ຫ່າງໄກຈາກສວນຂອງທ່ານ. ລະມັດລະວັງໃນເວລາຈັບບົ້ງເພາະມີບົ້ງບາງຊະນິດມີຂົນທີ່ເປັນພິດ, ສະນັ້ນຄວນໃຊ້ອຸປະກອນຊ່ວຍ ແລະບໍ່ໃຫ້ຈັບພວກມັນໂດຍກົງ.



**ແມງງວງຊ້າງ**

ແມງງວງຊ້າງມີລັກສະນະສະເພາະຄືມີດັງໂຄ້ງຍາວ. ມີລຳຕົວຍາວປະມານ 1 ຊັງຕີແມັດ ແລະ ເປັນສີນ້ຳຕານປົນສີເຖົ່າ. ຕົວອ່ອນຈະມີຮູບຮ່າງຄືແມງລົ້ນໝາ, ພວກມັນຈະກິນໃບ, ຮາກ ແລະ ຍອດຂອງພືດໃຫ້ເປັນຮູ. ແມງງວງຊ້າງ ຈະຫາກິນຕອນກາງຄືນ ແລະ ນອນໃນດິນຕອນກາງເວັນລັກສະນະການທຳລາຍຂອງແມງງວງຊ້າງ ແລະ ບົ້ງຈະຄ້າຍຄືກັນການກຳຈັດແມງງວງຊ້າງຂ້ອນຂ້າງຍາກ. ວິທີໜຶ່ງແມ່ນເອົາໂຖທີ່ບັນຈຸເສດພືດຜັກປອດສານພິດ ແລະ ດິນວາງໃສ່ໂດຍປີ້ນຫົວໂຖລົງລຸ່ມ. ວິທີນີ້ຈະດຶງດູດແມງງວງຊ້າງເຂົ້າມານອນໃນຍາມກາງເວັນແລ້ວທ່ານກໍ່ສາມາດກຳຈັດພວກມັນໄດ້.



**ເພ້ຍ**

ເພ້ຍສາມາດເປັນສີຂຽວ, ຂາວ ດຳ, ນ້ຳຕານ ແລະ ແມ່ນແຕ່ສີສົ້ມ, ເພ້ຍມີຄວາມຍາວປະມານ 2-5 ມີລີແມັດ. ພວກມັນຂະຫຍາຍຕົວໄວໃນສະພາບອາກາດທີ່ແຫ້ງ ແລະ ອົບອຸ່ນກາບຂອງເພ້ຍມີນ້ຳຕານເຊິ່ງດຶງດູດໃຫ້ເກີດມີເຊື້ອລາຢູ່ຕາມດ້ານໜ້າຂອງໃບພືດ, ມົດກໍ່ມັກກາບຂອງເພ້ຍທີ່ມີນ້ຳຕານນີ້ຄືກັນ, ມົດຈະປົກປ້ອງເພ້ຍເຫຼົ່ານີ້ຈາກແມງໄມ້ທີ່ມີປະໂຫຍດ ແລະ ມົດກໍ່ຈະຂົນຍ້າຍເພ້ຍໄປຫາພືດຕົ້ນອື່ນໆ. ຖ້າມີການລະບາດຂອງເພ້ຍພຽງເລັກນ້ອຍ, ທ່ານສາມາດສີດນ້ຳທີ່ປະສົມຢາໃສ່ ຫຼື ລ້າງບ່ອນທີ່ຕິດເຊື້ອອອກຈາກພືດດ້ວຍນ້ຳສະບູ.



**ແມງມີ່ຂາວ**

ແມງມີ່ຂາວເປັນແມງໄມ້ນ້ອຍສີຂາວເຊິ່ງມັກຈະພົບຢູ່ກ້ອງໃບຂອງພືດເທົ່ານັ້ນ, ຖ້າຖືກລົບກວນພວກມັນຈະບິນອອກໄປເປັນຝູງ, ວິທີທີ່ງ່າຍທີ່ສຸດໃນການກວດຫາພວກມັນແມ່ນທ່ານພຽງແຕ່ສັ່ນພືດຂອງທ່ານຄ່ອຍໆ ແລ້ວສັງເກດເບິ່ງວ່າຈະມີແມງມີ່ຂາວບິນອອກໄປບໍ່, ທ່ານສາມາດປັດແມງມີ່ຂາວອອກຈາກພືດດ້ວຍນິ້ວມືຂອງທ່ານ ແລະ ໝັ່ນກວດກາເບິ່ງພືດທຸກໆ 3-4 ວັນ. ຕົວອ່ອນຂອງແມງມີ່ຂາວຈະນ້ອຍຫຼາຍ ຈົນທ່ານບໍ່ສາມາດເບິ່ງເຫັນດ້ວຍຕາເປົ່າ. ຫຼັງຈາກນັ້ນປະມານ 3-4 ວັນ ພວກມັນຈຶ່ງຈະໃຫຍ່ໃນຂະໜາດທີ່ສາມາດເບິ່ງເຫັນໄດ້ ແລະ ທ່ານກໍ່ສາມາດກຳຈັດພວກມັນ.



**ເພ້ຍຫອຍ**

ເພ້ຍຫອຍມີຫຼາຍສາຍພັນ. ຕອນຍັງເປັນຕົວອ່ອນພວກມັນມັກຍ້າຍໄປມາຕະຫຼອດ, ສ່ວນໂຕໃຫຍ່ມັກພັກຢູ່ຕາມໃບ ແລະ ກ້ານຂອງພືດ, ບາງເທື່ອກໍ່ຢູ່ໂຕດຽວ. ບາງເທື່ອກໍ່ຢູ່ເປັນກຸ່ມໂດຍພື້ນຖານແລ້ວເພ້ຍຫອຍເປັນແມງໄມ້ປະເພດດູດນ້ຳຫຼໍ່ລ້ຽງຈາກພືດແລ້ວກໍ່ປະຄາບສີເຫຼືອງໄວ້ຕາມໃບຂອງພືດມັນເປັນແມງໄມ້ປະເພດກາບມີນ້ຳຕານທີ່ດຶງດູດເຊື້ອລາ ແລະ ມົດ ທ່ານສາມາດໃຊ້ແປງຂະນິດອ່ອນ, ສະບູ່ ແລະ ນ້ຳເຊັດຖູເພ້ຍຫອຍອອກຈາກພືດ. ຈົ່ງລະວັງບໍ່ໃຫ້ທຳລາຍໃບຂອງພືດ. ທ່ານຍັງສາມາດເຮັດສ່ວນປະສົມລະຫວ່າງນ້ຳທຳມະດາໜຶ່ງສ່ວນ ແລະ ເຫຼົ້າຂາວໜຶ່ງສ່ວນເຊັດເພ້ຍອອກ. ໃນກໍລະນີທີ່ມີການລະບາດທີ່ຮຸນແຮງ ທ່ານຈະຕ້ອງໃຊ້ນ້ຳປະສົມນີ້ເຊັດຖູຄືນອີກເທື່ອໜຶ່ງ.



**ເພ້ຍແປ້ງ**

ເພ້ຍແປ້ງຄືສັດຕູພືດທົ່ວໄປ, ທີ່ມີຮູບຊົງໄຂ່, ມີສີຂີ້ເຖົ່າຂາວອ່ອນນຸ້ມເບິ່ງຄືຍອງຝ້າຍ, ມີຄວາມຍາວປະມານ 2-5 ມີລີແມັດ. ສ່ວນໃຫຍ່ມັກພົບເຫັນພວກມັນຕາມກ້ອງໃບ ແລະ ພືດທີ່ປົ່ງໃໝ່. ຄືກັບເພ້ຍຫອຍ, ເພ້ຍແປ້ງຈະຄາຍນໍ້າຫວານອອກມາ. ໃນກໍລະນີທີ່ມີການລະບາດທີ່ບໍ່ຮ້າຍແຮງ, ທ່ານສາມາດໃຊ້ກ້ານສໍາລີປັດ ແລະ ທໍາຄວາມສະອາດບ່ອນທີ່ພືດຕິດເຊື້ອດ້ວຍສະບູ່ເພື່ອເອົາເພ້ຍແປ້ງທີ່ໃຫຍ່ອອກ. ໃນກໍລະນີທີ່ມີການລະບາດທີ່ຮຸນແຮງ, ທ່ານອາດຈະຕ້ອງເຮັດຊໍ້າອີກເທື່ອໜຶ່ງ.



**ໄຮແມງມຸມແດງ (ແມງແດງ)**

ໄຮແມງມຸມແດງສາມາດເບິ່ງເຫັນໄດ້ຍາກດ້ວຍສາຍຕາມະນຸດ (ມີຂະໜາດພຽງ 0.5-1 ມີລີແມັດ), ແຕ່ທ່ານສາມາດສັງເກດໄດ້ຈາກຈຸດທີ່ເປັນຄືແຜ່ນຟີມທີ່ຢູ່ຂ້າງລຸ່ມຂອງໃບພືດ ແລະ ຈຸດທີ່ມີສີເຫຼືອງຫາຂາວຢູ່ໜ້າໃບ. ພວກມັນຈະດູດນໍ້າຫຼໍ່ລ້ຽງ ແລະ ທໍາລາຍເຊວຂອງໃບພືດ. ນີ້ຈະສົ່ງຜົນໃຫ້ໃບເຫຼືອງ ແລະ ຕາຍ. ໄຮແມງມຸມແດງຕ້ອງການອາກາດແຫ້ງ ແລະ ຄວາມຊຸ່ມໜ້ອຍເພື່ອການແຜ່ພັນ. ໃນຕອນເຊົ້າຂອງລະດູແລ້ງ, ທ່ານສາມາດສີດພົ່ນນໍ້າໃສ່ປາຍ ແລະ ຂ້າງລຸ່ມຂອງໃບພືດເພື່ອປ້ອງກັນການລະບາດຂອງໄຮແມງມຸມແດງ.



**ເພ້ຍໄຟ**

ເພ້ຍໄຟແມ່ນແມງໄມ້ຊະນິດທີ່ມີປີກນ້ອຍໆ (ຍາວປະມານ 0,2-1 ມີລີແມັດ) ມີສີອອກຂີ້ເຖົ່າ. ຕາມປົກກະຕິພວກມັນມັກຈະຢູ່ຕາມກ້ອງໃບພືດ. ພວກມັນຈະດູດຜິວໜ້າຂອງໃບເພື່ອເອົານໍ້າຫຼໍ່ລ້ຽງ ເຊິ່ງເຮັດໃຫ້ເກີດມີບໍລິເວນສີນໍ້າເງິນທີ່ມີຈຸດນ້ອຍໆສີດໍາຢູ່ຕາມໃບພືດ ທ່ານສາມາດໃຊ້ຢາປາບສັດຕູພືດຈາກທໍາມະຊາດ ເຊັ່ນນໍ້າສະກັດຈາກຜັກຫຽມເພື່ອຈັດການກັບເພ້ຍໄຟ.



**ໜູ**

ໜູຄືສັດທໍາລາຍເພາະພວກມັນມັກກັດກິນຕົ້ນພືດ, ໝາກ ແລະ ແກ່ນ. ຫ້າມເອົາຊີ້ນ ຫຼື ປາທຸກຊະນິດໃສ່ໃນຄອກຝຸ່ນບົ່ມ ເພາະມັນດຶງດູດໜູ. ປິດ ແລະ ປ້ອງກັນຄອກຝຸ່ນບົ່ມໃຫ້ດີເພື່ອບໍ່ໃຫ້ໜູເຂົ້າໄດ້. ຖ້າມີໜູຫຼາຍ, ໃຊ້ແຮ້ວຈັບພວກມັນ. ຢ່າໃຊ້ສານເບື່ອໜູເພາະມັນຈະເປັນອັນຕະລາຍຕໍ່ພືດ ແລະ ຄົນ.



**ຕັກກະແຕນ**

ຕັກກະແຕນເປັນແມງໄມ້ທີ່ມີຫຼາຍສີ, ຫຼາຍຂະໜາດ ແລະ ຫຼາຍລັກສະນະທີ່ແຕກຕ່າງກັນ. ຕາມປົກກະຕິແລ້ວພວກມັນມັກຈະຢູ່ຕາມໃບພືດຕ່າງໆ. ພວກມັນຈະກັດກິນໃບຂອງພືດ ໂດຍສະເພາະແມ່ນໃບອ່ອນໃນຊ່ວງເວລາພືດກຳລັງຈະເລີນເຕີບໂຕ. ລັກສະນະການກິນຂອງແມງໄມ້ປະເພດນີ້ ຈະສັງເກດເຫັນຢູ່ບໍລິເວນໃບຂອງພືດຢ່າງຊັດເຈນ ເຊິ່ງຈະມີຮ່ອງຮອຍການກັດກິນຢູ່ຕາມໃບ ແລະກິ່ງກ້ານຂອງພືດເປັນຕົ້ນ.



**ໝັດຜັກ**

ໝັດຜັກເປັນແມງໄມ້ຂະໜາດນ້ອຍ ແຕ່ທ່ານສາມາດເບິ່ງດ້ວຍຕາເປົ່າໄດ້, ແມງໄມ້ຊະນິດນີ້ແມ່ນລະບາດຫຼາຍໃນພືດຜັກໃນຊ່ວງທີ່ພືດກຳລັງເຕີບໂຕ ແລະ ງອກງາມ. ລັກສະນະຂອງການທຳລາຍ ຈະມີລັກສະນະເຈາະເປັນຮູນ້ອຍໆຕາມໃບຜັກ, ຖ້າມີສິ່ງທີ່ມາກະທົບກັບໃບຜັກທີ່ພວກມັນອາໄສຢູ່ ພວກມັນກະບິນ ຫຼືກະໂດດໄປຢ່າງໄວວາ.



**ແມງຂີ້ໄຮ້ (ແມງເຕົ່າແດງ)**

ສ່ວນຫຼາຍມັກຈະລະບາດໃນພືດຜັກຕະກຸນໝາກແຕງ, ລັກສະນະການກິນຂອງພວກມັນຈະເປັນວົງຢູ່ບໍລິເວນແຜ່ນໃບຂອງພືດ, ທ່ານຈະພົບເຫັນພວກມັນຢູ່ຕາມໃບພືດຜັກເປັນຄູ່ຫຼື ເປັນຈຳນວນຫຼາຍ. ເມື່ອເວລາມີການເໜັງຕີງ ຫຼື ມີການເຄື່ອນໄຫວຕ່າງໆພວກມັນຈະບິນໜີໄປຢ່າງໄວວາບາງຄັ້ງກໍ່ຈະຕົກລົງພື້ນດິນ ແລະລີ້ຢູ່ກ້ອງໃບພືດ.

# ແມງໄມ້ທີ່ມີປະໂຫຍດ

ໂຕແກ່ ໂຕອ່ອນ




**ແມງເຕົ່າທອງ**

ແມງເຕົ່າທອງມີຄວາມຍາວ ປະມານ 5 ມີລີແມັດ. ເປັນແມງໄມ້ນ້ອຍທີ່ງາມ. ແມງເຕົ່າທອງມີຫຼາຍຊະນິດ. ມີສີສັນທີ່ຫຼາກຫຼາຍນັບແຕ່ສີເຫຼືອງ, ສົ້ມ, ແດງ ແລະ ດຳ. ພວກມັນກິນເພ້ຍ ແລະ ເພ້ຍຫອຍໂດຍສະເພາະແມ່ນຕົວອ່ອນຂອງແມງເຕົ່າທອງໄດ້ຜົນດີຫຼາຍໃນການກຳຈັດສັດຕູພືດເຫຼົ່ານີ້. ເມື່ອທ່ານພົບເຫັນຕົວອ່ອນຕາມພືດຂອງທ່ານຢ່າໃຊ້ຢາປາບສັດຕູພືດໃດໆເພາະພວກມັນຈະເຮັດໜ້າທີ່ຂອງພວກມັນເພື່ອທ່ານ.




**ແມງຊ້າງປີກໃສ**

ແມງຊ້າງປີກໃສທີ່ແກ່ເຕັມທີ່ຈະຍາວປະມານ 1.5 ຊັງຕີແມັດ, ສີຂຽວ ແລະ ປີກໃສ. ໂຕອ່ອນຂອງມັນຄ້າຍຄືສັດປະຫຼາດຂະໜາດນ້ອຍທັງໂຕແກ່ ແລະ ໂຕອ່ອນ ຈະລ່າຫາເພ້ຍຫອຍ, ເພ້ຍ, ໄຮ, ເພ້ຍແປ້ງ, ເພ້ຍໄຟ ແລະ ແມງມີ່ຂາວ. ໂຕອ່ອນຈະຫິວຕະຫຼອດ ແລະ ສາມາດກິນສັດຕູພືດໄດ້ເຖິງ 60 ໂຕໃນໜຶ່ງຊົ່ວໂມງ.




**ແມງວັນລາຍ**

ແມງວັນລາຍເປັນແມງໄມ້ທີ່ມີປະໂຫຍດຫຼາຍທີ່ສຸດໃນວົງຕະກຸນໃຫຍ່ບາງສາຍພັນຈະໂຕໃຫຍ່ ແລະ ຄ້າຍຄືເຜິ້ງ. ບາງສາຍພັນມີແອວກິ່ວ ແລະ ຄ້າຍຄືຕໍ່ໂຕແກ່ຈະບິນເວີ່ນເທິງອາກາດ ແລະ ກິນເກສອນ ແລະ ນ້ຳຫວານຈາກດອກໄມ້. ໂຕອ່ອນຈະມີປະສິດທິພາບຫຼາຍໃນການກິນເພ້ຍເປັນອາຫານ. ໂຕອ່ອນຂອງແມງວັນລາຍໜຶ່ງໂຕຈະກິນເພ້ຍໄດ້ປະມານ 900 ໂຕ ກ່ອນທີ່ມັນຈະແກ່ໂຕເຕັມທີ່.



**ແຕນບຽນ (ຕໍ່ນ້ອຍ)**

ແຕນຊະນິດນີ້ມີຫຼາຍສາຍພັນ. ພວກມັນຈະມີຂະໜາດຍາວຕັ້ງແຕ່ 1.5 ມີລີແມັດ ເຖິງ 50 ມີລີແມັດ, ແຕ່ສ່ວນໃຫຍ່ຈະມີລຳຕົວຈ່ອຍບາງ. ຕາມປົກກະຕິສີຂອງ ພວກມັນຈະແມ່ນສີດຳຫາສີນ້ຳຕານ. ບາງຊະນິດທີ່ຄ້າຍຄືຕໍ່ຈະມີລຳຕົວຈ່ອຍ, ແອວກິ່ວ ແລະ ປີກໃສພວກມັນສາມາດເປັນແມ່ກາຝາກຂອງເພ້ຍ ແລະ ບົ້ງ ໂດຍພວກມັນຈະວາງໄຂ່ໃສ່ຕາມລຳຕົວຂອງສັດຕູພືດເຫຼົ່ານັ້ນ. ເວລາທີ່ມັນຟັກ ໄຂ່ໂຕອ່ອນຂອງມັນກໍ່ຈະກິນສັດຕູພືດເປັນອາຫານ.



**ແມງຍ້າງຊີ້ນ (ແມງເພັດສະຄາດ)**

ໂຕແກ່ແມງຍ້າງຊີ້ນເຕີບໂຕເຕັມທີ່ຈະມີຂະໜາດຍາວເຖິງ 12 ມີລີແມັດ. ມີສີດຳ, ນ້ຳຕານ ຫຼື ຂຽວ. ມີຕາໃຫຍ່ຢູ່ເທິງຫົວທີ່ລີບນ້ອຍ ແລະ ມີຂາໜ້າທີ່ໃຫຍ່ມີຂົນ ເປັນໜາມເພື່ອຈັບເຫຍື່ອ. ພວກມັນຈະຈັບເພ້ຍ, ບົ້ງ, ແມງໄມ້ປີກແຂງ, ຈັກຈັ່ນ ແລະ ແມງອື່ນໆເປັນອາຫານ.



**ແມງກິນເພ້ຍ (ແມງດອກໄມ້ ຫຼື ແມງໂຈນສະຫຼັດ)**

ແມງກິນເພ້ຍ ເປັນແມງໄມ້ທີ່ມີຂະໜາດນ້ອຍຫຼາຍ, ຍາວປະມານ 3 ມີລີແມັດ. ທັງໂຕແກ່ ແລະ ໂຕອ່ອນ ກິນເພ້ຍໄຟ, ເພ້ຍ, ໄຮ ແລະ ບົ້ງເປັນອາຫານ. ສ່ວນໃຫຍ່ພວກມັນຈະມັກກິນເພ້ຍໄຟ, ໂຕໃຫຍ່ໜຶ່ງໂຕສາມາດກິນເພ້ຍໄຟ ໂຕອ່ອນໄດ້ເຖິງ 5-20 ໂຕຕໍ່ວັນ.



**ດ້ວງດິນ (ແມງດິນ)**

ດ້ວງດິນມີຫຼາຍຊະນິດ. ໂຕແກ່ມີຄວາມຍາວເຖິງ 2.5 ຊັງຕີແມັດ. ເຄື່ອນທີ່ໄວ ແລະ ມີສີດຳແກມຟ້າອ່ອນ. ຕອນກາງເວັນພວກມັນຈະລີ້ຢູ່ຕາມກ້ອນຫີນ ແລະ ວັດຖຸອື່ນໆ. ສ່ວນໃຫຍ່ຂອງພວກມັນເປັນສັດທີ່ກິນຊີ້ນ ໂດຍສະເພາະແມ່ນ ມັກກິນບົ້ງ ແລະ ຫອຍທາກ, ນອກນັ້ນພວກມັນຍັງກິນເພ້ຍ, ແມງຫາງດີດ ແລະ ໄຮເປັນອາຫານ.

## ພະຍາດ

ພືດກໍ່ສາມາດເຈັບປ່ວຍໄດ້ຄືກັນກັບມະນຸດ, ພະຍາດຂອງພືດມີຫຼາຍຊະນິດ, ພວກມັນສາມາດຕິດເຊື້ອຈາກແບັກທີເຣຍ, ຈາກໄວຣັສ໌ ຫຼື ຈາກເຊື້ອລາ. ບັນຫາທັງໝົດນີ້ຈະເກີດຂຶ້ນໃນເວລາທີ່ພືດອ່ອນແອ, ຕົວຢ່າງ: ພາຍຫຼັງທີ່ພືດແຕກໜໍ່ໃໝ່ໆ, ພາຍຫຼັງທີ່ເບ້ຍຖືກຍ້າຍໄປປູກໃໝ່ໆ ຫຼື ໃນເວລາທີ່ພວກມັນປຽກຊຸ່ມເກີນໄປ, ຮົ່ມໂພດ ຫຼື ຮ້ອນໂພດ ພະຍາດພືດເຫຼົ່ານີ້ຈະແຜ່ລາມຜ່ານນໍ້າ, ດິນ ຫຼື ຝຸ່ນ, ແມງໄມ້ ແລະ ເຄື່ອງມືໃນການເຮັດສວນ. ເພື່ອປ້ອງກັນການແຜ່ລາມຂອງພະຍາດ, ຕ້ອງຈູດ ຫຼື ທຳລາຍພືດທີ່ເປັນພະຍາດ (ຫ້າມເອົາພືດ ຫຼື ເສດພືດເຫຼົ່ານີ້ໄປໃສ່ຄອກຝຸ່ນບົ່ມ) ອະນາໄມ ຫຼື ຂ້າເຊື້ອເຄື່ອງມືເຮັດສວນຂອງທ່ານດ້ວຍເຫຼົ້າທີ່ແຮງ (ເຫຼົ້າຂາວລາວກໍ່ສາມາດໃຊ້ໄດ້ດີ), ໃຊ້ນໍ້າຈືດທົ່ວໄປໃນການຫົດພືດຜັກຂອງທ່ານ, ໃສ່ປູນຂາວໃນດິນບ່ອນທີ່ມີພືດທີ່ເປັນພະຍາດ ແລະ ໝູນວຽນບໍລິເວນປູກພືດໃນທຸກໆລະດູປູກ.





**ພືດທີ່ຕິດເຊື້ອຈາກເຊື້ອເຫັດລາ**

**ພືດທີ່ຕິດເຊື້ອຈາກ ແບັກທີເຣຍ**

**ພືດທີ່ຕິດເຊື້ອຈາກໄວຣັດສ໌**



## ຢາປາບສັດຕູພືດຈາກທຳມະຊາດ

ຢາປາບສັດຕູພືດຈາກທຳມະຊາດລ້ວນແຕ່ປອດສານພິດ, ລາຄາຖືກ ແລະ ມີປະສິດທິພາບໃນການຄວບຄຸມສັດຕູພືດ. ຢາປາບສັດຕູພືດຊະນິດນີ້ ສາມາດປຸງແຕ່ງໄດ້ຈາກສ່ວນປະກອບທີ່ຫຼາກຫຼາຍ ເຊິ່ງສາມາດຊອກຫາໄດ້ງ່າຍ. ການບໍ່ນຳໃຊ້ສານເຄມີແມ່ນເປັນຜົນດີຕໍ່ສິ່ງແວດລ້ອມຫຼາຍກວ່າ, ບໍ່ເສຍຄ່າໃຊ້ຈ່າຍ, ດີຕໍ່ຜູ້ປູກ, ຜູ້ບໍລິໂພກ ແລະ ຜູ້ເກັບກ່ຽວ. ເວລາທີ່ທ່ານສີດພົ່ນຢາປາບສັດຕູພືດຈາກທຳມະຊາດໃສ່ພືດຂອງທ່ານພະຍາຍາມ ສີດໃສ່ທາງລຸ່ມຂອງໃບ ເພາະມີສັດຕູພືດຈຳນວນຫຼາຍລີ້ອາໄສຢູ່ທີ່ນັ້ນ.

**ສະເປູ ໝາກເຜັດ / ຫົວກະທຽມ**

ສັດຕູພືດທີ່ຄວບຄຸມໄດ້: ບົ້ງ, ເພ້ຍໄຟ, ໄຣແມງມຸມແດງ, ແມງມີ່ຂາວ, ຕັກແຕນ, ມົດ ແລະ ປວກ. ສະເປູນີ້ໃຊ້ໄດ້ກັບສັດຕູພືດເກືອບທຸກໆຊະນິດຍົກເວັ້ນເພ້ຍ (ໃຫ້ນຳໃຊ້ສະເປູນ້ຳສະບູສຳລັບເພ້ຍ) ວິທີບົດໝາກເຜັດ 1 ກິໂລ ປົນກັບຫົວກະທຽມ 1 ກິໂລ ແລະ ໃບຢາສູບ 1-2 ໃບ. ເຕີມເຫຼົ້າຂາວ 1 ລິດໃສ່ ແລະ ປະໄວ້ 1 ອາທິດ. ຈາກນັ້ນໃຊ້ຜ້າຝ້າຍຕອງເອົານ້ຳຂອງມັນ. ຖ້າບໍ່ມີໃບຢາສູບ, ທ່ານສາມາດໃຊ້ຢາສູບ 2 ກອກແທນກໍ່ໄດ້.



**ສະເປູນ້ຳສະບູ**

**ສັດຕູພືດທີ່ຄວບຄຸມໄດ້:** ເພ້ຍ, ເພ້ຍໄຟ, ໄຣແມງມຸມແດງ, ແມງມີ່ຂາວ

**ວິທີປຸງແຕ່ງ**: ປະສົມນ້ຳສະບູ 30 ມີລີລິດ ກັບເຫຼົ້າຂາວ 30 ມີລີລິດ ແລະ ນ້ຳ 1 ລິດ ນ້ຳຢາສາມາດນຳໃຊ້ໄດ້ເລີຍຫຼັງຈາກປະສົມແລ້ວ. ສັ່ນຂວດນ້ຳຢາກ່ອນນຳໃຊ້.

**ສັດຕູພືດທີ່ຄວບຄຸມໄດ້:** ແມງລົ້ນໝາ ແລະ ຫອຍທາກ, ໜອນ, ໄຣແມງມຸມແດງ

**ວິທີປຸງແຕ່ງ**: ປະສົມເຫຼົ້າຂາວ 1 ລິດ ກັບນ້ຳໝາກນາວ (5%) 0,5 ລິດ, ນ້ຳສະກັດຊີວະພາບ 0,5 ລິດ ແລະ ກາກນ້ຳຕານ 0,5 ລິດ. ປະໄວ້ 1 ວັນ. ຢາທີ່ປະສົມແລ້ວສາມາດຮັກສາໄວ້ໄດ້ດົນເຖິງ 6 ເດືອນ ໃນບ່ອນມືດ ແລະ ແຫ້ງໃນການສີດພົ່ນໃຫ້ໃຊ້ນ້ຳຢານີ້ 10 ມີລີລິດ (1-2 ບ່ວງແກງ) ປົນກັບນ້ຳ 10 ລິດ.

## ການປູກພືດປະສົມປະສານ ແລະ ພືດໝູນວຽນ

### ການປູກພືດແບບປະສົມປະສານ

ການປູກພືດປະສົມປະສານ ແມ່ນທ່ານເອົາພືດທີ່ຕ່າງຊະນິດກັນມາປູກໃກ້ກັນ ເພື່ອເປັນການນຳໃຊ້ພື້ນທີ່ດິນໃຫ້ເກີດປະໂຫຍດສູງສຸດ ແລະ ເປັນການປ້ອງກັນໂຄງສ້າງຂອງດິນ ແລະ ຕົ້ນພືດ. ການທີ່ນຳເອົາພືດທີ່ມີຄວາມຕ້ອງການແຕກຕ່າງກັນມາປູກລວມກັນ ຈະຊ່ວຍຫຼຸດຜ່ອນການຍາດແຍ່ງກັນລະຫວ່າງພືດ.

ຂ້າງລຸ່ມນີ້ຄືບາງຂໍ້ແນະນຳ ຫຼື ແນວຄິດໃນການເອົາພືດທີ່ມີຄວາມຕ້ອງການແຕກຕ່າງກັນມາປູກລວມກັນ: ປູກພືດຕົ້ນສູງໃກ້ກັບພືດເຕ້ຍເຊັ່ນ: ປູກສາລີປົນກັບກະລໍ່າປີ, ປູກຜັກຄະນາ (ບຼັອກຄໍລີ) ປົນກັບຜັກທຽມ, ຜັກສະຫຼັດ, ປູກຕົ້ນໄມ້ກິນໝາກໃກ້ກັບພືດຜັກ.

- ປູກພືດປະເພດຮາກຍາວໃກ້ກັບພືດປະເພດຮາກສັ້ນເຊັ່ນ: ຕົ້ນຜັກອີ່ຮຸມ ຫຼື ຕົ້ນແຄກັບຜັກກະເພົາ, ຜັກອີ່ຕູ່.
- ປູກພືດປະເພດເຄືອໃກ້ກັບພືດຊະນິດຢັ່ງຜົນລົງດິນເຊັ່ນ: ປູກຖົ່ວຍາວ ຫຼື ສາລີໃກ້ກັບຜັກສະຫຼັດ, ຜັກບົ່ວ.
- ປູກພືດໃບກ້ວາງໃກ້ກັບພືດໃບແຄບເຊັ່ນ: ປູກກະຫຼໍ່າປີໃກ້ກັບກະຣິດ (ແຄຣອດ).

ການປູກພືດປະສົມປະສານ: ແມ່ນເພື່ອນຳໃຊ້ພື້ນທີ່ຫວ່າງຢ່າງເຕັມທີ່ ເພື່ອປົກປ້ອງໂຄງສ້າງໜ້າດິນ ແລະ ພືດຜັກ.



## ການປູກພືດໝູນວຽນ

ການປູກພືດໝູນວຽນມີຄວາມສຳຄັນຕໍ່ສຸຂະພາບຂອງເຂດທຳການຜະລິດ ແລະ ມັນກໍ່ງ່າຍໃນການປະຕິບັດ. ພືດແຕ່ລະຊະນິດຈະດູດຊຶມເອົາທາດອາຫານທີ່ແຕກຕ່າງກັນຈາກດິນ, ຈະດຶງດູດເອົາສັດຕູພືດ ແລະ ພະຍາດທີ່ແຕກຕ່າງກັນ. ໂດຍການໝູນວຽນພືດຊະນິດອື່ນມາປູກໃສ່ພື້ນທີ່ທຳການຜະລິດໃນແຕ່ລະດູການຜະລິດ, ສະນັ້ນທ່ານກໍ່ສາມາດປ້ອງກັນການຕິດເຊື້ອຊ້ຳຄືນຈາກສັດຕູພືດ, ພະຍາດແບບເກົ່າ ແລະ ກໍ່ຈະຮັກສາການພັດທະນາພືດໃຫ້ແຂງແຮງ. ພະຍາຍາມຫຼີກເວັ້ນການປູກພືດຕະກຸນດຽວກັນໃສ່ບ່ອນເກົ່າອີກຄັ້ງ. ບໍ່ຄວນປະໃຫ້ພື້ນທີ່ຫວ່າງເປົ່າ ເພາະວ່າສະພາບຂອງດິນຈະເຊື່ອມລົງຖ້າມັນຕ້ອງແສງແດດ ແລະ ຕາກຝົນຫຼາຍໂພດ. ເພາະສະນັ້ນ, ຄວນປູກພືດປະສົມກັນຊົ່ວຄາວໃນໄລຍະນີ້ເຊັ່ນ: ຖົ່ວ, ມັນດ້າງ ຫຼື ພືດສະໝຸນໄພຕ່າງໆ. ການປູກພືດເຫຼົ່ານີ້ຈະບໍ່ມີບັນຫາໃນເວລາມີຫຍ້າໃນສວນ. ໃນໄລຍະຕົ້ນຂອງການລິເລີ່ມລະດູການປູກໃໝ່, ກໍ່ສາມາດນຳໃຊ້ເສດພືດສີຂຽວເຫຼົ່ານີ້ໄປເຮັດຝຸ່ນບົ່ມ ແລະ ນ້ຳສະກັດຊີວະພາບ. ຫຼັງຈາກທີ່ອະນາໄມພື້ນທີ່ ແລະ ຕື່ມຝຸ່ນບົ່ມທີ່ເຫຼືອຈາກລະດູການປູກທີ່ຜ່ານມາໃສ່ພື້ນທີ່ແລ້ວ, ຄວນໄຖພວນດິນເລິກປະມານ 20-30 ຊັງຕີແມັດ ເພື່ອໃຫ້ຝຸ່ນບົ່ມທີ່ເຕີມໃສ່ໃໝ່ໄດ້ປົນເຂົ້າກັບດິນ.



## ການເກັບກ່ຽວຜົນຜະລິດ

ການເກັບກ່ຽວຄືເວລາແຫ່ງຄວາມມ່ວນຊື່ນເພາະທ່ານໄດ້ເກັບກ່ຽວເອົາໝາກຜົນຈາກສິ່ງທີ່ທ່ານໄດ້ເພາະປູກ ແລະ ບົວລະບັດຮັກສາມາໃນຊ່ວງເວລາຫຼາຍອາທິດ ແລະ ຫຼາຍເດືອນທີ່ຜ່ານມາ. ເຊິ່ງສິ່ງທີ່ເປັນໜ້າຊື່ນຊົມຍິນດີຂຶ້ນໄປອີກກໍ່ຄືທ່ານຈະພູມໃຈໃນຄວາມແຊບຊ້ອຍຂອງອາຫານທີ່ທ່ານປຸງແຕ່ງຈາກພືດພັນທັນຍາຫານ ແລະ ພືດສະໝຸນໄພຕ່າງໆຂອງທ່ານເອງ ມັນເປັນສິ່ງທີ່ສຳຄັນທີ່ຕ້ອງຮູ້ວ່າ ເວລາໃດຜົນລະປູກແຕ່ລະຊະນິດພ້ອມທີ່ຈະຖືກເກັບກ່ຽວເພື່ອທ່ານຈະໄດ້ເກັບກ່ຽວພວກມັນໃນເວລາທີ່ຖືກຕ້ອງ ແລະ ເໝາະສົມ. ຜົນລະປູກບາງຊະນິດຕ້ອງສຸກທີ່ຕົ້ນຂອງມັນໃນຂະນະທີ່ບາງຊະນິດສາມາດສຸກຢູ່ນອກຕົ້ນກໍ່ໄດ້.

ການເກັບກ່ຽວຕ້ອງເຮັດຢ່າງລະມັດລະວັງເພື່ອບໍ່ໃຫ້ຜົນລະປູກເສຍຫາຍ. ຄວນຄັດເລືອກເອົາສະເພາະແຕ່ຜົນຜະລິດທີ່ມີສະພາບສົມບູບເທົ່ານັ້ນເພື່ອເກັບຮັກສາໄວ້, ສ່ວນຜົນຜະລິດທີ່ເສຍຫາຍ ຫຼື ບໍ່ສົມບູນຕ້ອງຖືກນຳໃຊ້ທັນທີຫຼັງຈາກເກັບກ່ຽວ, ທ່ານສາມາດເອົາຜົນລະປູກທີ່ບໍ່ສົມບູນເຫຼົ່ານີ້ໄປໃສ່ຄອກຝຸ່ນບົ່ມ ຫຼື ເອົາໄປຜະລິດເປັນນ້ຳສະກັດຊີວະພາບກໍ່ໄດ້. ເວລາສຳລັບການເກັບກູ້ຜົນລະປູກທີ່ເໝາະສົມທີ່ສຸດແມ່ນໃນຕອນເຊົ້າທີ່ອາກາດຍັງເຢັນຢູ່. ຜັກ ແລະ ໝາກໄມ້ທີ່ເກັບກູ້ໃນເວລາອຸນຫະພູມເຢັນຈະສາມາດເກັບຮັກສາໄວ້ໄດ້ດົນກວ່າຈຳພວກທີ່ເກັບໃນເວລາອາກາດຮ້ອນ. ຕ້ອງໝັ່ນກວດກາເປັນປະຈຳເພື່ອຜົນລະປູກຈະຖືກເກັບກູ້ໃຫ້ທັນເວລາ ແລະ ກໍ່ຈະບໍ່ເປັນການປະໃຫ້ຜົນລະປູກສຸກເກີນໄປ ມັນເປັນສິ່ງສຳຄັນຫຼາຍໃນການເກັບແກ່ນແນວພັນຂອງພືດຜັກທຸກໆຊະນິດ ເພື່ອຈິ່ງແກ່ນແນວພັນໄວ້ສຳລັບລະດູການເພາະປູກຕໍ່ໄປ.



ຄວນຮັກສາພືດທີ່ແຂງແຮງດີປະມານ 2-3 ຕົ້ນໄວ້ໃນໜານ, ປ່ອຍໃຫ້ພວກມັນໃຫຍ່ຈົນອອກດອກ ແລະ ໃຫ້ແກ່ນ. ພາຍຫຼັງທີ່ດອກບານແລ້ວ, ຝັກຂອງແກ່ນໃນເບື້ອງຕົ້ນຈະເປັນສີຂຽວ ແລະ ມີລັກສະນະອ່ອນນຸ້ມຫຼາຍ. ສຳລັບການເກັບເອົາແກ່ນ ຫຼື ແນວພັນ, ຕ້ອງລໍຖ້າຈົນກວ່າຝັກກາຍເປັນສີນ້ຳຕານ ແລະ ແກ່ຂຶ້ນກ່ອນ. ຄວນເກັບກູ້ແກ່ນແນວພັນໃນຕອນສວຍເວລາທີ່ມັນແຫ້ງ ເພື່ອຫຼີກເວັ້ນບໍ່ໃຫ້ພວກມັນຂຶ້ນລາໃນເວລາເກັບຮັກສາ.

# ວິທີການສ້າງສວນກ້າເບ້ຍໄມ້

## ນິຍາມສວນກ້າເບ້ຍໄມ້

**ສວນກ້າແມ່ນຫຍັງ?**

ສວນກ້າແມ່ນບ່ອນອະນຸບານ, ຂະຫຍາຍພັນ ແລະ ບ່ອນເກັບລວບລວມພັນໄມ້ຫຼາກຫຼາຍຊະນິດມາເກັບໄວ້ບ່ອນດຽວກັນ. ໂດຍມີການບົວລະບັດຮັກສາເປັນຢ່າງດີ ເພື່ອໃຫ້ຕົ້ນໄມ້ມີຄວາມແຂງແຮງ ແລະ ສວຍງາມເພື່ອໄວ້ສຶກສາຄົ້ນຄວ້າ, ໄວ້ປູກປະດັບຕາມອາຄານ ຫຼື ຈັດຈຳໜ່າຍຕາມຫ້ອງຕະຫຼາດ ແລະ ອື່ນໆເປັນຕົ້ນ.



## ການຄັດເລືອກສະຖານທີ່ສ້າງສວນກ້າເບ້ຍໄມ້

ສະຖານທີ່ຈະສ້າງສວນກ້າເບ້ຍໄມ້ໃຫ້ເໝາະສົມນັ້ນ ຄວນເປັນພື້ນທີ່ຮາບພຽງດີບໍ່ລຸ່ມ ຫຼື ໂນນຈົນເກີນໄປ, ເປັນພື້ນທີ່ທີ່ຢູ່ໃກ້ກັບແຫຼ່ງນ້ຳ ຫຼື ມີລະບົບຊົນລະປະທານ, ບໍ່ມີນ້ຳຖ້ວມຂັງ, ມີເສັ້ນທາງ ເຂົ້າ-ອອກ ສະດວກສະບາຍໃນການປະຕິບັດໜ້າທີ່ວຽກງານຕ່າງໆ, ເປັນບ່ອນທີ່ໄດ້ຮັບແສງແດດພຽງພໍ ແລະ ສາມາດຖ່າຍເທອາກາດໄດ້ດີ ເພື່ອໃຫ້ເບ້ຍໄມ້ມີຄວາມແຂງແຮງ, ສາມາດຈະເລີນເຕີບໄດ້ດີ, ປາສະຈາກເຊື້ອພະຍາດ ແລະ ສັດຕູພືດຕ່າງໆອີກດ້ວຍ.

## ວິທີການສ້າງຕັ້ງສວນກ້າ

**ກ. ການກະກຽມພື້ນທີ່ສຳລັບການສ້າງສວນກ້າ:**

ສະພາບພື້ນທີ່ເໝາະສົມໃນການສ້າງເປັນສວນກ້າເບ້ຍໄມ້ນັ້ນຕ້ອງຮາບພຽງ ແລະ ສະໝ່ຳສະເໝີກັນ, ຖ້າພື້ນທີ່ມີຄວາມຄ້ອຍຊັນ ແມ່ນແນະນຳໃຫ້ໃຊ້ຫີນ ຫຼື ໄມ້ ເພື່ອສ້າງເປັນກຳແພງຕ້ານການເຊາະເຈື່ອນຂອງດິນ. ພື້ນທີ່ທີ່ຈະເຮັດສວນກ້າ ນັ້ນຄວນມີການຍົກລະດັບໜ້າດິນຂຶ້ນສູງປະມານ 20-30 ຊັງຕີແມັດ ເພື່ອໃຫ້ພື້ນທີ່ດັ່ງກ່າວສາມາດລະບາຍນ້ຳໄດ້ດີ, ເພື່ອຫຼີກລ້ຽງບັນຫານ້ຳຖ້ວມຂັງ, ການຕິດເຊື້ອພະຍາດໄດ້ງ່າຍ ແລະ ບັນຫາອື່ນໆທີ່ຕາມມາອີກດ້ວຍ.

**ຂ. ການກະກຽມອຸປະກອນໃນການສ້າງສວນກ້າ**

ວັດສະດຸໃນການສ້າງສວນກ້າປະກອບມີ:

- ໄມ້ເສົາ: ສາມາດເຮັດດ້ວຍເຫຼັກ, ໄມ້ແກນຫຼ້ອນ, ໄມ້ປ່ອງ ແລະ ອື່ນໆ
- ໂຄງຫຼັງຄາ: ສາມາດເຮັດດ້ວຍເຫຼັກ, ໄມ້ປ່ອງ ແລະ ອື່ນໆ
- ຫຼັງຄາ: ສາມາດມຸງດ້ວຍແສດຳ (50%-70%), ກະແຕະໄມ້ປ່ອງ, ໃບໄມ້ (ໃບພ້າວ, ໃບຕາວ ແລະ ອື່ນໆ)
- ໂຕະລຽນເບ້ຍໄມ້: ສາມາດເຮັດດ້ວຍເຫຼັກ, ໄມ້ແກນຫຼ້ອນ, ໄມ້ປ່ອງ ແລະ ອື່ນໆໃນກໍລະນີທີ່ຈະສ້າງເປັນສວນກ້າຊົ່ວຄາວບໍ່ຈຳເປັນມີໂຕະກໍ່ໄດ້

**ເຄື່ອງມືໃນການສ້າງສວນກ້າປະກອບມີ:**

- ພ້າ
- ຈົກ
- ຊວ້ານ
- ສຽມ
- ເຫຼັກລວດ ຫຼື ໄມ້ຕອກ, ເຫຼັກຕະປູ ແລະ ອື່ນໆ

**ຄ. ການສ້າງໂຄງເຮືອນສວນກ້າ**

ການສ້າງໂຄງເຮືອນສວນກ້າປະກອບມີຫຼາຍແບບ ແລະ ຫຼາຍວິທີຂຶ້ນກັບຈຸດປະສົງໃນການສ້າງ, ຂຶ້ນກັບງົບປະມານ ແລະ ອື່ນໆ ສ່ວນໃຫຍ່ແລ້ວຈະປະກອບມີ 3 ຮູບແບບຄື: ສວນກ້າແບບຖາວອນ, ສວນກ້າແບບເຄິ່ງຖາວອນ ແລະ ສວນກ້າແບບຊົ່ວຄາວ.

**ສວນກ້າແບບຖາວອນ**

ສວນກ້າຖາວອນ ແມ່ນສວນກ້າທີ່ສ້າງຂຶ້ນໂດຍມີຈຸດປະສົງເພື່ອເປັນບ່ອນຜະລິດ ແລະ ດູແລຮັກສາເບ້ຍໄມ້ທີ່ແນ່ນອນ ແລະ ມີອາຍຸການໃຊ້ງານຫຼາຍກວ່າ 6 ປີຂຶ້ນໄປ. ປົກກະຕິຈະມີຂະໜາດປານກາງປະມານ 10x20 ແມັດ (ຂຶ້ນກັບທຶງບປະມານ ແລະ ຈຳນວນເບ້ຍໄມ້), ມີຮູບແບບການສ້າງທີ່ໝັ້ນຄົງ, ເຊິ່ງໂຄງສ້າງທັງໝົດບໍ່ວ່າຈະເປັນເສົາ ຫຼື ໂຄງຫຼັງຄາຈະເຮັດດ້ວຍເຫຼັກ ຫຼື ໄມ້ແປຮູບກໍ່ໄດ້. ສ່ວນຝາອ້ອມສວນກ້າຈະໃຊ້ໄມ້ດັ້ງຕີອ້ອມແບບດົ້ງເວັ້ນດົ້ງເພື່ອປ້ອງກັນສັດລ້ຽງເຂົ້າມາທຳລາຍເບ້ຍໄມ້, ມີການສ້າງປະຕູທາງເຂົ້າ 3 ດ້ານຄື: ທາງໜ້າ, ທາງຂ້າງ ແລະ ທາງຫຼັງ, ຫຼັງຄາມຸງດ້ວຍແສດາ (50% ຫຼື 70%), ພາຍໃນສວນກ້າຈະສ້າງໂຕະທີ່ເຮັດດ້ວຍເຫຼັກ ຫຼື ໄມ້ແປຮູບເພື່ອລຽນເບ້ຍໄມ້ທີ່ຕ້ອງການດູແລຮັກສາເປັນພິເສດ, ພື້ນສວນກ້າປູດ້ວຍຫີນ, ດິນຈີ່ ຫຼື ຊີມັງ ແລະ ມີການເຮັດຮ່ອງລະບາຍນ້ຳ ເພື່ອຮັກສາຄວາມຊຸ່ມຊື່ນ ແລະ ລະບາຍນ້ຳໄດ້ດີຂຶ້ນ. ສວນກ້າແບບຖາວອນແບບນີ້ສ່ວນໃຫຍ່ແມ່ນສ້າງຂຶ້ນເພື່ອຜະລິດ, ດູແລຮັກສາພືດທີ່ຫາຍາກ ແລະ ມີຄຸນຄ່າທາງເສດຖະກິດ.



## ສວນກ້າແບບເຄິ່ງຖາວອນ

ສວນກ້າເຄິ່ງຖາວອນ ແມ່ນສ້າງຂຶ້ນເພື່ອເປັນບ່ອນຜະລິດ ແລະ ດູແລຮັກສາເບ້ຍໄມ້ໃນປະລິມານຫຼາຍເປັນແສນໆ ເບົ້າເພື່ອໃຊ້ໃນການປູກປ່າ ຫຼື ຈຳໜ່າຍຕາມຄວາມຕ້ອງການຂອງຕະຫຼາດ. ດັ່ງນັ້ນສວນກ້າຈະມີຂະໜາດໃຫຍ່ຂຶ້ນ ກັບຈຳນວນຂອງເບ້ຍໄມ້ທີ່ຕ້ອງການໃນແຕ່ລະປີ. ປົກກະຕິຈະມີອາຍຸປະມານ 3-5 ປີ, ມີຂະໜາດ 20x40 ຂຶ້ນໄປ ຮູບຮ່າງຂອງສວນກ້າເປັນແບບງ່າຍໆ. ມີໂຄງສ້າງເປັນໄມ້ເນື້ອແຂງ ແລະ ໄມ້ປ່ອງ, ເຊິ່ງເສົາເຮັດດ້ວຍໄມ້ແກນຫຼ້ອນ ແລະ ໂຄງຫຼັງຄາເຮັດດ້ວຍໄມ້ປ່ອງ (ຕ້ອງປ່ຽນໄມ້ທຸກໆ 3-5 ປີ), ຫຼັງຄາສາມາດມຸງດ້ວຍແສດຳ (50%, 70%) ໂຕະເຮັດດ້ວຍໄມ້ປ່ອງທັງໝົດ ແລະ ອາດຈະເຮັດຝາອ້ອມສວນກ້າ ຫຼື ບໍ່ເຮັດກໍ່ໄດ້, ສ່ວນພື້ນສວນກ້າຄວນປັບໃຫ້ພຽງມີການເຮັດຮ່ອງລະບາຍນ້ຳເພື່ອໃຫ້ລະບາຍນ້ຳໄດ້ດີຂຶ້ນ.



## ສວນກ້າແບບຊົ່ວຄາວ

ສວນກ້າແບບຊົ່ວຄາວເປັນສວນກ້າທີ່ສ້າງຂຶ້ນເພື່ອເກັບຮັກສາເບ້ຍໄມ້ຊົ່ວຄາວ ຫຼື ອາດໃຊ້ເປັນບ່ອນຜະລິດເບ້ຍໄມ້ໄດ້ ແຕ່ຕ້ອງໄດ້ມີການປັບປຸງທຸກປີ. ເຊິ່ງຈະມີອາຍຸການໃຊ້ງານ 1-2 ປີເທົ່ານັ້ນ. ວັດສະດຸທີ່ຈະນຳມາສ້າງບໍ່ຈຳເປັນຕ້ອງມີຄວາມທົນທານສູງ ເຊິ່ງເຮົາສາມາດຫາໄດ້ເອງເຊັ່ນ: ເສົາເຮັດດ້ວຍໄມ້ຈິງ ຫຼື ໄມ້ປ່ອງ, ໂຄງຫຼັງຄາເຮັດດ້ວຍໄມ້ປ່ອງ ແລະ ຫຼັງຄາສາມາດມຸງດ້ວຍໄມ້ປ່ອງຜ່າເປັນຕິ້ວ ສານລຽນສະຫຼັບຕິ້ວເວັ້ນຕິ້ວ ຫຼື ນຳໃຊ້ໃບໄມ້ຕ່າງໆມາມຸງເຊັ່ນ: ໃບພ້າວ, ໃບຕາວ ແລະ ອື່ນໆ ເຊິ່ງເຮົາຈະໃຫ້ແສງຜ່ານໄດ້ປະມານ 50% ເທົ່ານັ້ນ.



## ການຈັດລຽນຕຳແໜ່ງເບ້ຍໄມ້ພາຍໃນສວນກ້າ

ການຈັດລຽນຕົ້ນໄມ້ຢູ່ພາຍໃນສວນກ້າແມ່ນມີ 3 ແບບດ້ວຍກັນເຊັ່ນວ່າ: ການຈັດລຽນຢູ່ພື້ນດິນ, ການຈັດລຽນຢູ່ເທິງໂຕະ ແລະ ການຈັດລຽນແບບເກາະຫ້ອຍ.



**ກ. ການຈັດລຽນແບບເກາະຫ້ອຍ**

ການຈັດລຽນແບບຫ້ອຍ ຫຼື ເກາະ ສ່ວນໃຫຍ່ແມ່ນໃຊ້ພືດອີງອາໄສໂດຍສະເພາະເຊັ່ນ: ດອກເຜິ້ງ, ຜັກກູດບາງຊະນິດ ແລະ ອື່ນໆ. ເຊິ່ງພືດເຫຼົ່ານີ້ຕ້ອງການພື້ນທີ່ ແລະ ວັດສະດຸປູກທີ່ສາມາດລະບາຍອາກາດໄດ້ດີ ເຮັດໃຫ້ບໍ່ສາມາດຈັດລຽນໄວ້ເທິງໂຕະ ແລະ ພື້ນດິນໄດ້. ການຈັດລຽນແບບເກາະຫ້ອຍຈະໃຊ້ຂໍເກາະຕາມໄມ້ຂ້າວ ຫຼື ຮາວທີ່ກຽມໄວ້ລຽນເປັນແຖວຊື່ແຖວດຽວຫ່າງກັນ 10-20 ຊັງຕີແມັດ. ໂດຍໃຫ້ກະໂຖສູງຈາກໜ້າດິນປະມານ 1 ແມັດ ຂຶ້ນໄປ. ໝາຍເຫດ: ການຈັດລຽນແບບເກາະຫ້ອຍສາມາດໃຊ້ໃນການປະດັບອາຄານຕາມລະບຽງ, ປ່ອງຢ້ຽມ ແລະ ໜ້າເຮືອນເພື່ອເພີ່ມຄວາມສວຍງາມໃຫ້ແກ່ບ້ານເຮືອນອີກດ້ວຍ.



**ຂ. ການຈັດລຽນຢູ່ພື້ນດິນ**

ການຈັດລຽນຕົ້ນໄມ້ເທິງພື້ນດິນ ສ່ວນໃຫຍ່ແມ່ນໃຊ້ກັບໄມ້ຢືນຕົ້ນທີ່ມີຂະໜາດໃຫຍ່, ເບ້ຍໄມ້ ແລະ ໄມ້ປະດັບ ຫຼື ໄມ້ທຳມະຊາດທີ່ດູແລຮັກສາງ່າຍ ແລະ ທົນຕໍ່ພະຍາດ. ເຊິ່ງການຈັດລຽນເບົ້າແມ່ນຂຶ້ນກັບຂະໜາດຂອງເບົ້າເບ້ຍໄມ້ເອງເຊັ່ນ: ເບົ້າຕົ້ນໄມ້ຂະໜາດໃຫຍ່ ສູງ 1-3 ແມັດ (ໄມ້ປະດັບຂະໜາດໃຫຍ່) ສ່ວນໃຫຍ່ແມ່ນລຽນເປັນແຖວດ່ຽວຫ່າງກັນ 0.6-1 ແມັດ, ເບົ້າເບ້ຍໄມ້ຂະໜາດນ້ອຍສ່ວນໃຫຍ່ແມ່ນລຽນເປັນແຖວຊື່ຫຼາຍແຖວຕິດກັນ (ຂຶ້ນກັບຂະໜາດຂອງເບົ້າ) ການລຽນເບົ້າແຕ່ລະແຖວຖ້າແຖວທຳອິດມີຈຳນວນເບົ້າເທົ່າໃດ ແຖວຕໍ່ໄປຈົນຮອດແຖວສຸດ ທ້າຍຕ້ອງມີຈຳນວນເທົ່າກັນ. ທັງນີ້ກໍ່ເພື່ອໃຫ້ສະດວກໃນການຄິດໄລ່ຈຳນວນ ແລະ ງ່າຍຕໍ່ການບົວລະບັດຮັກສາ.
ໝາຍເຫດ: ການຈັດລຽນຢູ່ພື້ນດິນແມ່ນມັກເກີດມີພະຍາດ ແລະ ແມງໄມ້ລົບກວນໄດ້ງ່າຍເຊັ່ນ: ຫອຍທາກ, ພະຍາດເນົ່າເປື່ອຍ ແລະ ອື່ນໆ.



**ຄ. ການຈັດລຽນຢູ່ເທິງໂຕະ**

ການຈັດລຽນພືດຢູ່ເທິງໂຕະແມ່ນສາມາດໃຊ້ກັບພືດຫຼາຍປະເພດຫຼາຍຊະນິດເຊັ່ນ: ພືດອິງອາໄສ, ຜັກກູດ, ດອກເຜິ້ງ ແລະ ໄມ້ປະດັບອື່ນໆ. ເຊິ່ງພືດເຫຼົ່ານີ້ສ່ວນໃຫຍ່ເປັນພືດຫາຍາກ, ມີຄວາມສຳຄັນ ແລະ ຕ້ອງການໆດູແລຮັກສາເປັນພິເສດ. ໂດຍປົກກະຕິໂຕະມີຂະໜາດ ກ້ວາງ 80 ຊັງຕີແມັດ - 1 ແມັດ ແລະ ສູງແມ່ນ 80 ຊັງຕີແມັດ - 1 ແມັດ ແລະ ຍາວແມ່ນບໍ່ຈຳກັດ. ການລຽນກະໂຖເທິງໂຕະສ່ວນໃຫຍ່ແມ່ນຂຶ້ນກັບຂະໜາດຂອງກະໂຖ ແລະ ການລຽນແມ່ນເປັນແຖວຊື່ຫຼາຍແຖວຄ້າຍຄືກັບການຈັດລຽນຢູ່ພື້ນດິນ. ແຕ່ການລຽນເທິງໂຕະຈະສາມາດປ້ອງກັນການເກີດຂອງພະຍາດ ແລະ ແມງສັດຕູພືດໄດ້, ຊ່ວຍຖ່າຍເທອາກາດໄດ້ສະດວກດີ ແລະ ຍັງສະດວກໃນການກຳຈັດວັດສະພືດອີກດ້ວຍ.



ພິມທີ່: ໂຮງພິມ ສີສະຫວາດການພິມ  ນະຄອນຫຼວງວຽງຈັນ
ຈຳນວນພິມ: 4.000 ຫົວ

ຄູ່ມືຫົວນີ້ ໄດ້ຮັບການສະໜັບສະໜູນຈາກ:
ກອງທຶນການຮ່ວມມື ຂອງລະບົບນິເວດທີ່ສຳຄັນ

CRITICAL ECOSYSTEM PARTNERSHIP FUND

ຂໍສະແດງຄວາມຂອບໃຈ ທ່ານ Suzy Young ແລະ Jonathan Peereman ສຳລັບຄຳແນະນຳ ແລະ ທ່ານ ສິດ ບົຕະພອນ, ແວວ ດາລາວົງ ສຳລັບການກວດແກ້ໃນປຶ້ມຄູ່ມືຫົວນີ້.

ISBN 9791094357040
ສິ່ງຕີພິມນີ້ສາມາດດາວໂຫຼດຟຣີ ຈາກເວັບໄຊທ໌ ຂອງພວກເຮົາໄດ້
http://pha-tad-ke.com/english/publication.html

Pha Tad Ke Botanical Garden

© ສວນພຶກສາຊາດຜາຕັດແກ້ ແລະ ຜູ້ຂຽນ, 2016



ສິ່ງໃດທີ່ເຮົາເຮັດເພື່ອຕົນເອງ
ຈະຕາຍໄປກັບເຮົາພ້ອມ
ແຕ່ສິ່ງໃດທີ່ເຮົາເຮັດເພື່ອຜູ້ອື່ນ ແລະ ສັງຄົມນັ້ນ
ມັນຈະຍືນຍົງຢູ່ຊົ່ວນິລັນ

# ສວນພຶກສາຊາດ ຜາຕັດແກ້

ສວນພຶກສາຊາດຜາຕັດແກ້ ຕັ້ງຢູ່ແຄມແມ່ນ້ຳຂອງ ທີ່ຫຼວງພະບາງ ເປັນສວນພຶກສາຊາດແຫ່ງທຳອິດຂອງ ສປປ ລາວ ໂດຍມີຈຸດປະສົງເຕົ້າໂຮມເອົາພັນພືດທີ່ເກີດຢູ່ໃນທຸກໆພາກຂອງລາວ ເຊິ່ງຊຸມຊົນຊາວລາວ ເຄີຍນຳໃຊ້ ຫຼື ມີຄວາມຜູກພັນມາແຕ່ຊ້ານານມາປູກ ແລະ ປົກປັກຮັກສາໄວ້ໃຫ້ຄົນຮຸ່ນຫຼັງໄດ້ເຫັນ ແລະ ສຶກສາ ຄຽງຂ້າງກັບການປູກພັນພືດທີ່ມາຈາກແຫ່ງອື່ນ ເພື່ອເປັນການສ້າງສິ່ງເອື້ອອຳນວຍໃຫ້ແກ່ການຄົ້ນຄວ້າວິທະຍາສາດ, ອັນຈະເປັນສ່ວນປະກອບໃນການສຶກສາພຶກສາຊາດຂອງປະເທດລາວ ແລະ ຊີວະນາໆພັນຂອງໂລກອີກດ້ວຍ.

CRITICAL ECOSYSTEM PARTNERSHIP FUND

ຜາຕັດແກ້
Pha Tad Ke Botanical Garden